ຄະນະຜູ້ຈັດທຳ ບົດຮຽນພຣະຄັມພີພາສາລາວ

Copyright © 2004 by BAPTISTWAY PRESS®.
ສງວນລິກຂະສິດ

ອະນຸດຍາດໃຫ້ທາງຄຣິສຕະຈັກເຮັດກອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ. ຫ້າມ
ຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນໆ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ. ຖ້າຢາກຊາບ
ລາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas,
333 North Washington, Dallas, TX 75246-1798.

BAPTISTWAY PRESS® is registered in U.S. Patent and Trademark Office

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ ໄດ້ຄັດມາຈາກປື້ມພຣະຄັມພີຕາມທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ,
ແລະວັນທີຈົດທະບຽນສງວນລິຂະສິດຂອງປື້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ: ເດືອນ ມີນາ, 2004

BAPTISTWAY Management Team

Executive Director, Baptist General Convention of Texas: Charles Wade
Coordinator, Church Health and Growth Section: H. Lynn Eckeberger
Director, Bible Study/Discipleship Center: Dennis Parrott
Publishing consultant: Ross West, Positive Difference Communications

Language Materials Team

Bible Study Writer for Lessons 1-3
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Lessons 1-3
Phaisane Somsith, Grace Baptist Church, Dallas, Texas

Bible Study Writer for Lessons 4-6
Bounheng Phongpraphan, First Lao Baptist Church, Amarillo, Texas
Editor for Lessons 4-6
Phaisane Somsith, Grace Baptist Church, Dallas, Texas

Bible Study Writer for Lessons 8-10, Easter Lesson
Sidney Kahn, Saginaw Community Church, Fort Worth, Texas
Editor for Lessons 8-10, Easter Lesson
Phaisane Somsith, Grace Baptist Church, Dallas, Texas

Bible Study Writer for Lessons 7, 11-13
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lessons 7, 11-13
Phaisane Somsith, Grace Baptist Church, Dallas, Texas

Facilitator for the LAOTIAN TEAM
Joe Haag, Associate Director, Christian Life Commission, Baptist General Convention of Texas

Patty Lane, Director, Office of Intercultural Initiatives, Baptist General Convention of Texas
Nelda P. Williams, Facilitators Coordinator and Manager, Curriculum Development Office

# ບົດຮຽນທີ 1

# ເວລາທຸກສິ່ງຫາກບໍ່ເປັນໄປຕາມສົມຄວນ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ໂຢຊວຍ ບົດທີ 1

ຂໍ້ພຣະຄັມພີສຳລັບເບື້ອງຫລັງ: ໂຢຊວຍ ບົດທີ 1

ຈຸດສຳຄັນຂອງບົດຮຽນນີ້: ພຣະຊົງຮຽກຮ້ອງໃຫ້ມີຄວາມຮັບຜິດຊອບການປ່ຽນແປງ ໃນການປະພຶດປະຕິບັດດ້ວຍຄວາມກ້າຫານ, ຈົ່ງຄິດວ່າພຣະເຈົ້າຊົງສະຖິດຢູ່ນຳພວກເຮົາ

ຄຳຖາມເພື່ອສຳຣວດ: ທ່ານຮູ້ສຶກຢ່າງໃດ ກ່ຽວກັບການປ່ຽນແປງນີ້?

ຈຸດປະສົງຂອງບົດຮຽນ: ເພື່ອຊີ້ໃຫ້ເຫັນໃນແນວທາງທີ່ດີ ຂອງການປ່ຽນແປງອີງໃສ່ປະສົບການຂອງໂຢຊວຍ.

## ຄຳນຳ

ທ່ານຮູ້ສຶກຢ່າງໃດກ່ຽວກັບການປ່ຽນແປງນີ້? ພວກເຮົາຮັບເອົາການປ່ຽນແປງຕາມຫລາຍວິທີການແຕກຕ່າງກັນໄປ. ນາຍແພດແລະນັກຂຽນຕ່າງໆ ໄດ້ຂຽນບົດຊີ້ແຈງເປັນປື້ມນ້ອຍໆ ເພື່ອແນະແນວທາງ. ເຖິງວ່າຈະເປັນສມຸດນ້ອຍແຕ່ກໍມີຄວາມໝາຍຫລາຍໃນການປ່ຽນແປງແລະປະຕິບັດຕາມ. ຫລາຍຄົນບໍ່ຍອມເຊື່ອຟັງ ບໍ່ຍອມຢາກປ່ຽນແປງເພາະຢ້ານຈະເປັນຮ້າຍກວ່າເກົ່າ.

ເມື່ອບໍ່ດົນບໍ່ນານຜ່ານມາ ຂ້າພະເຈົ້າໄດ້ໂອ້ລົມກັບເພື່ອນຄົນນຶ່ງ ຊຶ່ງເຂົາມີປະສົບການຫລາຍໃນການປ່ຽນແປງ. ຊີວິດຂອງເຂົາກ້າວໜ້າ, ການເວົ້າຈາປ່ຽນແປງ, ການປະພຶດປະຕິບັດຖືກປັບປຸງໃຫ້ດີຂຶ້ນ, ການມີໝູ່ຄູ່ເພື່ອນຝູງກໍມີລະດັບທຸກຄົນ.

ປື້ມໂຢຊວຍ ໄດ້ບັນທຶກເຖິງການປ່ຽນແປງຊີວິດຂອງຄົນໆນຶ່ງ. ຊາວອິສຣາເອນໄດ້ປະເຊີນກັບການປ່ຽນແປງທີ່ຍິ່ງໃຫຍ່. ພຣະເຈົ້າໄດ້ປົດປ່ອຍພວກເຂົາໃຫ້ອອກຈາກການເປັນຂ້າທາດມາສູ່ອິສລະພາບ. ພຣະອົງໄດ້ນຳພາພວກເຂົາຜ່ານຜ່າປ່າກັນດານເປັນເວລາສີ່ສິບປີ. ການຕັດສິນຂອງພຣະເຈົ້າໄດ້ຖືກປະຕິບັດທຸກເວລາໃນຍຸກທີ່ຜ່ານມາ, ແລະບັດນີ້ ຊາວອິສຣາເອນກໍຈະໄດ້ປະສົບກັບການປ່ຽນແປງ ຄືອອກຈາກປ່າກັນດານເຂົ້າສູ່ແຜ່ນດິນຊົງສັນຍາ ຊຶ່ງເປັນແຜ່ນດິນທີ່ພຣະເຈົ້າຊົງສັນຍາໄວ້ແກ່ບັນພະບຸຣຸດຂອງພວກເຂົາ.

ໃນການປ່ຽນແປງໃຫມ່ນີ້ ຈຳເປັນຕ້ອງມີຜູ້ນຳທີ່ຈະພາປ່ຽນແປງ.

### ຄຳສັ່ງໃຫມ່ຂອງຜູ້ນຳຄົນໃຫມ່ (1:1-4)

ໜັງສືພິມແຕ່ລະສະບັບສ່ວນຫລາຍມັກຈະມີຊີວະປະວັດຫລືຂ່າວການເສັຍຊີວິດ. ບາງຂ່າວກໍສັ້ນບາງຂ່າວກໍຍາວ ບາງຂ່າວກໍມີຮູບພາບພ້ອມ. ມາເບິ່ງປະວັດອັນສັ້ນໆນີ້ເບິ່ງ: "ໂມເຊຜູ້ຮັບໃຊ້ຂອງອົງພຣະຜູ້ເປັນເຈົ້າ" (ຂໍ້ 1) ປໂຍກນີ້ເປັນປໂຍກທີ່ໃຫ້ກຽດທີ່ຊາວອິສຣາເອນບໍ່ເຄີຍຮ້ອງຜູ້ໃດມາກ່ອນ. ນາມນີ້ເປັນນາມທີ່ຄົນທັງຫລາຍຍົກຍ້ອງແລະໃຫ້ກຽດພຣະເຈົ້າ ແລະຍັງເປັນນາມແຫ່ງການເຊື່ອຟັງໃນທຸກໆຊີວິດ. ພຣະຄັມພີເດີມໃຊ້ປໂຍກນີ້ເລື້ອຍໆ ແຕ່ທີ່ໃຊ້ສຳລັບໂມເຊໃນປື້ມໂຢຊວຍນີ້ແລ້ວມີສິບສີ່ເທື່ອ.

ໂມເຊເປັນຜູ້ນຳອິສຣາເອນທີ່ບໍ່ເຄີຍພ່າຍແພ້ໃນສອງຍຸກທີ່ຜ່ານມາ. ຊາວອິສຣາເອນຍ້ອງຍໍລາວວ່າເປັນຜູ້ນຳທີ່ດີເລີດຊຶ່ງບໍ່ມີຜູ້ໃດເໝືອນ. (ພຣະບັນຍັດສອງ 34:10-12) ໂມເຊໄດ້ປະເຊີນໜ້າກັບກະສັດຟາຣະໂອໃນປະເທດອີຢີບເພື່ອສເນີຂໍ້ຕໍ່ຮອງ ແລ້ວພາຍຫລັງມາກໍໄດ້ປົດປ່ອຍຊາວອິສຣາເອນອອກຈາກການກັກກຸມຄຸມຂັງ. ລາວໄດ້ນຳພາພວກອິຣາເອນຜ່ານປ່າກັນດານ ແລະກໍໄດ້ຮັບໃຊ້ເໝືອນກັບວ່າເປັນວັດຖຸອຸປກອນຂອງພຣະເຈົ້າ ເພື່ອເອົານ້ຳແລະອາຫານມາໃຫ້ປະຊາຊົນທັງຫລາຍບໍຣິໂພກ. ໂມເຊໄດ້ຮັບຄຳແນະນຳຈາກພຣະເຈົ້າທີ່ພູເຂົາຊີນາຍເພື່ອສິດສອນພວກເຂົາ. ລາວໄດ້ກາຍເປັນຜູ້ເຜີຍພຣະຄຳຂອງພຣະເຈົ້າແກ່ຄົນອິສຣາເອນ ລາວໄດ້ແກ້ໄຂບັນຫາທັງເຜົ່າຊົນແລະແບບສ່ວນຕົວ. ໂມເຊແມ່ນຜູ້ນຳຜູ້ດຽວທີ່ຄົນທັງຫລາຍຮູ້ຈັກດີ. ດຽວນີ້ຜູ້ນຳຂອງພວກເຂົາໄດ້ເສັຍຊີວິດແລ້ວ. ພວກເຂົາຈະເຮັດແນວໃດ?

ອິສຣາເອນບໍ່ມີໂມເຊອີກແລ້ວແຕ່ພວກເຂົາຍັງມີພຣະເຈົ້າ. ພຣະເຈົ້າໄດ້ຊີ້ຕົວຂອງໂຢຊວຍເພື່ອໃຫ້ສຳເຣັດວຽກງານທີ່ໂມເຊກຳລັງກະທຳຢູ່. (ພຣະທັມຈົດບັນຊີ 27:12-23) ທີ່ຈິງແລ້ວໂຢຊວຍກໍໄດ້ຮັບໃຊ້ຄຽງຂ້າງໂມເຊຕລອດມາ. (ໂຢຊວຍ 1:1) ຜູ້ນຳມີການປ່ຽນແປງ ພວກເຮົາຄວນລະລຶກໄວ້ສເມີວ່າພຣະເຈົ້າຈະຊົງນຳພາການປ່ຽນແປງນັ້ນ. ພຣະເຈົ້າໄດ້ມອບໜ້າທີ່ໃຫ້ໂຢຊວຍໃນການຂ້າມແມ່ນ້ຳຈໍແດນ ແລະເຂົ້າໄປໃນດິນແດນການາອານ. (1:2-3) ແລະພຣະເຈົ້າກໍຢາກຈະໃຫ້ຄຳສັນຍາກາຍເປັນຈິງ ຈຶ່ງໄດ້ກ່າວແກ່ໂຢຊວຍວ່າ: "ຈົ່ງລຸກຂຶ້ນ ຂ້າມແມ່ນ້ຳຈໍແດນນີ້ໄປສູ່ດິນແດນໃຫມ່ທີ່ເຮົາຈະມອບໃຫ້ເຈົ້າ." ສ່ວນຂໍ້ທີ 4 ນັ້ນແມ່ນບົ່ງບອກເຖິງເຂດແດນທີ່ອິສຣາເອນຈະໃຊ້ເປັນອານາເຂດຂອງພວກເຂົາ.

<u>ການໜູນໃຈຜູ້ນຳໃຫມ່ (1:5-9)</u>

ການໜູນໃຈຂອງພຣະເຈົ້າທີ່ມີຕໍ່ໂຢຊວຍມີດັ່ງນີ້:

- ບໍ່ມີຜູ້ໃດຈະຕໍ່ສູ້ເຈົ້າໄດ້ຕລອດຊີວິດຂອງເຈົ້າ ຂໍ້ 5
- ເຮົາຢູ່ກັບໂມເຊສັນໃດ ເຮົາກໍຈະຢູ່ກັບເຈົ້າສັນນັ້ນ ຂໍ້ 5
- ເຮົາຈະບໍ່ປະຖິ້ມເຈົ້າເລີຍ ຂໍ້ 5
- ຈົ່ງເຂັ້ມແຂງ ແລະກ້າຫານເຖີດ ຂໍ້ 6
- ຈົ່ງກະທຳຕາມພຣະບັນຍັດທັງໝົດ ຊຶ່ງໂມເຊຜູ້ຮັບໃຊ້ຂອງເຮົາໄດ້ບັນຊາເຈົ້າໄວ້ ຂໍ້ 7
- ຢ່າໃຫ້ໜັງສືທັມມະບັນຍັດນີ້ຫ່າງເຫີນໄປຈາກປາກຂອງເຈົ້າ ຂໍ້ 8
- ບໍ່ວ່າເຈົ້າຈະຢູ່ທີ່ໃດ ພຣະເຢໂຮວາພຣະເຈົ້າຂອງເຈົ້າຊົງສະຖິດກັບເຈົ້າ ຂໍ້ 9

ຄຳເວົ້າທັງໝົດນີ້ ກໍເປັນຄຳເວົ້າທີ່ໂມເຊໄດ້ກ່າວແກ່ໂຢຊວຍສມັຍລາວຍັງມີຊີວິດຢູ່. ຄຳທີ່ເນັ້ນໜັກທີ່ສຸດນັ້ນກໍແມ່ນ ຈົ່ງເຂັ້ມແຂງແລະກ້າຫານເຖີດ. ໃຫ້ເບິ່ງໃນສເລີຍພຣະທັມບັນຍັດ 31:6-7

ຖ້ອຍຄຳນີ້ຍັງເປັນຄຳໜູນໃຈໃຫ້ແກ່ຜູ້ທີ່ມີບັນຫາໃນການປ່ຽນແປງນີ້ ເຊັ່ນການເຂົ້າມາເປັນຄຣິສຕຽນໃຫມ່ ຮ່ວມກັບສັງຄົມໃຫມ່ ການປາກເວົ້າ ແລະການກະທຳແບບໃຫມ່. ຢ່າງໃດກໍຕາມ ພຣະເຈົ້າຊົງສັນຍາວ່າຈະຢູ່ກັບພວກເຮົາແລະຈະຊົດຊ່ວຍພວກເຮົາ. ຜົນກຳໄລທັງໝົດຈະເປັນຂອງພວກເຮົາ ໃນເມື່ອເຮົາຕິດຕາມການຊີ້ນຳຂອງພຣະອົງ.

<u>ໂຢຊວຍເຊື່ອຟັງພຣະເຈົ້າ (1:10-15)</u>

ທ່ານເຄີຍໄດ້ຍິນຄຳເລົ່າຕໍ່ກັນມາກ່ຽວກັບຄຳສັ່ງທີ່ພຣະເຈົ້າສັ່ງອັບຣາຮາມຫລືບໍ່? ລາວກ້າທີ່ຈະປະເຊີນກັບການປ່ຽນແປງຢ່າງຍິ່ງໃຫຍ່ໃນຊີວິດຂອງລາວ, ທັ້ງໆທີ່ຕາບໍ່ເຫັນ. (ປຖກ 12:1-4) ທ່ານເຄີຍໄດ້ຟັງເຣື່ອງຂອງໂມເຊກ່ຽວການປົກຄອງທີ່ພຣະເຈົ້າໄດ້ໃຫ້ຄຳແນະນຳຫລືບໍ່? ລາວກ້າທີ່ຈະປ່ຽນແປງແບບແຜນການປົກຄອງ (ສເລີຍພຣະບັນຍັດ 1:15-16)

ຄົນຮີບບຣູໃຊ້ປໂຍກທີ່ວ່າ "ສາມວັນ" ພາຍໃນສາມວັນທ່ານທັງຫລາຍຈະຕ້ອງຍົກຂ້າມແມ່ນ້ຳຈໍແດນ. ຄຳເວົ້ານີ້ອາດຈະບໍ່ເປັນເຫມືອນຄຳວ່າອີກ 10 ນາທີ ຫລືອີກ 5 ນາທີຂອງຄົນອະເມຣິກາດອກ. ຕາມຄວາມຈິງແລ້ວ ການຍ່າງຂ້າມແມ່ນ້ຳຈໍແດນນັ້ນຕ້ອງໃຊ້ເວລາອາທິດນຶ່ງ.

ໃນຂໍ້ທີ 11 ນີ້ຍັງໄດ້ສັງລວມມາເຖິງດິນແດນອີກຢູ່ ແລະຍັງກ່າວອີກວ່າພຣະເຈົ້າໄດ້ມອບດິນແດນແຫ່ງນີ້ໃຫ້ແກ່ທ່ານໄປຍຶດຄອງເຫມືອນກັບຂໍ້ 6 ທີ່ໄດ້ກ່າວເຖິງດິນແດນແຫ່ງມໍຣະດົກ.

ຂໍ້ 12-15 ແມ່ນຂໍ້ແນະນຳພິເສດສຳລັບຄົນສອງເຜົ່າເຄິ່ງທີ່ຈະຕັ້ງດິນແດນຢູ່ທາງຟາກຕາເວັນອອກຂອງແມ່ນ້ຳຈໍແດນ. ພວກເຂົາທັງຫລາຍກໍເຫັນດີເຫັນພ້ອມປະຕິບັດຕາມທີ່ໂຢຊວຍສັ່ງມາທຸກປະການ. ການຕົກລົງນີ້ກໍແມ່ນການຮັກສາຄວາມເປັນອັນນຶ່ງອັນດຽວກັນໄວ້ສຳລັບທຸກໆເຜົ່າ ທີ່ເດີນທາງມາດ້ວຍກັນແລະມີຈຸດຫມາຍປາຍທາງຢ່າງດຽວກັນ.

<u>ປະຊາຊົນທັງຫລາຍຮັບຮູ້ຜູ້ນຳໃຫມ່ຂອງພວກເຂົາ (1:16-18)</u>

"ສິ່ງສາລະພັດຊຶ່ງທ່ານບັນຊາແກ່ພວກເຮົາ ເຮົາຈະກະທຳຕາມທ່ານ ຈະໃຫ້ພວກເຮົາໄປໃນທີ່ໃດໆເຮົາຈະໄປ" (ຂໍ້ 16) "ເຮົາເຊື່ອຟັງໂມເຊໃນເຣື່ອງທັງປວງຢ່າງໃດ ເຮົາຈະເຊື່ອຟັງທ່ານຢ່າງນັ້ນ" (ຂໍ້ 17) ປະຊາຊົນອິສຣາເອນທັງຫລາຍກໍພາກັນຮັບຮອງຜູ້ນຳໃຫມ່ດ້ວຍຄວາມອົບອຸ່ນ ແລະຢ່າງບໍ່ມີເງື່ອນໄຂໃດໆທັງສິ້ນ. ຕາມຄວາມຄິດຄວາມເຫັນຂອງນັກສຶກສາແລ້ວມີຄວາມເຫັນຢູ່ສອງທາງ. ທາງນຶ່ງຄິດວ່າໂຢຊວຍຢັ້ງຢືນວ່າເປັນຜູ້ນຳເຜົ່າໃດເຜົ່ານຶ່ງ. ທາງນຶ່ງກໍຄິດວ່າໂຢຊວຍເປັນຜູ້ນຳທຸກໆເຜົ່າ. ຢ່າງໃດກໍຕາມ ກ່ອນຈະຈົບບົດຮຽນໃນວັນນີ້ ແມ່ນຢາກໃຫ້ພີ່ນ້ອງທັງຫລາຍເຂົ້າໃຈວ່າ ຫລັງຈາກທີ່ໂມເຊເສັຍຊີວິດໄປແລ້ວ ພຣະຄຳຂອງພຣະເຈົ້າກໍໄດ້ມາເຖິງໂຢຊວຍ ແລະກໍໄດ້ກາຍເປັນຜູ້ນຳຜູ້ໃຫມ່ຂອງອິສຣາເອນ.

<u>ຄຳຖາມ</u>

1. ທ່ານເຄີຍມີປະສົບການໃນການສູນເສັຍຜູ້ນຳບໍ່? (ເສັຍຊີວິດ, ອອກກິນເບັ້ຍບຳນານ......)
   ແມ່ນໃຜທີ່ທ່ານຄິດວ່າຈະຮັບພາຣະຫນ້າທີ່ຕໍ່ ຫລືທ່ານຄິດເຫັນຢ່າງໃດໃນເວລານີ້?

2. ໃນພຣະຄັມພີເດີມ ທ່ານເຫັນຕອນໃດອີກແດ່ທີ່ໃນການສູນເສັຍຜູ້ນຳຢ່າງຍິ່ງໃຫຍ່? (ເສັຍຊີວິດ)

3. ແມ່ນຫຍັງທີ່ຄ້າຍຄື ຫລືກົງກັນຂ້າມກັນໃນປະສົບການຂອງໂຢຊວຍບົດທີ 1 ແລະສາວົກຂອງພຣະເຢຊູເວລາພຣະອົງຊົງສິ້ນພຣະຊົນ?

4. ຖ້າພຣະເຈົ້າຫາກບັນຊາທ່ານໃຫ້ມີການປ່ຽນແປງ ທ່ານຄິດວ່າຊີວິດຂອງທ່ານຈະເປັນຢ່າງໃດ?

5. ບົດຮຽນໃນວັນນີ້ ສອນທ່ານຢ່າງໃດແດ່?

ສຈ. ບຸນໂຮມ ພົມມະຈັນ

## <u>ບົດຮຽນທີ ໒</u>
## <u>ພຣະເຈົ້າແລະຄົນທີ່ມີຈຸດອ່ອນ</u>

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ໂຢຊວຍ ໒:1-14; 6:໒໒-໒5

<u>ຂໍ້ພຣະຄັມພີສຳລັບເບື້ອງຫລັງ:</u> ໂຢຊວຍ ໒:1-14; 5:13--6:໒7

<u>ຈຸດສຳຄັນຂອງບົດຮຽນນີ້:</u> ພຣະເຈົ້າໃຊ້ຄົນທີ່ມີຈຸດອ່ອນ ແລະຜູ້ທີ່ຄົນອື່ນເຫັນວ່າຕ່ຳຕ້ອຍ

<u>ຄຳຖາມເພື່ອສຳຣວດ</u>: ແມ່ນຫຍັງທີ່ເຮັດໃຫ້ພຣະເຈົ້າຊົງຢາກໃຊ້ຄົນທີ່ມີຈຸດອ່ອນ ແລະຖືກຄົນອື່ນເຫັນວ່າຕ່ຳຕ້ອຍສຳລັບພວກເຂົາ?

<u>ຈຸດປະສົງຂອງບົດຮຽນ:</u> ເພື່ອຊີ້ໃຫ້ຮູ້ເຖິງການພົວພັນຊີວິດຂອງນາງຣາຮາບໃນພຣະຄັມພີ ແລະຊີວິດທຸກວັນນີ້.

### <u>ຄຳນຳ</u>

ນາງຄຳມາ ເປັນຜູ້ຍິງທີ່ມີຮູບໂສມໂນມພັນສົດສວຍງົດງາມ ບໍ່ວ່າຈະໄປມາທາງໃດຜູ້ຊາຍທັງນ້ອຍແລະໃຫຍ່ ທັງຮັ່ງມີແລະທຸກຍາກຕ່າງກໍບໍ່ຍອມລົດລະສາຍຕາໄປເສັຍເປົ່າໆ. ລາວມີພອນສວັນທາງຮ້ອງເພງເປັນພິເສດແຕ່ລາວກໍບໍ່ຍອມໃຊ້. ໃນທີ່ສຸດລາວກໍຕັດສິນໃຈທີ່ຜິດຄືແຕ່ງງານກັບຊາຍທີ່ເປັນຜູ້ຂາຍຄົນ, ແລະແລ້ວໃນທີ່ສຸດນາງກໍໄດ້ຖືກຂາຍອີກ.

ລາວຖິ້ມຊີວິດຂອງລາວດ້ວຍການບໍ່ຫ່ວງບໍ່ໃຍກັບຊີວິດເປັນເວລາສິບກວ່າປີ. ຕໍ່ມາລາວໄດ້ມາພົບກັບອົງພຣະເຢຊູໂດຍເພື່ອນຂອງລາວເປັນຜູ້ຊັກນຳ. ໃນທີ່ສຸດລາວກໍໄດ້ສຶກສາຄົ້ນຄວ້າແລະກໍໄດ້ກັບກາຍມາເປັນຜູ້ທີ່ພຣະເຈົ້າຊົງໃຊ້ໄດ້. ລາວຮັກພຣະເຈົ້າແລະໄດ້ມອບຊີວິດໃຫ້ກັບພຣະເຈົ້າ ລາວເຮັດວຽກໃຫ້ກັບພຣະເຈົ້າໂດຍບໍ່ມີຄຳວ່າເມື່ອຍ ແລະບໍ່ມີຄຳວ່າບໍ່ມີເວລາ.

ປຶ້ມໂຢຊວຍ ໄດ້ເລົ່າເຖິງເຣື່ອງຂອງຍິງອີກຄົນນຶ່ງ, ຊຶ່ງນາງຄົນນີ້ເປັນຜູ້ຊ່ວຍຄົນອິສຣາເອນໃນເວລາເຂົ້າຍຶດຄອງດິນແດນການາອານ. ພຣະເຈົ້າຊົງໃຊ້ນາງເຖິງແມ່ນວ່ານາງຈະເປັນຄົນມີຈຸດອ່ອນກໍຕາມແລະພຣະເຈົ້າກໍຍັງໃຊ້ພວກເຮົາ ເຖິງແມ່ນວ່າພວກເຮົາຈະມີຈຸດອ່ອນກໍຕາມ.

### <u>ການຊ່ວຍເຫລືອຂອງຣາຫັບຕໍ່ນັກສືບຄົນອິສຣາເອນ (໒:1-3)</u>

ການສົ່ງນັກສືບອອກໄປຂອງຄົນເຮັບເຣີ ບໍ່ໄດ້ສະແດງອອກເຖິງການຂາດຄວາມເຊື່ອແຕ່ຢ່າງໃດ. ການທີ່ສົ່ງນັກສືບອອກໄປນີ້ ກໍແມ່ນເພື່ອສືບເບິ່ງທົ່ວແຜ່ນດິນ ແລະ ການສົ່ງໄປນີ້ພວກນັກສືບກໍໄດ້ເລືອກໄປທີ່ເຮືອນຂອງນາງໂສເພນີ (໒:1) ຄົງຈະຄິດວ່າເປັນບ່ອນທີ່ຜູ້ຊາຍເຂົ້າໆອອກໆ ແລະຄົງຈະບໍ່ມີຜູ້ໃດສົງສັຍ ແລະການຫລົບລີ້ກໍຄົງຈະສະດວກດີ.

ຣາຫັບດຳເນີນຢູ່ໃນສັງຄົມທີ່ຕ່ຳ ອຶດໆຢາກໆ ທຸກໆຍາກໆ ບ້ານຂອງລາວກໍຢູ່ໃກ້ໆກັບຊາຍແດນ. ຜູ້ຄົນທີ່ມີກຽດມັກເບິ່ງລາວຕ່ຳ ເຫັນລາວເປັນຂອງຫລິ້ນ. ການປົກຄອງດິນແດນການາອານບໍ່ເຄີຍຖືກປັບປຸງເຫມືອນດິນແດນເມໂຊໂປຕາເມັຽ ແລະອີຢີບກະທຳກັນ. ພວກເຂົາປົກຄອງເຂດຂອງໃຜຂອງລາວ, ກະສັດຂອງໃຜລາວ. ກະສັດເຢຣີໂກ (໒:໒) ຖືກແຕ່ງຕັ້ງຂຶ້ນມາໃຫ້ຮັກສາເຂດນັ້ນໂດຍສະເພາະ. ໄດ້ມີຄົນມາທູນວ່າ ມີຊາຍອິສຣາເອນບາງຄົນເຂົ້າມາໃນດິນແດນຂອງພວກເຮົາເພື່ອສອດແນມເບິ່ງດິນແດນ ແລະຣາຫັບໄດ້ຊຸກ

ເຊື່ອງພວກເຂົາໄວ້.

<u>ການປົກປ້ອງສອດແນມໂດຍນາງຣາຫັບ (2:4-7 )</u>

ຣາຫັບໄດ້ຕອບບໍ່ຮຽງບ່າຍຕໍ່ຜູ້ປົກຄອງທ້ອງຖິ່ນ. ລາວບອກວ່າລາວໄດ້ເຫັນແລະພວກເຂົາກໍໄດ້ອອກໄປແລ້ວກ່ອນຈະປິດປະຕູເມືອງໃກ້ຕາເວັນຈະຕົກດິນລາວເຮັດຢ່າງນີ້ກໍເພື່ອປົກປ້ອງຜູ້ສອດແນມອິສຣາເອນ. ແລະລາວກໍຍັງບອກອີກວ່າ ຈົ່ງຕາມພວກເຂົາໄປໄວໆ ເພື່ອຈະໄດ້ຕາມທັນພວກເຂົາ. ມາເຖິງຕອນນີ້ ເຮົາຈະເຫັນວ່າເມືອງເຢຣີໂກມີກຳແພງອ້ອມຮອບຢູ່. ການປິດປະຕູເມືອງກໍແມ່ນການຮັກສາຄວາມປອດພັຍຂອງປະຊາຊົນ. ຊາວການາອານໄດ້ຄົ້ນຫາເປັນບາງບ່ອນແຕ່ກໍບໍ່ພົບ.

ພຣະຄັມພີເດີມໄດ້ກ່າວເຖິງຕົ້ນປ່ານ ເພາະຕົ້ນປ່ານເປັນສິ່ງສຳຄັນຫລາຍໃນການທຳເຄື່ອງນຸ່ງຫົ່ມ. ພວກເຮົາຈະບໍ່ກ່າວຫຍັງຫລາຍກ່ຽວກັບຜ້າປ່ານ. ແຕ່ເຮົາຈະມາກ່າວເຖິງການກະທຳຂອງຣາຫັບ ເພາະວ່າລາວໄດ້ຫລອກລວງ ມີຜູ້ໃດສາມາດຮູ້ໄດ້ຫລືບໍ່ວ່າເປັນຫຍັງລາວຈຶ່ງໃຊ້ຄວາມຫລອກລວງ? ນາງອາດຈະຄິດວ່າ ຖ້າທະຫານຂອງກະສັດແຫ່ງເຢຣີໂກພົບເຫັນພວກເຂົາ ແນ່ນອນພວກເຂົາຈະຕ້ອງຖືກຂ້າແນ່ນອນ. ການຫລອກລວງຫລືຕົວະຕໍ່ກະສັດເປັນການດີທີ່ສຸດສຳລັບເວລານັ້ນ.

<u>ຣາຫັບຕົກລົງກັບພວກນັກສືບສອດແນມ (2:8-14)</u>

ເວລາທະຫານຂອງກະສັດອອກໄປແລ້ວ, ນາງຣາຫັບກໍຂຶ້ນໄປຫາພວກນັກສືບຢູ່ເທິງຫລັງຄາ ທີ່ນາງໄດ້ປົກປ້ອງພວກເຂົາໄວ້. ນາງໄດ້ກ່າວແກ່ພວກເຂົາວ່າ ຜູ້ຂ້າຮູ້ວ່າພຣະເຈົ້າໄດ້ປະທານຜືນແຜ່ນດິນນີ້ໃຫ້ແກ່ພວກທ່ານ. ແລະນາງກໍໄດ້ກ່າວເຖິງຄວາມເຊື່ອຂອງຕົວເອງ (2:9-11) ຫລັງຈາກນັ້ນນາງກໍໄດ້ຮຽກຮ້ອງແກ່ພວກນັກສືບວ່າ ຂໍທ່ານຈົ່ງເມດຕາ ແລະໄວ້ຊີວິດແກ່ຄອບຄົວແລະຍາດພີ່ນ້ອງຂອງນາງ (2:12-13) ພວກນັກສືບກໍພາກັນຮັບຮອງ. (2:14) ຄຳວ່າເມດຕາ ເປັນຄຳນຶ່ງທີ່ມັກໃຊ້ໃນພຣະຄັມພີເດີມແລະຄຳວ່າພວກເຈົ້າຈົ່ງ "ສາບານ" ແມ່ນແປຄວາມຫມາຍອອກມາແຕກຕ່າງກັນໄປເຊັ່ນ: ສັດຊື່ໃນຄວາມຮັກ, ຫມັ້ນຄົງ, ກະຣຸນາ, ພຣະຄຸນ ແລະສັດຊື່ໃນຄວາມເຊື່ອ.(2:12) ຖ້າຈະເວົ້າແລ້ວແມ່ນການສາບານພຣະລັກສະນະຂອງພຣະເຈົ້າທີ່ມີຄວາມສັມພັນແບບພິເສດ.

ຣາຫັບກ່າວວ່າ ຊາວການາອານພາກັນຫວັ່ນວິຕົກ ຢ້ານເສັຍແຜ່ນດິນໃຫ້ແກ່ອິສຣາເອນ ຫລືພຣະເຈົ້າຂອງພວກເຂົາ. ເຫດການຕໍ່ມາ ກໍຄືວ່າພວກເຂົາເຄີຍໄດ້ຍິນເຖິງການອັສຈັນທີ່ພຣະເຈົ້າຂອງຊາວອິສຣາເອັນໄດ້ກະທຳທີ່ແມ່ນ້ຳຈໍແດນ. ບໍ່ພຽງແຕ່ທໍ່ນັ້ນ ພວກເຂົາຍັງໄດ້ຍິນເຖິງຊັຍຊະນະທີ່ພຣະເຈົ້າໄດ້ຊ່ວຍໃຫ້ໂມເຊປາບກະສັດທີ່ແຂງແກ່ນ ແລະຫືວແຂງໄດ້ ແລະຍັງໄດ້ຂ້າທະຫານຂອງເຂົາໄດ້ຢ່າງມາກມາຍ. ນາງຣາຫັບຍັງໄດ້ຊ່ວຍບອກທາງອອກຈາກເມືອງໃຫ້ແກ່ນັກສືບດ້ວຍຄວາມປອດພັຍ. ແລ້ວພວກນັກສືບກໍກັບໄປສະຖານທີ່ຢູ່ຂອງໂຢຊວຍ ແລະລາຍງານຂ່າວດີຕ່າງໆ.

<u>ການນຳນາງຣາຫັບແລະຄອບຄົວໂດຍນັກສືບ (6:22-25)</u>

ໂຢຊວຍນຳພາຄົນອິສຣາເອນຂ້າມແມ່ນ້ຳຈໍແດນ (ບົດ3 ແລະ 4) ລາວຍັງໄດ້ແນະນຳການທຳລາຍແລະການຮັກສາ ວ່າຈະທຳລາຍອັນໃດແດ່ ແລະຈະຮັກສາອັນໃດແດ່. ຄອບຄົວທຸກໆຄົນແລະວັດຖຸສິ່ງຂອງທຸກຢ່າງຂອງນາງຣາຫັບໃຫ້ຍົກຍ້າຍມາຢູ່ນອກຄ້າຍຂອງອິສຣາເອນ. (6:17-23)

ຂໍ້ 24 ພຣະເຈົ້າບໍ່ໄດ້ອະນຸຍາດໃຫ້ຊາວອິສຣາເອນເອົາສິ່ງຂອງອັນໃດເລີຍ ແຕ່ໃຫ້ເອົາມາລວມໄວ້ໃນ

ຄັງຂອງພຣະເຈົ້າ. ພຣະອົງໄດ້ໃຫ້ຄວາມເຊື່ອຖືແກ່ອິສຣາເອນໃນການຮັບຊັຍຊະນະນີ້. ອີກອັນນຶ່ງການຍ້ອງຍໍຊົມເຊີຍນາງຣາຫັບໃນພຣະທັມຄຳພີໃຫມ່ໄດ້ບັນທຶກໄວ້. ຢາໂກໂບ ບົດ2:25 ໄດ້ຍົກເອົານາງມາເປັນຕົວຢ່າງໃນເລື້ອງການຊ່ວຍເຫລືອນັກສືບອິສຣາເອນ. ຕາມທັມດາແລ້ວພຣະຄັມພີຈະຊົມເຊີຍຜູ້ຍິງບາງຄົນເທົ່ານັ້ນ ຊື່ງນາງຣາຫັບກໍເປັນຜູ້ນຶ່ງຊື່ງມັດທາຍໄດ້ບັນທຶກໄວ້ໃນ ມທ. 1:1-16. ພຣະເຈົ້າໄດ້ຍິນດີຕ້ອນຮັບເອົາຄອບຄົວຂອງຣາຫັບໃຫ້ເຂົ້າສູ່ຄວາມລອດພົ້ນ ໂດຍຢູ່ນອກຄ້າຍຂອງອິສຣາເອນ.

ບາງຄົນກໍຍັງບໍ່ຍອມເຂົ້າໃຈເຖິງການປະທານຄວາມລອດພົ້ນຂອງພຣະເຈົ້າ ວ່າພຣະເຈົ້າຊົງໄຖ່ໄດ້ຢ່າງໃດ. ສ່ວນຂ້າພະເຈົ້າແລ້ວ ຂ້າພະເຈົ້າມີຄວາມຊາບຊື້ງຫລາຍໃນຄວາມເມດຕາ ແລະການຊົງໄຖ່ຂອງພຣະອົງ. ພຣະອົງໄດ້ທຳລາຍ ມ່ານທີ່ກີດກັ້ນອອກ ແລ້ວຮີບມາຊ່ວຍຂ້າພະເຈົ້າ. ພຣະເຈົ້າກໍຍັງເຮັດຢ່າງນີ້ເຊັ່ນດຽວກັນກັບທຸກຄົນ. ບໍ່ວ່າທ່ານຈະເປັນຢ່າງໃດມາກໍຕາມພຣະເຈົ້າຊົງເຫນືອສິ່ງເຫລົ່ານັ້ນ.

<u>ຄຳຖາມ</u>

1. ໂຢຊວຍສົ່ງນັກສືບສອດແນມສອງຄົນ ໄປສອດແນມກໍເພື່ອຮັກສາຊົນຊາດອິສຣາເອນ. ມີອີກວິທີໃດແດ່ທີ່ພຣະເຈົ້າຊົງໃຊ້ໃນທຸກວັນນີ້ ເພື່ອຮັກສາຄົນຂອງພຣະເຈົ້າ?

2. ທ່ານຄິດຢ່າງໃດກ່ຽວກັບການຫລອກລວງທະຫານຂອງນາງຣາຫັບ? ຖ້າເປັນຕົວທ່ານໆຈະຕັດສິນໃຈຢ່າງໃດ ເມື່ອປະເຊີນກັບບັນຫາຢ່າງນີ້?

3. ຄົນປະເພດໃດແດ່ ທີ່ພຣະເຈົ້າຊົງຈະໃຊ້ໄດ້ໃນວຽກງານຂອງພຣະອົງ?

4. ທ່ານຈະໃຫ້ນາງຣາຫັບເປັນຕົວຢ່າງແບບໃດ? (ແນວຄິດຂອງທ່ານເອງ)

5. ຍິງສາວຊາວຊະມາເຣັຽ ເປັນຕົວຢ່າງແບບໃດ ຖ້າສົມທຽບກັບນາງຣາຫັບ?

ສຈ. ບຸນໂຮມ ພົມມະຈັນ

# <u>ບົດຮຽນທີ 3</u>
# <u>ເວລາມາເຖິງຝັ່ງແມ່ນ້ຳ</u>

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ໂຢຊວຍ 3:7-17; 4:15-24
<u>ຂໍ້ພຣະຄັມພີສຳລັບເບື້ອງຫລັງ:</u> ໂຢຊວຍ ບົດທີ 3 ແລະ 4
<u>ຈຸດສຳຄັນຂອງບົດຮຽນນີ້:</u> ການວາງໃຈໃນພຣະເຈົ້າ ຈະເຮັດໃຫ້ບັນລຸເປົ້າໝາຍໄດ້ ແມ່ນວ່າບັນຫາຈະໃຫຍ່ຫລວງປານໃດກໍຕາມ.
<u>ຄຳຖາມເພື່ອສຳຣວດ</u>: ເວລາທ່ານໄດ້ມາເຖິງບັນຫາອັນໃຫຍ່ຫລວງ ເຫັນວ່າການແກ້ໄຂນັ້ນຄົງຈະເປັນໄປບໍ່ໄດ້ ແລະ ການແກ້ໄຂກໍເຫັນວ່າເປົ່າປໂຍດ ທ່ານຈະເຮັດຢ່າງໃດ?
<u>ຈຸດປະສົງຂອງບົດຮຽນ:</u> ເພື່ອພິຈາຣະນາໃນການທີ່ຂ້າພະເຈົ້າໄດ້ສຶກສາກ່ຽວກັບພຣະເຈົ້າ ໃນເວລາບັນຫາອັນໃຫຍ່ຫລວງກຳລັງຄຶບຄານຢູ່.

## <u>ຄຳນຳ</u>

ຫລາຍປີຜ່ານມາ, ຂ້າພະເຈົ້າແລະພັລຍາໄດ້ພາກັນໄປພັກຜ່ອນທີ່ເກາະ ໄວກີກີ້ ຊຶ່ງເປັນເກາະທີ່ມີຄວາມສວຍສົດງົດງາມ ແລະມີຜູ້ຄົນໄປທ່ອງທ່ຽວຫລາຍ. ພວກເຮົາກໍພາກັນເລາະທ່ຽວຫລິ້ນດ້ວຍການຍ່າງດ້ວຍຕີນເປົ່າ ເພື່ອຊອກຫາບ່ອນງຽບໆພັກຜ່ອນ ແຕ່ກໍບໍ່ພົບ. ພວກເຮົາຈຶ່ງຊວນກັນຂັບຣົດເລາະລຽບແຄມຊາຍທະເລນັ້ນ. ໃນທີ່ສຸດພວກເຮົາກໍພົບສະຖານທີ່ງພວກເຮົາມັກ. ພວກເຮົາພາກັນອອກຈາກຣົດແລ້ວກໍລົງໄປຫານ້ຳ, ອຸນຫະພູມຂອງນ້ຳກໍເຢັນດີ, ພວກເຮົາຈຶ່ງຖືເອົາທີ່ນັ້ນເປັນທີ່ຈັ້ງ.

ບໍ່ດົນບໍ່ນານ ຟອງນ້ຳໃຫຍ່ ກໍຈ້າວເຂົ້າມາຫາຝັ່ງຢ່າງວ່ອງໄວ. ພວກເຮົາບໍ່ມີທາງຫລີກ, ແຕ່ລະຄົນພວກເຮົາຖືກຟອງນ້ຳກືນກິນ, ບໍ່ຮູ້ວ່າໃຜເປັນໃຜ. ຫລັງຈາກຟອງນ້ຳຍຸບລົງໄປແລ້ວ ຂ້າພະເຈົ້າກໍຟ້າວແລ່ນມາຫາພັລຍາຂອງຂ້າພະເຈົ້າ ໂອບກອດລາວໄວ້ແນບອົກ ປາກົດວ່າຮ່າງກາຍຂອງລາວສັ່ນ ແລະຕາຂອງລາວກໍແດງ. ຕັ້ງແຕ່ມື້ນັ້ນມາລາວບໍ່ມີຄວາມສຸກເລີຍໃນເວລາໄປທ່ຽວຝັ່ງທະເລ.

ພຣະເຈົ້າໄດ້ໃຫ້ຄຳສັນຍາແກ່ໂຢຊວຍວ່າຈະຍົກດິນແດນການາອານໃຫ້ແກ່ຊາວອິສຣາເອນ. ເວລານີ້ຊາວອິສຣາເອນໄດ້ມາປາກົດຢູ່ລະຫວ່າງຝັ່ງຂອງແມ່ນ້ຳຈໍແດນ ແລະດິນແດນຊົງສັນຍາ. ພວກເຂົາບໍ່ຮູ້ວ່າຈະເດີນທາງໄປຢ່າງໃດ, ພວກເຂົາມີຄວາມຢ້ານກົວ.

ໃນບົດຮຽນວັນນີ້ ພວກເຮົາຈະມາສຶກສາເຖິງການທຳງານຂອງພຣະເຈົ້າ ວ່າພຣະອົງຈະຊົງນຳໃນການຂ້າມແມ່ນນ້ຳຈໍແດນຢ່າງໃດ.

### <u>ຮັບເອົາຄຳແນະນຳຂອງພຣະເຈົ້າ (3:7-13)</u>

ຫລັງຈາກການຈັດຕຽມທຸກຢ່າງເປັນທີ່ຮຽບຮ້ອຍແລ້ວ ການລົງມືປະຕິບັດກໍໄດ້ເລີ້ມຂຶ້ນທັນທີ. (ໂຢຊວຍ 3:16) ພຣະເຈົ້າຊົງເຕືອນໂຢຊວຍໃນເວລາຂ້າມ (3:7-8) ແລ້ວໂຢຊວຍກໍກ່າວຄຳສັ່ງຂອງພຣະເຈົ້າໃຫ້ປະຊາຊົນຟັງ. (3:9-13)

ການຂ້າມແມ່ນ້ຳຈໍແດນແມ່ນເລີ້ມຕົ້ນແລ້ວຕັ້ງແຕ່ຂໍ້ທີ 5 ເມື່ອປະຊາຊົນທັງຫລາຍກ່າວວ່າ ເຮົາຈະຕິດຕາມທ່ານ. ພວກເຂົາເດີນຕາມຫີບພັນທະສັນຍາ, ຫີບນັ້ນເປັນຮູບສີ່ຫລ່ຽມຫຸ້ມດ້ວຍທອງຄຳບໍຣິສຸດທັງທາງໃນແລະທາງນອກ (ອພຍ 25:10-22) ເປັນຊິ້ນສ່ວນທີ່ພິເສດສຸດຂອງພຣະວິຫານຊຶ່ງພຣະເຈົ້າໄດ້ສັ່ງໃຫ້ຄົນອິສຣາເອນສ້າງຂື້ນ ແລະກໍຕາງຫນ້າພຣະເຈົ້າໃນການນຳພາຄົນອິສຣາເອນ. ພວກເຂົາຈະໄດ້ຮູ້ວ່າພຣະເຈົ້າຊົງສະຖິດຢູ່ນຳພວກເຂົາ. ພຣະເຈົ້າອົງຊົງພຣະຊົນນີ້ມີຄວາມສັມພັນກັບຊົນຊາດອິສຣາເອນຫລາຍ ພຣະອົງມີພຣະປະສົງຢາກໃຫ້ເຂົາເຫັນວ່າພຣະອົງສາມາດສະຖິດຢູ່ນຳມະນຸດໄດ້ ເພື່ອບໍ່ຢາກໃຫ້ຄົນອິສຣາເອນໄປຫລົງໃຫລໃນພຣະເຈົ້າອົງອື່ນ.

ຂໍ້ 10 ໄດ້ກ່າວເຖິງເຜົ່າຊົນຕ່າງໆ ທີ່ຢູ່ໃນຜືນແຜ່ນດິນການາອັນ. ໃນນີ້ມີຄົນການາອັນ ແລະຄົນອາໂມໄຣເປັນກຸ່ມທີ່ໃຫຍ່ແລະມີພະລັງອຳນາດກວ່າຫມູ່. ພວກເຂົາໄດ້ປາກພາສາທ້ອງຖິ່ນຂອງໃຜລາວ. ຄົນອາໂມໄຣໃຊ້ຊີວິດຢູ່ຕາມຫວ່າງພູຂອງຊາມາເຣັຍ ແລະຢູດາ ແຕ່ຊາວການາອານແມ່ນໃຊ້ຊີວິດເລາະລຽບຕາມແຄມຝັ່ງທະເລເມດີແຕຣາເນ ແລະດິນແດນທີ່ຮາບພຽງ. ເຖິງໃຜຈະຢູ່ໃສກໍຕາມ ໂຢຊວຍກ່າວວ່າພວກເຮົາຈະຂື້ນໄປຂັບໄລ່ຄົນເຫລົ່ານັ້ນ. (3:10) ຊຶ່ງເປັນຄຳເວົ້າທີ່ແຂງແກ່ນແລະຫມັ້ນໃຈຫລາຍ.

ຂໍ້ 11 ໄດ້ກ່າວໃຫ້ປະຊາຊົນຫາມຫີບພັນທະສັນຍາ ຖ້າເຮົາຈະອະທິບາຍກໍຫມາຍຄວາມວ່າຕ້ອງຮັກສາປົກປ້ອງຫີບນັ້ນ. ເພາະຫີບນັ້ນແມ່ນສິ່ງທີ່ຈະນຳພາພວກເຂົາ ພວກປະໂລຫິດຈະຫາມຫີບແລະຈະຢືນຢູ່ກາງແມ່ນ້ຳຈໍແດນເພື່ອບໍ່ໃຫ້ນ້ຳໃຫລມາຖ້ວມປະຊາຊົນ. ຂໍ້ 12 "ເຫດສະນັ້ນຈົ່ງເລືອກຄົນ 12 ຄົນອອກຈາກເຜົ່າອິສຣາເອນເຜົ່າລະຄົນ" ແຕ່ລະຄົນເປັນຜູ້ຕາງຫນ້າແລະເປັນຜູ້ບໍຣິສຸດ ທີ່ຈະນຳພາຄົນອິສຣາເອນຂ້າມຜ່ານແມ່ນ້ຳ.

ຂໍ້ 13 ປະຊາຊົນທັງຫລາຍຈະບໍ່ກ້າເຮັດຫຍັງເລີຍ ຖ້າປະໂລຫິດຫາກບໍ່ນຳພາພວກເຂົາເຮັດກ່ອນ. ພຣະເຈົ້າກໍຈະບໍ່ເຮັດຢ່າງໃດ ຈົນກວ່າພວກປະໂລຫິດຈະຢ່າງບາດຕີນຂອງເຂົາເສັຍກ່ອນ. ນີ້ແມ່ນການສະແດງເຖິງຄວາມເຊື່ອແລະຄວາມໄວ້ວາງໃຈໃນພຣະເຈົ້າ. (ຮຣ 11:1)

## <u>ຕອບສນອງຕໍ່ຄຳແນະນຳຂອງພຣະເຈົ້າ (3:14-17; 4:14-18)</u>

ໂຢຊວຍໄດ້ຮັບຄຳແນະນຳຈາກພຣະເຈົ້າ, ແລ້ວລາວກໍກ້າເວົ້າຕໍ່ຄົນອິສຣາເອນທັງປວງ. ຄົນອິສຣາເອນທັງຫລາຍມີໂອກາດໄດ້ຂ້າມແມ່ນ້ຳຈໍແດນ ທັ້ງໆທີ່ແມ່ນ້ຳຍັງເຕັມຝັ່ງຢູ່. (ໂຢຊວຍ 3:15; ແລະ 4:18) ໃບປ່ານທີ່ມີສີເຫລືອງອ່ອນໆ ຊຶ່ງຕາກຢູ່ເທິງຫລັງຄາ ຫມາຍຄວາມວ່າລະດູນີ້ແມ່ນລະດູໃບໄມ້ຫລົ່ນ. ທີ່ນ້ຳລົ້ນຝັ່ງນີ້ຄືງແມ່ນນ້ຳທີ່ຫິມະເປື່ອຍແລ້ວໄຫລລົງມາຈາກພູເຂົາ ເຮີມັນ (ທາງເຫນືອຂອງທະເລສາບຄາລິເລ)

ທັນມາຫາພວກປະໂລຫິດທີ່ຫາມຫີບຄຳສັນຍານຳຫນ້າໄປກ່ອນ, ເມື່ອຕີນຂອງພວກເຂົາຢັ່ງລົງໃສ່ຫນ້ານ້ຳທັນທີທັນໃດນ້ຳກໍແຫ້ງລົງ ແລະປະຊາຊົນກໍເລີ້ມຂ້າມໄປ ຊຶ່ງຕົງກັບເມືອງເຢຣີໂກ. (ຂໍ້ 16) ຊ່າງຫນ້າອັສຈັນຊຶ່ງຊາວອິສຣາເອນບໍ່ຄວນຈະລືມ, ຫີບພັນທະສັນຍາຂອງພຣະເຈົ້າຢູ່ທີ່ໃດທີ່ນັ້ນນ້ຳກໍຈະແຫ້ງ ປະຊາຊົນກໍຈະຜ່ານໄປດ້ວຍດີ. (ຂໍ້ 17) ແຕ່ເມື່ອຕີນພວກປະໂລຫິດຫາກຢຽບດິນແຫ້ງຍາມໃດ ນ້ຳກໍຈະແລ່ນຄືນມາຫາກັນເປັນແມ່ນ້ຳຈໍແດນຄືເກົ່າ. (4:8)

ຄຣູສອນໂຮງຮຽນວັນອາທິດຄົນນີ່ງ ໄດ້ຕອບສນອງພຣະຄໍາຂອງພຣະເຈົ້າດ້ວຍການໃຫ້ການຖວາຍສິບລົດ ເຖິງແມ່ນວ່າຫລາຍຄົນຈະບໍ່ເຫັນການຖວາຍຂອງລາວກໍຕາມ ແຕ່ລາວຍັງມີຄວາມສັດຊື່ຕໍ່ອົງພຣະຜູ້ເປັນເຈົ້າ ແລະຄວາມເຊື່ອຂອງລາວກໍຖືກປະຕິບັດຂື້ນແຕ່ລະບາດກ້າວ. "ຈົ່ງຕອບສນອງພຣະຄໍາຂອງພຣະເຈົ້າດ້ວຍຄວາມເຊື່ອ."

## ລະລຶກເຖິງຄໍາແນະນໍາຂອງພຣະເຈົ້າ (4:19-24)

ຂໍ້ທີ 19 ປະຊາຊົນໄດ້ຂື້ນຈາກແມ່ນໍ້າຈໍແດນ ໃນວັນທີສິບເດືອນທີນື່ງຄົນອິສຣາເອນໄດ້ເລືອກເອົາເມືອງກິນການຊື່ງຕັ້ງຢູ່ຂ້າງເມືອງເຢຣິໂກ ດ້ານທິດຕາວັນອອກ ທີ່ນັ້ນຈະເປັນສະຖານທີ່ບໍຣິສຸດຂອງຊາວອິສຣາເອນ. "ວັນທີສິບເດືອນນື່ງ" ແມ່ນວັນທີ່ຄົນອິສຣາເອນສເລີມສລອງເທສການປັສຄາ (ອພຍ 12:2-3)

ກິນການໄດ້ຖືກແຕ່ງຕັ້ງໃຫ້ເປັນສະຖານທີ່ປະວັດສາດເພື່ອລະລຶກເຖິງຄໍາແນະນໍາຂອງພຣະເຈົ້າທີ່ໄດ້ໃຫ້ແກ່ພວກເຂົາ. ແຕ່ລະຄົນທີ່ອອກມາຈາກແຕ່ລະເຜົ່າທີ່ໂຢຊວຍໄດ້ເລືອກມານັ້ນ ໄດ້ນໍາຫີນມາຜູ້ລະກ້ອນ (4:4-7) ແລະແລ້ວໂຢຊວຍກໍໄດ້ຮິບໂຮມໄວ້ທີ່ກິນການ. ເຫດຜົນກໍມີຢູ່ວ່າ (1) ເພື່ອລະລຶກເຖິງການກະທໍາຂອງພຣະເຈົ້າຕໍ່ຜູ້ທີ່ເຊື່ອທັງຫລາຍ. (2) ເພື່ອສອນຄົນລຸ້ນຫລັງເຖິງສິ່ງທີ່ພຣະເຈົ້າໄດ້ກະທໍາມາ. (4:21-22)

ຂ້າພະເຈົ້າໄດ້ມີໂອກາດໄປທ່ຽວຖໍ້າຈັງທີ່ວັງວຽງ ແຂວງວຽງຈັນ ປະເທດລາວ. ໃນເວລາຍ່າງເຂົ້າໄປທ່ອງທ່ຽວນັ້ນ ຜູ້ຮັກສາຫລືຜູ້ຄຸ້ນເຄີຍກັບສະຖານທີ່ນີ້ດີ ກໍໄດ້ມາພາພວກຂ້າພະເຈົ້າຍ່າງເລາະແລ້ວກໍອະທິບາຍໄປດ້ວຍ. ໃນຕອນນື່ງ ລາວໄດ້ອະທິບາຍໄປວ່າພຣະພຸທເຈົ້າໄດ້ມານັ່ງຢູ່ບ່ອນນີ້ແລະກໍບອກວ່າຫີນກ້ອນນີ້ລະ, ແລະອັນນີ້ກໍແມ່ນຮອຍພະບາດຂອງເພິ່ນ. ຂ້າພະເຈົ້າກໍບໍ່ຕອບຢ່າງໃດ ເພາະຂ້າພະເຈົ້າກໍເຄີຍເປັນອາຈານສອນປະວັດສາດແລະກໍເຄີຍສອນພຸທປະວັດດ້ວຍ. ຂ້າພະເຈົ້າບໍ່ເຄີຍໄດ້ອ່ານແລະບໍ່ເຄີຍໄດ້ຍິນເລີຍວ່າ ພຣະພຸທເຈົ້າເຄີຍເດີນທາງມາເຖິງປະເທດລາວ. ຂ້າພະເຈົ້າຖາມຍ້ອນຄືນກ່ອນຈະຈາກຖໍ້າຈັງວ່າ: ທຸກສິ່ງທີ່ເຈົ້າເວົ້າມານີ້ແມ່ນຄວາມຈິງແທ້ບໍ່? ພຣະພຸທເຈົ້າໄດ້ມາເຖິງທີ່ນີ້ແທ້ບໍ່? ຊາຍຄົນນັ້ນຕອບວ່າ: ເພິ່ນພາວ່າຈັ່ງຊັ້ນເດີ !!!! ໃນເມື່ອປະວັດບໍ່ຈະແຈ້ງພວກເຮົາຈະເອົາໄປສອນລູກຫລານໄດ້ຢ່າງໃດ.

ໂຢຊວຍແນະນໍາໃຫ້ສ້າງກ້ອນຫີນໄວ້ເປັນທີ່ລະລຶກນັ້ນກໍເພາະວ່າຈະບໍ່ໄດ້ມີການສົງສັຍໃນຍຸກຕໍ່ໄປແລະກໍເປັນການບັນທຶກຄວາມຈິງຂອງພຣະເຈົ້າ (ໂຢຊວຍ ບົດທີ 4)

ພຣະເຈົ້າຊົງຫ້າມນໍ້າໃຫລ ເພື່ອສໍາແດງໃຫ້ຄົນຂອງພຣະອົງເຫັນວ່າພຣະອົງເປັນພຣະເຈົ້າແຫ່ງຣິດອໍານາດຂອງຈັກວານ. ເພື່ອເຂົາຈະໄດ້ໃຫ້ຄວາມໂຄຣົບຢໍາເກງແກ່ພຣະອົງ.

## ຄໍາແນະນໍາສໍາລັບວັນນີ້

ພວກເຮົາກໍເປັນຊົນຊາດອິສຣາເອນ, ພວກເຮົາກໍາລັງກ້າວໄປສູ່ດິນແດນການາອັນ, ເພາະຕ້ອງການໃຫ້ພວກເຮົາຟັງຄໍາແນະນໍາຈາກພຣະອົງ ແມ່ນວ່າບັນຫາຈະຍິ່ງໃຫຍ່ປານໃດ, ທະເລຈະຂວາງໜ້າ, ປ່າໄມ້ຈະໜາຕຶບພຽງໃດ, ເຫວຈະເລິກປານໃດ ພຣະອົງຈະນໍາພາພວກເຮົາຜ່ານຜ່າໄດ້.

ຄຳຖາມ:

1. ຫີບພັນທະສັນຍາແມ່ນຕົວແທນຂອງໃຜ ສຳລັບຄົນເຮັບເຣີ?

໒. ເປັນຫຍັງທ່ານມີແຕ່ຄິດວ່າມັນຈະເລວຮ້າຍລົງໄປເລື້ອຍ? ໃນເມື່ອພຣະເຈົ້າອົງມີຄວາມສາມາດກຳລັງທຳງານເພື່ອທ່ານຢູ່? ທ່ານມີປະສົບການຢ່າງໃດ?

3. ທ່ານຈະໃຫ້ຄຳແນະນຳລູກຫລານແນວໃດກ່ຽວກັບຄວາມຈິງແຫ່ງພຣະວິນຍານ? ເຮົາຈະໄດ້ຮັບຜົນສຳເຣັດຢ່າງໃດ?

4. ແມ່ນຫຍັງຄືບັນຫາທີ່ໃຫຍ່ທີ່ສຸດ ທີ່ທ່ານເຄີຍພົບຜ່ານມາ? ທ່ານເຫັນການທຳງານຂອງພຣະເຈົ້າຢ່າງໃດ?

5. ທ່ານເຄີຍເຫັນ ຫລືເຄີຍໄດ້ຍິນການເລົ່າເລື້ອງທີ່ເສກສັນປັ້ນແຕ່ງເອົາບໍ່? ທ່ານຈະເຮັດຢ່າງໃດຖ້າສິ່ງເຫລົ່ານັ້ນຫາກສືບທອດມາເຖິງລູກຫລານຂອງທ່ານ?

ສຈ. ບຸນໂຮມ ພັມມະຈັນ

# ບົດຮຽນທີ 4
# ເປັນການສ່ຽງທີ່ກະທຳໄປໂດຍປາສຈາກພຣະເຈົ້າ

ຂໍ້ພຣະຄັມພີສຳລັບບົດຮຽນ: ໂຢຊວຍ 7:1-12, 16-21
ຂໍ້ພຣະຄັມພີສຳລັບເບື້ອງຫລັງ: ໂຢຊວຍ 7-8
ຈຸດສຳຄັນຂອງບົດຮຽນນີ້: ກະທຳໄປໂດຍປາສຈາກພຣະເຈົ້າ ເພາະວ່າກະທຳໄປເນັ້ນໃສ່ຕາມຄວາມປາຖນາຂອງຕົນແລະເພິ່ງໃນຄວາມສາມາດຂອງຕົນເອງ ຜົນທີ່ຕາມມາ ຄືຄວາມພ່າຍແພ້ແລະຄວາມຫາຍະນະ.
ຄຳຖາມເພື່ອການສຳຣວດ: ພວກເຮົາຢູ່ໃນຍຸກປັດຈະບັນມັກເນັ້ນໃສ່ໃນການເພິ່ງຕົນເອງຈຶ່ງໄປຂັດກັບການເພິ່ງພຣະເຈົ້າຢ່າງໃດ?
ຈຸດປະສົງຂອງບົດຮຽນນີ້: ອະທິບາຍໃຫ້ເຫັນວ່າ ຈະມີຫຍັງເກີດຂຶ້ນເມື່ອພວກເຮົາຫາກກະທຳໄປຕາມຄວາມປາຖນາຂອງຕົນເອງແລະເພິ່ງພາຕົນເອງໂດຍປາສຈາກພຣະເຈົ້າ.

## ບົດຮຽນ

### ຄຳນຳ
ພຣະເຈົ້າເປັນຜູ້ສ້າງພວກເຮົາແລະພຣະອົງຮູ້ວ່າອັນໃດດີທີ່ສຸດສຳລັບພວກເຮົາ. ເມື່ອພວກເຮົາຫາກເມີນເສີຍຕໍ່ແຜນການແລະພຣະປະສົງຂອງພຣະອົງເພື່ອພວກເຮົາ ຫລືວ່າບໍ່ເຊື່ອຟັງພຣະອົງແລະເພິ່ງໃນຄວາມສາມາດຂອງຕົນເອງຍາມໃດ ພວກເຮົາກໍຈະປະສົບກັບຄວາມພ່າຍແພ້ທາງຝ່າຍຈິດວິນຍານ.

### ເງື່ອນໄຂຂອງຄວາມບໍ່ສັດຊື່ຂອງອິສຣາເອນ (7:1-5)
ພຣະເຈົ້າຊົງບໍ່ພໍໃຈກັບໄພ່ພົນທີ່ບໍ່ເຊື່ອຟັງຄຳສັ່ງຂອງພຣະອົງທີ່ເມືອງເຢຣິໂກ. ການກະທຳອັນຕໍ່ດີງຂອງຄົນນຶ່ງເປັນຜົນສະທ້ອນໃຫ້ຄົນຫມົດບ້ານ. "ບໍ່ຟັງຄຳສັ່ງ" (ໂຢຊວຍ 7:1) ພາສາອັງກິດໃຊ້ຄຳວ່າ "unfaithful" ຄວາມບໍ່ສັດຊື່ຫມາຍຄວາມວ່າການກະທຳທີ່ມີການເຊື່ອງຊ້ອນ. ຫມາຍເຖິງການທັກຫລັງກັນ.

ການກະທຳຂອງອາການຄົນດຽວໄດ້ນຳຄວາມເສົ້າສລົດໃຈມາໃຫ້ຄົນທັງປະເທດ. ລາວໄດ້ລະເມີດຄຳສັ່ງຂອງພຣະຜູ້ເປັນເຈົ້າ. "ສິ່ງໃດໆທີ່ຕ້ອງຖືກທຳລາຍ" (ໂຢຊວຍ 7:1) ຫມາຍເຖິງສິ່ງຂອງທີ່ຖືກຍຶດມາຈາກສົງຄາມຊາວອິສຣາເອັນຈະຕ້ອງທຳລາຍສິ່ງຂອງເຫລົ່ານັ້ນ ເພື່ອໃຫ້ເປັນສິ່ງອຸທິດໃຫ້ອົງພຣະຜູ້ເປັນເຈົ້າ. ພາສາອັງກິດໃຊ້ຄຳວ່າ "ເປັນເຄື່ອງອຸທິດ" (devoted things).

ໂຢຊວຍໃຊ້ລະບົບສົ່ງຜູ້ສອດແນມອີກເທື່ອນຶ່ງ. ເມືອງອາອີຢູ່ທາງທິດຕາເວັນຕົກສ່ຽງເຫນືອຂອງເມືອງເຢຣິໂກແລະຢູ່ທາງທິດຕາເວັນອອກຂອງເບັດເອນ (ມີຄວາມຫມາຍວ່າ ເຮືອນຂອງພຣະເຈົ້າ) ໃກ້ກັບເມືອງເບັດອາເວນ (ມີຄວາມຫມາຍວ່າ ເຮືອນທີ່ບໍ່ມີຫຍັງຫມົດ). ສະຖານທີ່ດັ່ງກ່າວນີ້ມີພາກສ່ວນສຳຄັນຫລາຍໃນສມັຍຂອງບັນພະບຸຣຸດຂອງຊາວອິສຣາເອັນ (ປະຖົມມະການ 28:10-19; 35:1) ແລະໃນສມັຍຂອງພວກຜູ້ປົກຄອງແລະພວກກະສັດຕ່າງໆ.

ພວກສອດແນມທີ່ໄປສຳຣວດການແນະນຳໃຫ້ໂຢຊວຍສົ່ງທະຫານສອງຫລືສາມພັນຄົນໄປຈົມຕີເມືອງອາອີກໍພໍແລ້ວ. ການເດີນທາງຈາກເຢຣິໂກໄປອາອີມີລະຍະທາງຍາວກວ່າ 24 ກິໂລແມັດ ຊຶ່ງເປັນທາງເນີນພູ. ບາງທີພວກເຂົາອາດ

ຈະເຊື່ອວ່າບໍ່ຈຳເປັນທີ່ຈະສົ່ງກອງທະຫານໄປເປັນຈຳນວນຫລາຍເກີນກວ່າຄວາມຕ້ອງການ. ຄຳແນະນຳຂອງພວກສອດແນມເປັນການພິສູດໃຫ້ເຫັນວ່າພວກເຂົາມີຄວາມຫມັ້ນໃຈໃນພຣະເຈົ້າຫລາຍ ຫລືວ່າພວກເຂົາມີຄວາມຫມັ້ນໃຈໃນຄວາມສາມາດຂອງຕົວເອງຫລາຍເກີນໄປ?

ທະຫານຂອງອິສຣາເອັນຖືກຊາວເມືອງອາອີໂຈມຕີຈົນແຕກກະຈັດກະຈາຍໄປ (ໂຢຊວຍ 7:4-5). ພວກເຂົາຖືກຂັບໄລ່ໄປຈົນເຖິງ "ເຊບາລີມ" ຊື່ຂອງສະຖານທີ່ນັ້ນມີຄວາມຫມາຍວ່າ<u>ຖືກທຸບຕີໃຫ້ແຕກ</u> ໂດຍອ້າງອີງເຖິງສະຖານທີ່ນັ້ນເປັນບ່ອນຊາວເມືອງໄດ້ທັບກ້ອນຫີນແລະເຮັດໃຫ້ເປັນກ້ອນໃຫຍ່ໆ ເພື່ອເອົາໄປສ້າງຕຶກແລະອາຄານຕ່າງໆ. ພວກທະຫານຂອງອິສຣາເອັນເສັຽຊັຍທາງຝ່າຍທະຫານແລະເສັຽຂວັນໄປຕາມໆກັນ.

ເປັນຄັ້ງທຳອິດທີ່ຊາວການາອານໄດ້ນຳຄວາມໂສກເສົ້າມາສູ່ຊົນຊາດອິສຣາເອັນ. ທະຫານຂອງອິສຣາເອັນສາມສິບຫົກຄົນໄດ້ເສັຽຊີວິດ (7:5). ການເສັຽຊັຍສົງຄາມແລະການສູນເສັຽຊີວິດເຮັດໃຫ້ຊາວອິສຣາເອັນມີຄວາມເສັຽໃຈເມື່ອຄິດເຖິງຂໍ້ຄວາມຂອງຜູ້ຂຽນພຣະສັນຍາເດີມເຄີຍໄດ້ກ່າວເຖິງຄວາມຢ້ານກົວຂອງຊາວເມືອງການາອານ ທີ່ເຄີຍມີຕໍ່ຊາວອິສຣາເອັນ (2:9, 11, 24).

<u>ການສອບສວນຂອງໂຢຊວຍ</u> (7:6-9)

ການເສັຽຊັຍສົງຄາມເທື່ອນີ້ເຮັດໃຫ້ໂຢຊວຍກະທຳສອງຢ່າງ. ອັນທີນຶ່ງ ລາວນຳພາຊາວອິສຣາເອັນສະແດງອອກເຖິງຄວາມໂສກເສົ້າເສັຽໃຈແລະຄວາມອັບອາຍ (7:6). ຕໍ່ມາ ລາວຈະຊອກຫາສາຍເຫດຂອງການພ່າຍແພ້. ລາວຈະຖາມພຣະເຈົ້າ (7:7-9).

ໂຢຊວຍແລະພວກອາວຸໂສໄດ້ກະທຳຕາມປະເພນີຂອງພວກເຂົາ ໃນການສະແດງອອກສາມປະການ ເຖິງຄວາມໂສກເສົ້າ, ຄວາມສິ້ນຫວັງ, ຫລືຄວາມອັບອາຍ. ຈີກເຄື່ອງນຸ່ງຂອງຕົນເອງ(ບາງຄັ້ງກໍເອົາເຄື່ອງນຸ່ງທີ່ເຮັດດ້ວຍກະສອບຜ້າປ່ານມາສວມໃສ່ແທນ) ແລະເອົາຂີ້ຝຸ່ນດິນໂຮຍໃສ່ເທິງຫົວຂອງຕົນເອງເປັນສັນຍາລັກຂອງຄວາມຖ່ອມຕົວດ້ວຍຄວາມບໍຣິສຸດໃຈ. ຜູ້ທີ່ເຮັດຢ່າງນີ້ໄດ້ສຳນຶກຕົນວ່າຕົນເອງຕົກຢູ່ໃນສະພາບອັນບອບຊ້ຳຊຶ່ງຕ້ອງການຢາກຈະເປີດຈິດເປີດໃຈໃຫ້ເຫັນແລະສັດຊື່ຢູ່ຕໍ່ຫນ້າຂອງພຣະເຈົ້າ. ຄວາມອວດອົ່ງທະນົງຕົວຫລືມີຄວາມຫມັ້ນໃຈໃນຕົນເອງເກີນໄປທີ່ຜ່ານມາກໍໃຫ້ປະຖິ້ມໄປ ແລະໄດ້ຍອມມອບຕົນເອງໃຫ້ພຣະເຈົ້າ. ຫມູບຢູ່ຕໍ່ຫນ້າຫີບຄຳຫມັ້ນສັນຍາ ແມ່ນການຖ່ອມຕົວເອງລົງໃຫ້ຕ່ຳຢູ່ຕໍ່ຫນ້າຂອງພຣະເຈົ້າ.

"ຂ້າແດ່ພຣະຜູ້ເປັນເຈົ້າແຫ່ງຈັກກະວານ" (7:7) ເປັນຄຳຮ້ອງຫາພຣະເຈົ້າໃນຂນະທີ່ມີຄວາມສງົບສົນເທ້ຂອງຜູ້ນຳຄົນນີ້. ລາວມີຄວາມສັບສົນໃນເຫດການທີ່ເກີດຂຶ້ນ ລາວຈຶ່ງນຳເຣື່ອງລາວນັ້ນມາຫາພຣະເຈົ້າເພື່ອຕ້ອງການຄຳຕອບຈາກພຣະອົງ. ເປັນຫຍັງມີຫລາຍຄົນຫນີຫນ້າພຣະເຈົ້າ ເມື່ອມີບັນຫາສັບສົນໃນຊີວິດ ຊຶ່ງເປັນເວລາທີ່ພວກເຂົາຕ້ອງການພຣະອົງຫລາຍທີ່ສຸດ? ຮັກສາຄວາມສັມພັນຕິດຕໍ່ກັບພຣະເຈົ້າເປັນປະຈຳນັ້ນສຳຄັນຫລາຍ ໂດຍສະເພາະແລ້ວໃນຍາມພວກເຮົາມີອຸປສັກເພື່ອຊອກສແວງຫາຄຳຕອບ.

ຄຳຖາມອັນທຳອິດທີ່ໂຢຊວຍຖາມນັ້ນ "ດ້ວຍເຫດໃດ." ລາວຮູ້ຢູ່ແກ່ໃຈວ່າພຣະເຈົ້າຊົງເປັນພຣະຜູ້ເປັນເຈົ້າແຫ່ງຈັກກະວານ ພຣະອົງຊົງມີພະລັງແລະອຳນາດເຮັດໄດ້ຕາມພຣະປະສົງຂອງພຣະອົງ. ລາວມີຄວາມປລາດໃຈວ່າ ເປັນຫຍັງພຣະເຈົ້າຈຶ່ງມີພຣະປະສົງນຳໄພ່ພົນອິສຣາເອັນເຂົ້າມາໃນແຜ່ນດິນການາອານ ເພື່ອໃຫ້ພວກເຂົາເສັຽຊັຍແລະຖືກທຳລາຍເສັຽ (7:7). ລາວຕັ້ງຄຳຖາມອີກວ່າ "ເປັນຫຍັງ" ຈຶ່ງບໍ່ໃຫ້ພວກລາວຢູ່ຟາກແມ່ນ້ຳຢໍແດນເບື້ອງນັ້ນພຸ້ນ ຢູ່ທີ່ນັ້ນກໍດີຢູ່ແລ້ວ. ຜູ້ທີ່ອ່ານພຣະທັມຕອນນີ້ກໍຮູ້ດີຢູ່ແລ້ວວ່າ ການເສັຽຊັຍທີ່ເມືອງອາອີນັ້ນບໍ່ມີອັນໃດທີ່ຈະບໍ່ດີໃນການເຂົ້າຍຶດ

ແຜ່ນດິນການາອານ.      ຕາມຄວາມຈິງແລ້ວ ພຣະເຈົ້າບໍ່ມີພຣະປະສົງອັນໃດ ທີ່ຈະໃຫ້ໄພ່ພົນຂອງອິສຣາເອັນໄດ້ຮັບຄວາມພ່າຍແພ້ເລີຍ ແຕ່ວ່າຄຳຖາມນັ້ນຍ່ອມມີຢູ່ແລ້ວ. ບາງຄັ້ງ ພວກເຮົາມັກຈະຖາມພຣະເຈົ້າກ່ອນ ແທນທີ່ຈະລໍຖ້າຟັງວ່າພຣະເຈົ້າຈະເວົ້າອັນໃດກັບພວກເຮົາ ພວກເຮົາຊ້ຳໄປຖາມພຣະອົງເສັຽກ່ອນ.

ຄຳຖາມອັນທີສອງຂອງໂຢຊວຍນັ້ນເບິ່ງເຫມືອນກັບວ່າຄາຢູ່ໃນຄໍຂອງລາວ (7:8). ເມື່ອລາວຄິດເຖິງເຣື່ອງນີ້ຫລາຍເທົ່າໃດລາວແທ່ງເວົ້າບໍ່ໄດ້ແລະເກີດຄວາມສງົບສົນເທ້ຫລາຍເທົ່ານັ້ນ. ຄຳວ່າ "ປິ້ນຫນີ" ຄຳນີ້ໄດ້ປາກົດໃນພຣະທັມຂໍ້ນີ້ແລະມີເທື່ອດຽວເທົ່ານັ້ນທີ່ປາກົດໃນພຣະສັນຍາເດີມ. ຄຳນີ້ໄດ້ບັນລະຍາຍເຖິງການຫັນຫຼັງໃສ່ແລະຖອນທັບອອກຈາກສນາມຮົບ. ເປັນພາບພົດອັນປະຈັກຕາທີ່ສະແດງໃຫ້ເຫັນຄວາມອັບອາຍແລະຄວາມສັບສົນຢ່າງຮ້າຍແຮງຈົນບໍ່ຮູ້ວ່າຈະເຮັດຫຍັງ.

ຄຳຖາມອັນທີສາມຂອງໂຢຊວຍສຳລັບພຣະເຈົ້ານັ້ນ  ເມື່ອມີເຫດການຢ່າງນີ້ເກີດຂຶ້ນຢູ່ເມືອງອາອີແລ້ວ ກໍຈະມີຜົນກະທົບກະເທືອນກັບອິສຣາເອັນໃນອະນາຄົດ (7:9).   ລາວສັນນິຖານວ່າ ຊາວການາອານກໍຈະມີກຳລັງໃຈໃນຊັຍຊະນະຄັ້ງນີ້. ຜົນທີ່ຕາມມາພວກເຂົາກໍຈະຕິດຕາມທຳຮ້າຍໄພ່ພົນຂອງພຣະເຈົ້າໃຫ້ຫມົດກ້ຽງໄປ.     ໃຫ້ຈຳໄວ້ວ່າ ໃນສມັຍກ່ອນຂອງອິສຣາເອັນ ນາມຊື່ມີຄວາມສຳຄັນຫລາຍ ນາມຊື່ໄດ້ບົ່ງບອກເຖິງລັກສະນະຂອງຄົນຫລືຊົນຊາດ. ການລຶບລ້າງຊື່ຂອງອິສຣາເອັນ ຫມາຍຄວາມວ່າຊາວການາອານໄດ້ປາບພວກເຂົາໃຫ້ລາບຄາບ ຄົນຂອງຊົນຊາດອິສຣາເອັນກໍຈະບໍ່ມີຊື່ໃນພື້ນແຜ່ນດິນໂລກນີ້ອີກຕໍ່ໄປ. ຖ້າໄພ່ພົນຂອງພຣະເຈົ້າບໍ່ມີອີກຕໍ່ໄປຢູ່ໃນໂລກນີ້ ກໍບໍ່ມີຜູ້ໃດເປັນຜູ້ຕາງຫນ້າຂອງພຣະເຈົ້າ ການສືບເນື່ອງຂອງທັມມະຊາດທີ່ຖືກສ້າງຂຶ້ນ ຫລືກິຈການຂອງພຣະເຈົ້າຈະມີຄວາມຫມາຍອັນໃດ?

ເມື່ອພວກເຮົາກະທຳບາບແລະເມີນເສີຍຕໍ່ຄຳສັ່ງຂອງພຣະເຈົ້າ ພວກເຮົາກໍນຳຄວາມເສື່ອມເສັຽມາສູ່ນາມຊື່ຂອງພຣະເຈົ້າ. ໃນຂນະດຽວກັນ ກິຈການຂອງບາບບໍ່ສາມາດຈະຄຸກຄາມພຣະລັກສະນະຂອງພຣະເຈົ້າໄດ້. ອິສຣາເອັນເພິ່ງພຣະເຈົ້າເພື່ອໃຫ້ນາມຊື່ຂອງຊາດຫນັ້ນຄົງຢູ່ ແຕ່ວ່າພຣະເຈົ້າບໍ່ໄດ້ເພິ່ງອິສຣາເອັນເພື່ອຊື່ສຽງຂອງພຣະອົງ.

<u>ຄຳອະທິບາຍຂອງພຣະເຈົ້າ</u> (7:10-12)

ພຣະເຈົ້າຊົງຕອບຄຳຖາມຂອງໂຢຊວຍ. ພຣະອົງສັ່ງໃຫ້ລາວວ່າ "ຈົ່ງລຸກຂຶ້ນ" ຊີ້ໃຫ້ເຫັນວ່າເຣື່ອງລາວແລະເຫດການທີ່ເມືອງອາອີນັ້ນຂຶ້ນຢູ່ກັບຊາວອິສຣາເອັນ ບໍ່ໄດ້ຂຶ້ນຢູ່ກັບພຣະອົງ. ບໍ່ແມ່ນຄວາມປາຊັຍທີ່ເມືອງອາອີຈຶ່ງບໍ່ໄດ້ນຳສະງ່າຣາສີມາໃຫ້ແກ່ພຣະອົງ ແຕ່ແມ່ນຄວາມບາບທີ່ບໍ່ທຳລາຍ "ສິ່ງທີ່ຕ້ອງຖືກທຳລາຍ." ພຣະອົງເລີ້ມອະທິບາຍເຫດການທີ່ເກີດຂຶ້ນຢູ່ເມືອງເຢຣີໂກ ແລະລາວຈະຕ້ອງນຳພາໄພ່ພົນຂອງອິສຣາເອັນໃຫ້ປະຕິບັດຕາມ ເພື່ອບໍ່ໃຫ້ມີອັນໃດມາກີດກັ້ນລະຫວ່າງພຣະອົງກັບພວກເຂົາ.

ຈາກແບບແຜນຂອງທະນາຍທີ່ຕ້ອງຫາ ພຣະເຈົ້າເປີດເຜີຍຄວາມຜິດຕໍ່ສູ້ອິສຣາເອັນ (7:11).ພວກເຮົາຈະເຫັນວ່າການພົວພັນຂອງການກະທຳຂອງຄົນຜູ້ນຶ່ງກັບຄົນທັງກຸ່ມ. ຄຳເວົ້າຕອນນີ້ໄດ້ເນັ້ນເຈາະຈົ່ງໃສ່ການກະທຳຂອງຄົນຜູ້ນຶ່ງໄດ້ລາມອອກໄປ. ຄຳວ່າ "ເຮັດບາບ" ແລະ "ລະເມີດ"    ສອງຄຳນີ້ເປັນຄຳສຳຄັນທີ່ສຸດທີ່ໃຊ້ໃນພາສາເຮັບເຣີຊຶ່ງບົ່ງບອກເຖິງຄວາມບໍ່ສັດຊື່ຕໍ່ພຣະເຈົ້າ. ອາການໄດ້ເຮັດຜິດຕໍ່ກົດບັນຍັດກ່ຽວກັບ "ສິ່ງທີ່ຕ້ອງຖືກທຳລາຍ" ຫລືອີກຄຳນຶ່ງ "ເປັນເຄື່ອງທີ່ອຸທິດ" (ໃຫ້ເບິ່ງ ພຣະບັນຍັດສອງ 20:10-20; ໂຢຊວຍ 6:18-19). ເອົາສິ່ງຂອງທີ່ຕ້ອງອຸທິດໃຫ້ພຣະເຈົ້າມາໃຊ້ເປັນຂອງສ່ວນຕົວ ບໍ່ຕ່າງຫຍັງເລີຍກັບລັກເອົາສິ່ງຂອງແລ້ວຕົວະວ່າບໍ່ໄດ້ເອົາເພື່ອຊຸກເຊື່ອງຄວາມຜິດ.

ພຣະເຈົ້າຊົງບອກໂຢຊວຍວ່າ ອິສຣາເອັນຈະເປັນ "ຝ່າຍທີ່ຕ້ອງຖືກທຳລາຍ" (7:12) ເຄາະທີ່ຕາມມານັ້ນ ແມ່ນພຣະເຈົ້າມີພຣະປະສົງເພື່ອຊາວການາອານຜູ້ທີ່ເປັນສັດຕູຂອງພວກເຂົາ. ຊາວອິສຣາເອັນຍຶດຄອງສິ່ງຂອງທີ່ຖືກທຳລາຍ

ແລະ ສະນັ້ນ ພວກເຂົາຈະກາຍເປັນວັດຖຸປະສົງທີ່ຈະຖືກທຳລາຍ. ພວກເຂົາສູນເສັຽສິດທິຂອງພວກເຂົາ ຄືພຣະເຈົ້າສະຖິດຢູ່ນຳພວກເຂົາດ້ວຍພະລັງຂອງພຣະອົງ ແລະຕໍ່ສູ້ເພື່ອພວກເຂົາ. ພຣະອົງສັນຍາວ່າຈະບໍ່ສະຖິດຢູ່ກັບພວກເຂົາອີກຈົນກວ່າພວກເຂົາທຳລາຍສິ່ງທີ່ຈະຖືກທຳລາຍ. ຂໍ້ຄວາມນີ້ຍັງໃຫ້ຄວາມຫວັງແກ່ພວກເຂົາຢູ່ ພຣະເຈົ້າຊົງສັນຍາວ່າຕາບໃດພວກເຂົາຫາກກັບໃຈເຊົາເຮັດບາບ ພຣະອົງຈຶ່ງຈະສະຖິດຢູ່ນຳພວກເຂົາ.

ໂຢຊວຍຮູ້ສາຍເຫດຂອງການພ່າຍແພ້ຢູ່ເມືອງອາອີ ແຕ່ລາວບໍ່ຮູ້ວ່າແມ່ນຜູ້ໃດເປັນຜູ້ທີ່ເຮັດບາບຕໍ່ສູ້ພຣະເຈົ້າ. ພຣະອົງຊົງໃຫ້ຄຳຊີ້ແນະລາວເພື່ອໃຫ້ໄປຄົ້ນຫາຕົວຜູ້ທີ່ເຮັດບາບນັ້ນ (7:13-15).

<u>ຄຳສາຣະພາບຂອງອາການ</u> (7:16-21)

ໂຢຊວຍກ່າວຕໍ່ອາການເໝືອນພໍ່ກັບລູກທີ່ເຮັດຜິດ (7:19). ລາວຫນູນໃຈອາການໃຫ້ບອກຄວາມຈິງໃນສິ່ງທີ່ໄດ້ກະທຳໄປ. ສາຣະພາບຄວາມຜິດຂອງລາວຕໍ່ໜ້າຝູງຊົນ ເປັນການຖວາຍກຽດແກ່ພຣະເຈົ້າແລະສັຣເສີນພຣະອົງ. ລາວຍອມຮັບຄວາມຜິດທັງຫມົດ. ໃນຄຳສາຣະພາບຂອງອາການຈະເຫັນຄຳວ່າ "ໄດ້ເຫັນ" "ຢາກໄດ້" ແລະ "ໄດ້ເຊື່ອງເອົາໄວ້" (7:21) ພວກເຮົາເຫັນໄດ້ຢ່າງຄັກແນ່ການເປັນມາຂອງຄວາມບາບນັ້ນ ເລີ້ມຈາກການຖືກທົດລອງໄປຈົນເຖິງການກະທຳບາບ.

ອາການໄດ້ເອົາສາມຢ່າງທີ່ເປັນ "ສິ່ງທີ່ຕ້ອງຖືກທຳລາຍ" ເພື່ອຖວາຍໃຫ້ແກ່ອົງພຣະຜູ້ເປັນເຈົ້າ. ລາວໄດ້ເອົາເສື້ອຄຸມງາມໂຕນຶ່ງຂອງຊາວບາບີໂລນມາເປັນຂອງລາວ ເງິນຫນັກປະມານສອງກິໂລກຣາມ ແລະຄຳແທ່ງນຶ່ງຫນັກກວ່າເຄິ່ງກິໂລ. ລາວໄດ້ບອກໂຢຊວຍບ່ອນທີ່ລາວໄດ້ເຊື່ອງໄວ້.

ອິສຣາເອັນໄດ້ຮັບບົດຮຽນອັນມີຄຸນຄ່ານັ້ນຄື ພຣະສັນຍາທີ່ພຣະເຈົ້າຊົງສະຖິດຢູ່ນຳເຮັດໃຫ້ມີຄວາມຫມັ້ນໃຈອັນຫນັກແຫນ້ນແລະຈະຕ້ອງປະຕິບັດຕາມຄຳຮຽກຮ້ອງຂອງພຣະເຈົ້າອີກດ້ວຍ. ອິສຣາເອັນບໍ່ໄດ້ຢູ່ໃນສະພາບຂອງຄວາມບາບອີກຕໍ່ໄປ. ພວກເຂົາໄດ້ຂຶ້ນໄປຍັງເມືອງອາອີພ້ອມດ້ວຍທະຫານທັງຫມົດແລະຈົນຕີເມືອງທັງດ້ານຫລັງໂດຍບໍ່ໃຫ້ພວກສັດຕູຮູ້ຕົວ ແລະໄດ້ຮັບຊັຍຊະນະ (8:1-29). ພວກເຂົາໄດ້ປະຕິບັຕາມຄຳສັ່ງຂອງພຣະເຈົ້າດ້ວຍຄວາມຣະມັດຣະວັງ ແລະມອບໃຈຖວາຍໃຫ້ແກ່ອົງພຣະຜູ້ເປັນເຈົ້າໃຫມ່ໃນຄຳຫມັ້ນສັນຍາໃນຄວາມສັມພັນກັບພຣະເຈົ້າ (8:30-35).

<u>ຄຳຖາມ</u>

1. ບໍ່ມີໃຜດອກຈະພໍໃຈເມື່ອເຮັດດີນຳຄົນແລ້ວຖືກເຂົາເມີນເສີຍ. ທ່ານສາມາດຈື່ຈຳໄດ້ບໍ່ ເມື່ອພຣະເຈົ້າເຄີຍຊ່ອຍທ່ານແລ້ວ ທ່ານເມີນເສີຍບໍ່ຮູ້ຈັກຕອບບຸນແທນຄຸນພຣະອົງ? ທ່ານສຳນຶກໄດ້ຢ່າງໃດແລ້ວທ່ານເຮັດຫຍັງແດ່?

2. ທ່ານເຫັນພ້ອມຫລືວ່າບໍ່ເຫັນພ້ອມໃນຂໍ້ຄິດດັ່ງກ່າວນີ້ ຄວາມບາບຂອງຄົນນຶ່ງໄປເຮັດໃຫ້ຄົນທັງຫມູ່ເດືອດຮ້ອນ? ໃຫ້ອະທິບາຍຄວາມຄິດເຫັນຂອງທ່ານ.

3. ມີສິ່ງໃດທີ່ຄຣິສຕຽນກະທຳໄປຢ່າງຮ້າຍແຮງຈົນເປັນເຫດເຮັດໃຫ້ຊື່ສຽງຫລືນຳຄວາມເສື່ອມເສັຽມາໃຫ້ພຣະເຈົ້າ?

4. ການຮັບສາຣະພາບບາບມີການພົວພັນໃກ້ກວ່າກັບອະດີດຫລືໃກ້ກວ່າອະນາຄົດ?

ສຈ. ບຸນເຮັ່ງ ພົງປະພັນ

## ບົດຮຽນທີ 5
## ພຣະເຈົ້າຊົງປະທານຊັຍຊະນະ

---

ຂໍ້ພຣະຄັມພີສໍາລັບບົດຮຽນ: ໂຢຊວຍ 9:3-15; 10:6-14, 40-42

ຂໍ້ພຣະຄັມພີສໍາລັບເບື້ອງຫລັງ: ໂຢຊວຍ 9-12

ຈຸດສໍາຄັນຂອງບົດຮຽນນີ້: ພຣະເຈົ້າຊົງປະທານຊັຍຊະນະໃຫ້ໄພ່ພົນຂອງພຣະອົງເມື່ອພວກເຂົາຫາກໄວ້ວາງໃຈ ແລະຕິດຕາມພຣະອົງ.

ຄໍາຖາມເພື່ອການສໍາຣວດ: ພວກເຮົາສາມາດເພິ່ງພຣະເຈົ້າໄດ້ບໍ່?

ຈຸດປະສົງຂອງບົດຮຽນນີ້: ເພື່ອຈະໄດ້ຄົ້ນຄວ້າພຣະທັມຕອນນີ້ແລ້ວນໍາມາປະກອບໃນຊີວິດ ຊຶ່ງມີເຣື່ອງລາວຢູ່ວ່າພຣະເຈົ້າຊົງປະທານຊັຍຊະນະໃຫ້ໃນຊີວິດຂອງພວກເຮົາ.

### ບົດຮຽນ

ຄໍານໍາ

ພຣະເຈົ້າຊົງສັນຍາວ່າພຣະອົງຈະປົກປັກຮັກສາແລະປະທານໃຫ້ໄພ່ພົນຂອງພຣະອົງ. ພຣະສັນຍາຂອງພຣະອົງຈະບໍ່ເປັນພຣະສັນຍາເປົ່າໆ. ພວກເຮົາຈະໄດ້ຮັບຕາມພຣະສັນຍາ ໃນເມື່ອພວກເຮົາຫາກເຊື່ອຟັງ ແລະປະຕິບັດຕາມພຣະປະສົງຂອງພຣະອົງແລະດໍາເນີນຊີວິດຕາມແຜນການຂອງພຣະອົງ.

ຊັຍຊະນະເໜືອຜູ້ທີ່ມາຫລອກລວງ (9:3-15)

ພຣະທັມໂຢຊວຍບົດທີ 9 ເປັນບົດທີ່ເລີ້ມຂຍາຍໜ້າກວ້າງຂອງພູມີຊາດຂອງພຣະທັມເຫລັ້ມນີ້. ໃນຂນະທີ່ປະຊາຊົນສ່ວນຫລາຍທີ່ຢູ່ໃນພື້ນແຜ່ນດິນນີ້ຕຽມພ້ອມທີ່ຈະປະທະກັບອິສຣາເອນ (9:1-2) ແຕ່ມີປະຊາຊົນກຸ່ມນຶ່ງຂອງບ້ານນັ້ນທີ່ຢູ່ໃນເຂດແດນນັ້ນໄດ້ເຮັດອັນໃດອັນນຶ່ງເພື່ອຫລີກລ້ຽງການປະທະກັນ.

ກິເບໂອນເປັນບ້ານນຶ່ງທີ່ຢູ່ໃກ້ເມືອງອາອີແລະຕັ້ງຢູ່ທາງທິດຕາເວັນຕົກສ່ຽງເໜືອຂອງເມືອງເຢຣີໂກ ເປັນເຂດພູພຽງລະຫວ່າງຢູດາແລະຊາມາເຣັຽ. ປະຊາຊົນໃນບ້ານນີ້ໄດ້ໃຊ້ "ອຸບາຍຫລອກລວງ" (9:4) ພາສາອັງກິດໃຊ້ຄໍາວ່າ "Ruse" ເປັນແຜນການທີ່ສລາດແກມໂກງ ວິທີການດັ່ງກ່າວນີ້ຈະວ່າດີ ຫລືວ່າບໍ່ດີກໍເວົ້າຍາກ.

ປະຊາຊົນຂອງບ້ານກິເບໂອນໄດ້ຫລອກລວງຊາວອິສຣາເອັນ (9:4-5). ພວກເຂົາເອົາເຄື່ອງຢູ່ເຄື່ອງກິນໃສ່ຖົງຂາດໆແລະເອົາເຫລົ້າອະງຸ່ນໃສ່ຖົງໜັງເກົ່າໆຈົນຂາດແລະມີຮອຍຕາບ ເສື້ອຜ້າແລະເກີບທີ່ພວກເຂົາໃສ່ກໍເກົ່າແລະຂາດຈົນພໍຖິ້ມແລ້ວ ເຮັດເໝືອນກັບວ່າພວກເຂົາເດີນທາງມາພົບຊາວອິສຣາເອນໄກແສນໄກ. ເຂົ້າຈີ່ຂອງພວກເຂົາຖືມາກິນນໍາທາງຈົນແຂງແລະຕົກໂຫມະ.

ເປັນຫຍັງພວກເຂົາຈຶ່ງມີຄວາມຄິດແລະເຮັດການຫລັກຫູຫລັກຕາຢ່າງນີ້? ພວກເຂົາຢາກຈະມາ "ເຮັດຂໍ້ຕົກລົງກັບ" ຊາວອິສຣາເອນ. ພຣະເຈົ້າສັ່ງຫ້າມບໍ່ໃຫ້ຊາວອິສຣາເອນເຊັນສັນຍາໃດໆກັບຄົນທີ່ອາສັຍຢູ່ໃນແຜ່ນດິນການາອານ. ເຖິງຢ່າງໃດກໍຕາມ ພຣະອົງຊົງອະນຸຍາດໃຫ້ພວກເຂົາເຮັດຂໍ້ຕົກລົງກັບ "ເມືອງທີ່ຢູ່ຫ່າງໄກອອກໄປຈາກດິນແດນທີ່ພວກເຂົາພວມຈະເຂົ້າໄປຕັ້ງຫລັກແຫລ່ງຢູ່ນັ້ນ" (ພຣະບັນຍັດສອງ 20:10-15). "ຂໍ້ຕົກລົງ" (9:6) ເປັນຄໍາທີ່ໃຊ້ທົ່ວໄປໃນພຣະສັນຍາເດີມ ຊຶ່ງເປັນການຕົກລົງເຫັນພ້ອມທັງສອງກົ້ມສອງຝ່າຍລະຫວ່າງມະນຸດ ຫລື ລະຫວ່າງພຣະເຈົ້າ

ກັບອິສຣາເອນ.
ຜູ້ທີ່ນຳຂ່າວສານມາຈາກກິເບໂອນຍອມຮັບວ່າພວກເຂົາ "ມາຂໍຮັບໃຊ້" (9:8, 9, 11) ຄົນອິສຣາເອນ. ຄຳເວົ້າຂອງພວກເຂົາຊີ້ໃຫ້ເຫັນວ່າພວກເຂົາຮັບຮູ້ໄວ້ລ່ວງໜ້າແລ້ວໃນຂໍ້ຕົກລົງນັ້ນ. ການຕົກລົງກັນລະຫວ່າງປະເທດໃນສມັຍບູຮານ ຫລືພັນທະສັນຍາລະຫວ່າງປະເທດມະຫາອຳນາດແລະປະເທດກຳລັງໜ້ອຍ. ປະເທດກຳລັງໜ້ອຍຈະຕ້ອງສາບານ ໃຫ້ມີຄວາມຈົ່ງຮັກພັກດີໃນການຮັບໃຊ້ປະເທດມະຫາອຳນາດ ໃນຂນະດຽວກັນປະເທດມະຫາອຳນາດຈະໃຫ້ຄວາມປົກປ້ອງຮັກສາບໍ່ໃຫ້ປະເທດໃດໆມາຂົ່ມເຫງພວກເຂົາ.

ຊາວກິເບໂອນສະແດງໄດ້ດີຫລາຍ (9:12-13). ພວກເຂົາເອົາເຂົ້າຈີ່ແຫ້ງທີ່ຕົກໂຫມະ ຖົງໃສ່ເຫລົ້າອະງຸ່ນຂາດ ເຄື່ອງນຸ່ງແລະເກີບເກົ່າທີ່ຂາດແລ້ວອອກມາໃຫ້ພວກຜູ້ນຳອິສຣາເອນເບິ່ງ. ທັງເລົ່າເຣື່ອງລາວການເດີນທາງໃຫ້ພວກເຂົາຟັງ ໃນຂໍ້ທີ 14 "ຊາວອິສຣາເອນໄດ້ຊີມອາຫານບາງສ່ວນຂອງພວກເຂົາ" ອາດຈະຫມາຍເຖິງການກວດກາເບິ່ງຂອງທີ່ນຳມາກໍໄດ້.

ຜູ້ທີ່ເລົ່າເຫດການຢາກໃຫ້ຜູ້ອ່ານຮູ້ວ່າ ແຜນການຫລອກລວງນີ້ຫລອກໄດ້ແຕ່ຊາວອິສຣາເອນ ແຕ່ວ່າຫລອກລວງພຣະເຈົ້າຂອງພວກເຂົາບໍ່ໄດ້. ຖ້າຫາກວ່າພວກເຂົາມາຖາມພຣະຜູ້ເປັນເຈົ້າກ່ຽວກັບເຣື່ອງນີ້ກ່ອນ ພວກເຂົາກໍຄົງຈະບໍ່ຖືກຫລອກລວງຢ່າງນີ້ (9:14).

ໂຢຊວຍໄດ້ຕົກລົງຕາມຄຳຮ້ອງຂໍຂອງຊາວກິເບໂອນ. ຄຳວ່າ "ມິດຕະພາບ" (9:15) ພາສາອັງກິດໃຊ້ຄຳວ່າ
"peace"
<u>ສັນຕິພາບ</u> ເປັນຊັບທີ່ໃຊ້ເພື່ອຜົນປໂຍດຂອງທັງສອງຝ່າຍໄດ້ຕົກລົງເຫັນພ້ອມປະຕິບັດຕາມຄຳຕົກລົງນັ້ນ. ຜູ້ນຳຂອງອິສຣາເອນໄດ້ໃຫ້ຄຳຫມັ້ນສັນຍາຕໍ່ຊາວກິເບໂອນແລ້ວພວກເຂົາກໍຕ້ອງຮັກສາຄຳເວົ້າຂອງພວກເຂົາ. ຄົນໃນສມັຍບູຮານຍຶດຖືຄຳຫມັ້ນສັນຍາຂອງພວກເຂົາຢ່າງຈິງຈັງ.

<u>ຊັຍຊະນະເຫນືອຜູ້ທີ່ຈະມາທຳລາຍ</u> (10:6-14, 40-42)
ກະສັດເຢຣູຊາເລັມໄດ້ທ້ອນໂຮມພວກກະສັດທັງຫລາຍຂອງຊາວອາໂມເພື່ອຕຽມກຳລັງໂຈມຕີຊາວກິເບໂອ ເພາະວ່າພວກເຂົາໄດ້ທຳສັນຍາກັບຊາວອິສຣາເອນ (10:1-5). ພວກເຂົາໄດ້ສົ່ງຄົນມາຮ້ອງຂໍຄວາມຊ່ອຍເຫລືອຈາກໂຢຊວຍ "ຢ່າປະຖິ້ມພວກຜູ້ຂ້າເລີຍ" ພາສາອັງກິດໃຊ້ຄຳວ່າ<u>ຢ່າປະຖິ້ມພວກຜູ້ຮັບໃຊ້ຂອງທ່ານເລີຍ</u> ຈຶ່ງໄດ້ເຕືອນໂຢຊວຍວ່າພວກເຂົາເປັນຜູ້ຮັບໃຊ້ຂອງຊາວອິສຣາເອນ (10:6). ນອກເຫນືອໄປຈາກນັ້ນອີກ ໂຢຊວຍໄດ້ຕົກລົງສ້າງມິດຕະພາບກັບພວກເຂົາ (9:15). ໂຢຊວຍໄດ້ຕອບສນອງຕໍ່ຄຳຮ້ອງຂໍຂອງຊາວກິເບໂອ ການກະທຳຢ່າງນີ້ສົມຄວນໄດ້ຮັບຄວາມຍ້ອງຍໍ (10:7). ເຖິງແມ່ນວ່າພວກເຂົາຖືກຊາວກິເບໂອຫລອກລວງມາແລ້ວກໍຕາມ ແຕ່ພວກເຂົາໄດ້ເຮັດຕາມຄຳສັນຍາທີ່ເຄີຍສັນຍາໄວ້ກັບຊາວກິເບໂອ (10:8).

ກອງທັບອິສຣາເອນໄດ້ເດີນທາງຫມົດຄືນຈາກກິນການໄປຍັງກິເບໂອ (10:9) ມີລະຍະທາງປະມານ 40 ກິໂລແມັດ. ໂຢຊວຍມີແຜນການເຂົ້າຫລອນໂຈມຕີຊາວອາໂມ ອາດຈະເປັນຕອນຂ້ອນຂີແຈ້ງສຳລັບວັນໃຫມ່. ຊາວອິສຣາເອນໄດ້ຮັບຊັຍຊະນະຈາກກອງທັບຂອງຊາວອາໂມ ບໍ່ແມ່ນຍ້ອນຍຸດທະວິທີການຮົບອັນສລາດຂອງອິສຣາເອນ. ໃນຂໍ້ທີ 9-14 ໄດ້ຢືນຢັນຄັກແນ່ວ່າ ໃນການສູ້ຮົບພຣະຜູ້ເປັນເຈົ້າເປັນຜູ້ອອກຫນ້າທຳໃຫ້ສັດຕູຂອງອິສຣາເອນເສັຽຂວັນແລ້ວພວກເຂົາຈຶ່ງໄລ່ຂ້າພວກສັດຕູນັ້ນ. ສ່ວນຫລາຍໄດ້ປົບຫນີໄປ ພຣະເຈົ້າ "ບັນດານໃຫ້ຫມາກເຫັບໃຫຍ່ຈາກທ້ອງຟ້າຕົກຖືກພວກເຂົາ." ສິ່ງທີ່ຫນ້າສົນໃຈນັ້ນມີຢູ່ອີກວ່າຫມາກເຫັບຕົກໃນຣະດູຮ້ອນ. ພວກທີ່ຖືກຫມາກເຫັບຕົກໃສ່ຕາຍນັ້ນຍັງຫລາຍກວ່າພວກທີ່ຕາຍຍ້ອນອາວຸດຍຸດທະພັນຂອງກອງທັບອິສຣາເອນ. ພຣະເຈົ້ານຳຊັຍຊະນະມາໃຫ້ອິສຣາເອນ.

ພຣະອົງຊົງມີວິທີທາງຂອງພຣະອົງຢູ່ສເມີ.

ໃນເຫດການທີ່ຈະກ່າວເຖິງນີ້ ຄຳຖາມອັນສຳຄັນທີ່ຈະຖາມນັ້ນມີຢູ່ວ່າ ພຣະເຈົ້າໄດ້ເຂົ້າແຊກແຊງໃນເສິກສົງຄາມເພື່ອຊາວອິສຣາເອນຢ່າງໃດ. ໃນເຫດການນີ້ພຣະຜູ້ເປັນເຈົ້າຊົງໃຊ້ທັມມະຊາດທີ່ພຣະອົງສ້າງຂຶ້ນມາເຊັ່ນດວງອາທິດແລະດວງເດືອນທີ່ຢູ່ເທິງທ້ອງຟ້າ. ພຣະອົງໃຫ້ເກີດຂຶ້ນຕອນດວງອາທິດຈະຂຶ້ນຫລືວ່າຕອນທ່ຽງກໍໄດ້.

ໃນຂນະທີ່ໂຢຊວຍກ່າວແກ່ພຣະຜູ້ເປັນເຈົ້າຕໍ່ໜ້າຊາວອິສຣາເອນ ດວງອາທິດແລະດວງເດືອນປາກົດຢູ່ເທິງທ້ອງຟ້າ. ນອກເຫນືອໄປກວ່ານັ້ນ ລາວກ່າວເຖິງການພົວພັນລະຫວ່າງດວງອາທິດກັບເມືອງກິເບໂອນແລະດວງດາວກັບຮ່ອມພູໄອຢາໂລນ (10:12). ເມືອງກິເບໂອຢູ່ທິດຕາເວັນອອກແລະໄອຢາໂລນຢູ່ທາງທິດຕາເວັນຕົກຂອງເມືອງກິເບໂລນປະມານສິບຫົກກິໂລແມັດ.

ໂຢຊວຍບອກໃຫ້ດວງອາທິດ "ຈົ່ງຢຸດຢູ່" (10:12). ດວງອາທິດແລະດວງເດືອນຈຶ່ງຈັ້ງຢູ່ບໍ່ເຄື່ອນຍ້າຍໄປບ່ອນໃດຈົນກວ່າຊາດອິສຣາເອນໄດ້ຮັບຊັຍຊະນະຈາກສັດຕູ.

ມີຄຳຖາມເກີດຂຶ້ນກ່ຽວກັບ "ປື້ມຂອງຢາຊາ" (10:13). ຜູ້ທີ່ເລົ່າເຫດການໄດ້ອ້າງອີງເຖິງປື້ມຫົວນີ້. ໃນພຣະທັມ 2 ຊາມູເອນ 1:18 ກໍໄດ້ອ້າງອີງເຖິງປື້ມນີ້ຄືກັນ. "ປື້ມຂອງຢາຊາ" ເປັນເຫມືອນກັບວ່າເປັນປື້ມທີ່ໄດ້ບັນທຶກເຣື່ອງລາວຂອງວິຣະບູຣຸດຂອງອິສຣາເອນແລະຂຽນເປັນກາບກອນ. ຜູ້ທີ່ເລົ່າເຫດການບອກໃຫ້ຜູ້ອ່ານໄປອ່ານປື້ມຂອງເອຢາຊາຕື່ມອີກ.

"ພຣະຜູ້ເປັນເຈົ້າໄດ້ຟັງມະນຸດ" (10:14). ໃນທີ່ນີ້ບໍ່ໄດ້ຫມາຍຄວາມວ່າພຣະເຈົ້າຟັງຄຳແນະນຳຂອງມະນຸດ ແຕ່ວ່າພຣະເຈົ້າຕອບຄຳອະທິຖານຂອງຜູ້ທີ່ເຊື່ອຟັງພຣະອົງ. ພຣະເຈົ້າເຂົ້າຂ້າງອິສຣາເອນກໍເພາະວ່າໂຢຊວຍອ້ອນວອນທູນຂໍຈາກພຣະເຈົ້າ (10:12). ອີກອັນນຶ່ງ ພຣະອົງຊົງມີພຣະປະສົງຕ້ອງການໃຫ້ຊາວອິສຣາເອນໄດ້ຢຶດເອົາແຜ່ນດິນການາອານຢູ່ແລ້ວ ຕາມທີ່ພຣະອົງຊົງສັນຍາໄວ້ກັບອັບຣາຮາມວ່າຈະໃຫ້ແຜ່ນດິນນີ້ແກ່ເຊື້ອສາຍຂອງລາວ (ປະຖົມມະການ 12:6-7).

ຊາວອິສຣາເອນໄດ້ຮັບຊັຍຊະນະທາງພາກໃຕ້ແລະການສູນເສັຽຊີວິດຂອງຜູ້ນຳຂອງຊາວອາໂມ (10:16-28) ເປັນຕົວຢ່າງອັນນຶ່ງທີ່ເຮັດໃຫ້ເຫັນວ່າພວກເຂົາໄດ້ຕີເອົາເມືອງຕ່າງໆທາງພາກໃຕ້ຂອງແຜ່ນດິນການາອານ (10:29-43). ຜູ້ເລົ່າເຫດການໄດ້ສລຸບເຣື່ອງລາວການຊັຍຊະນະຂອງຊາວອິສຣາເອນ (10:40-42).

ພາກພື້ນພູມີສາດທັງຫມົດຂອງພາກໃຕ້ຂອງແຜ່ນດິນການາອານໄດ້ບັນທຶກໄວ້ໃນຂໍ້ທີ 40. "ເຂດພູດອຍ" ແມ່ນຂົງເຂດຢູດາຍ. "ຕາມລາດພູ" ແມ່ນດິນແຫ້ງແລ້ງເຫມືອນທະເລຊາຍໄປຈົນເຖິງພາກໃຕ້ຂອງເມືອງເຮັບໂລນ. "ຕາມຕີນພູທາງຕາເວັນຕົກ" ຮ່ອມພູຕ່າງໆໄປຈົນຮອດທາງຝັ່ງທະເລເມດີແຕຣາເນ. "ໂກເຊນ" (10:41) ໃນທີ່ນີ້ບໍ່ແມ່ນໃນປະເທດເອຢິບ ແຕ່ແມ່ນບ້ານແຫ່ງນຶ່ງຢູ່ທາງໃຕ້ຂອງຢູດາ (15:51).

ຂໍ້ທີ 42 ເປັນການສລຸບອັນສັ້ນໆເຖິງການຊັຍຊະນະດິນແດນທັງຫມົດໃນຂົງເຂດການາອານ. ຫລັງຈາກຜູ້ເລົ່າເຫດການໄດ້ບັນລະຍາຍການພ່າຍແພ້ຂອງເຈົ້າຢາບິນກະສັດແຫ່ງຮາໂສທາງພາກເຫນືອ (11:1-11) ລາວໄດ້ສລຸບການຊັຍຊະນະຂອງໃນຂົງເຂດນັ້ນ (11:12-23) ແລະພວກກະສັດທີ່ໄດ້ເສັຽຊັຍ (12:1-24).

ເຫມືອນກັບວ່າຜູ້ເລົ່າເຫດການໃນຕອນນີ້ເວົ້າວ່າເມືອງຕ່າງໆໃນແຜ່ນດິນການາອານຈະຕົກເປັນຂອງຊາວອິສຣາເອນໝົດ ແຕ່ພວກເຮົາຮູ້ແລ້ວວ່າບໍ່ເປັນຢ່າງນັ້ນ.  ພຣະຄັມພີໄດ້ບອກພວກເຮົາວ່າ ຊາວອິສຣາເອນບໍ່ໄດ້ຂັບໄລ່ ຫລືຄອບຄອງໄດ້ໝົດທັງແຜ່ນດິນໃນສມັຍຂອງໂຢຊວຍ (ຜູ້ປົກຄອງ 1:1-2:5). ຕາມຄວາມຈິງແລ້ວ ໃນຕົວກຸງເຢຣູຊາເລັມນັ້ນເອງຍັງມີພວກເຢບຸດອາສັຍຢູ່ (15:63). ເຖິງຈະເປັນຢ່າງໃດກໍຕາມ ຜູ້ເລົ່າເຫດການໄດ້ສລຸບວ່າ "ພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງອິສຣາເອນໄດ້ສູ້ຮົບເພື່ອຊາດອິສຣາເອນ."

<u>ຈັດການກັບຄວາມຫລອກລວງ</u>

ລາວບອກວ່າຊື່ຂອງລາວແມ່ນທ້າວແຈັກ.  ລາວເລົ່າເຣື່ອງຄວາມທຸກຍາກຂອງລາວໃຫ້ເຈົ້າຟັງແລະລາວຮ້ອງຂໍໃຫ້ເຈົ້າຊ່ອຍເຫລືອ. ເຈົ້າຕ້ອງໄດ້ຕຶກຕອງຢ່າງຄັກແນ່. ບໍ່ມີຄຣິສຕຽນຄົນໃດດອກທີ່ຈະເອົາເງິນໃຫ້ຄົນຕິດຢາເສບຕິດໄປຊື້ຢາເສບຕິດມາບຳເລີຄວາມຢາກຂອງເຂົາ.  ເຈົ້າຕັດສິນໃຈຈະຊ່ອຍລາວ ແລະເຈົ້າຫວັງວ່າລາວຈະບໍ່ຕົວະທ່ານ. ລາວຮັບເອົາດ້ວຍຄວາມຍິນດີ. ຕໍ່ມາເຈົ້າຮູ້ວ່າລາວຫລອກລວງເຈົ້າ. ເທື່ອໜ້າເຈົ້າຈະຈັດການກັບບັນຫານີ້ຢ່າງໃດ?

<u>ຄຳຖາມ</u>

1. ທ່ານເຄີຍຖືກຜູ້ໃດຫລອກລວງທ່ານບໍ່? ທ່ານມີຄວາມຮູ້ສຶກຢ່າງໃດ?

2. ການຮັກສາຄຳເວົ້າໃນຄຳໝັ້ນສັນຍາສຳຄັນຢ່າງໃດສຳລັບທ່ານ? ໃນວັທນະທັມແລະສັງຄົມຂອງພວກເຮົາ?

3. ທ່ານຄິດວ່າພຣະເຈົ້າຍັງໃຊ້ສິ່ງທີ່ພຣະອົງສ້າງຂຶ້ນໃນໂລກນີ້ເພື່ອໃຫ້ເປັນໄປຕາມພຣະປະສົງຂອງພຣະອົງບໍ່? ຖ້າເປັນໄປໄດ້ ພຣະອົງເຮັດຢ່າງໃດ?

4. ທ່ານຄິດວ່າການອະທິຖານເພື່ອກັນແລະກັນຈຳເປັນຢ່າງໃດ ແລະເປັນໄປໄດ້ຢ່າງໃດ?

ສຈ. ບຸນເຮັ່ງ ພົງປຣະພັນ

## ບົດຮຽນທີ 6
## ຈົ່ງເລືອກເອົາພຣະເຈົ້າ ວັນນີ້

---

ຂໍ້ພຣະຄັມພີສຳລັບບົດຮຽນ: ໂຢຊວຍ 24:1-3, 13-25

ຂໍ້ພຣະຄັມພີສຳລັບເບື້ອງຫລັງ: ໂຢຊວຍ 24

ຈຸດສຳຄັນຂອງບົດຮຽນນີ້: ພວກເຮົາຖືກຮ້ອງໃຫ້ມອບກາຍຖວາຍຈິດໃຈໃຫ້ກັບພຣະເຈົ້າຢ່າງເດັດຂາດ ແລະຮັບໃຊ້ພຣະອົງຈົນສຸດກຳລັງ ໃຫ້ສົມກັບວ່າພຣະອົງຊົງເປັນອົງພຣະຜູ້ເປັນເຈົ້າຂອງພວກເຮົາ.

ຄຳຖາມເພື່ອການສຳຫລວດ: ການມອບກາຍຖວາຍຈິດໃຈໃຫ້ກັບພຣະເຈົ້າຢ່າງເດັດຂາດ ແລະຮັບໃຊ້ພຣະອົງຈົນສຸດກຳລັງ ໃຫ້ສົມກັບວ່າພຣະອົງຊົງເປັນອົງພຣະຜູ້ເປັນເຈົ້າຂອງທ່ານ ເຮັດໃຫ້ຊີວິດຂອງທ່ານມີການປ່ຽນແປງອັນໃດແດ່?

ຈຸດປະສົງຂອງບົດຮຽນນີ້: ບົດຮຽນນີ້ຈະຊ່ອຍທ່ານມອບກາຍຖວາຍຈິດໃຈໃຫ້ກັບພຣະເຈົ້າຢ່າງເດັດຂາດ ແລະຮັບໃຊ້ພຣະອົງຈົນສຸດກຳລັງ ໃຫ້ສົມກັບວ່າພຣະອົງຊົງເປັນອົງພຣະຜູ້ເປັນເຈົ້າຂອງທ່ານ.

### ບົດຮຽນ

ຄຳນຳ

ເມື່ອພວກເຮົາມີການຕຶກຕອງຢ່າງຄັກແນ່ ໃນການເລືອກທາງເດີນຂອງຊີວິດທາງຝ່າຍຈິດວິນຍານຂອງພວກເຮົາໃຫ້ດີທີ່ສຸດ ແລະມີຜູ້ທີ່ພວກເຮົາໄວ້ວາງໃຈໄດ້ເປັນຜູ້ອະທິບາຍໃຫ້ພວກເຮົາເຫັນຢ່າງແຈ່ມແຈ້ງ. ພວກເຮົາຈຶ່ງສາມາດຮັບຮອງໄດ້ວ່າພວກເຮົາໄດ້ຕັດສິນໃຈຖືກແລ້ວ.

ການຕັດສິນໃຈທີ່ໄດ້ຕຶກຕອງແລ້ວ (24:1-3, 13)

ຖ້ອຍຄຳບົ່ງບອກໃຫ້ເຫັນວ່າ ການຮ້ອງປະຊຸມເທື່ອນີ້ມີຄວາມສຳຄັນຫລາຍ. ໂຢຊວຍໄດ້ເອີ້ນ "ເຜົ່າຕ່າງໆ" (24:1) ແລະກ່າວແກ່ "ຄົນເຫລົ່ານັ້ນ" (24:2). ຜູ້ເລົ່າເຫດການໃຊ້ຄຳວ່າ "ພວກເຖົ້າແກ່, ພວກຫົວຫນ້າ, ພວກຜູ້ປົກຄອງ, ແລະບັນດານາຍທະຫານ" (24:1) ເພື່ອໃຫ້ເຫັນຕຳແຫນ່ງການຈັດຕັ້ງຂອງຊົນຊາດອິສຣາເອນ. ພຣະເຈົ້າເປັນຜູ້ໃຫ້ໂຢຊວຍຮ້ອງປະຊຸມ ເພື່ອໃຫ້ທຸກຄົນ "ມາຢູ່ຊ້ອງຫນ້າພຣະເຈົ້າ" (24:1).

ປະຊາຊົນໄດ້ມາເຕົ້າໂຮມກັນຢູ່ຕໍ່ຫນ້າພຣະເຈົ້າແລະໂຢຊວຍທີ່ເມືອງຊີເຄມ. ເມືອງນີ້ຢູ່ຈຸດສູນກາງຂອງແຜ່ນດິນການາອານ ແລະເປັນເມືອງສຳຄັນໃນໂຊງເຂດຊາມາເຣັຽ. ຈົດຫມາຍຂອງອາມານາ (Amarna) (ສິບສີ່ສັດຕະວັດກ່ອນຄຣິສ
ຕະສັກກະຣາດ) ໄດ້ເປີດເຜີຍວ່າເມືອງນີ້ເປັນຈຸດສຳຄັນມາໄດ້ຫລາຍຮ້ອຍປີກ່ອນຊາວອິສຣາເອນໄດ້ມາຮອດ. ເມືອງນີ້ມີພຣະວິຫານໄວ້ເປັນບ່ອນນະມັສການພຣະບາອານ. ເຣື່ອງລາວເຫດການຍຶດຄອງຫົວເມືອງແລະບ້ານຕ່າງໆຕັ້ງແຕ່ພຣະທັມໂຢຊວຍບົດທີ 1-12 ເມືອງດັ່ງກ່າວນີ້ບໍ່ໄດ້ຢູ່ໃນລາຍຊື່ຂອງເມືອງແລະບ້ານຕ່າງໆທີ່ໂຢຊວຍໄດ້ຍຶດຄອງມາໄດ້ແຕ່ເຖິງຢ່າງໃດກໍຕາມ ເມືອງນີ້ເປັນເມືອງສຳລັບຜູ້ລີ້ພັຍ (20:7) ແລະເປັນເມືອງສຳລັບຊາວເລວີ. ເມືອງນີ້ອາດຈະເປັນເຫມືອນກັບບ້ານກິເບໂອນຊຶ່ງໂຢຊວຍໄດ້ມາໂດຍບໍ່ໄດ້ເສັຽກຳລັງທະຫານຢ່າງໃດເລີຍ.

ໂຢຊວຍຮູ້ວ່າຊາວອິສຣາເອນຈຳເປັນຈະຕ້ອງຕຶກຕອງໃຫ້ຄັກແນ່ໃນການຕັດສິນໃຈ ກ່ຽວກັບເຣື່ອງຄວາມຈົງຮັກພັກດີ

ລະຫວ່າງພວກເຂົາກັບພຣະເຈົ້າ. ຄວາມຈິງແລ້ວພຣະເຈົ້າໄດ້ເວົ້າກັບອິສຣາເອນໂດຍຜ່ານທາງໂຢຊວຍ ເຫມືອນກັບຜູ້ປະກາດພຣະທັມໄດ້ກ່າວຕໍ່ປະຊາຊົນ (24:2) "ພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງຊາດອິສຣາເອນໄດ້ກ່າວດັ່ງນີ້"). ລາວຢາກໃຫ້ຊາວອິສຣາເອນກ່ອນຈະຕັດສິນໃຈລົງໄປກໍໃຫ້ຄຶດເບິ່ງກ່ອນວ່າພຣະເຈົ້າໄດ້ເຮັດອັນໃດແດ່ເພື່ອພວກເຂົາ.

ສລຸບເຣື່ອງປະວັດສາດທີ່ຜ່ານມາ (24:2-13) ເລີ້ມຈາກເຕຣາ ພໍ່ຂອງອັບຣາຮາມ (24:2) ຢູ່ "ທາງຟາກແມ່ນ້ຳເອີຟະຣັດ" (24:2) ເມໂຊໂປຕາເມັຽ. ເມື່ອປະຕິບັດຕາມປະເພນີຮີດຄອງຂອງປະຊາຊົນໃນເຂດນັ້ນ ເຕຣາໄດ້ນະມັສການພຣະຫລາຍອົງ. ຕໍ່ມາ ພຣະເຈົ້າໄດ້ຮ້ອງອັບຣາຮາມໃຫ້ອອກຈາກຄອບຄົວຂອງລາວ ຮ່ວມທັງແຜ່ນດິນແລະຮີດຄອງຂອງລາວອີກດ້ວຍ (ປະຖົມມະການ 12:1-4). ພຣະເຈົ້າເຊື້ອເຊີນໃຫ້ອັບຣາຮາມໄວ້ວາງໃຈໃນພຣະອົງ. ຖ້າຫາກວ່າລາວເຮັດຕາມ ພຣະອົງສັນຍາວ່າຈະມອບແຜ່ນດິນໃຫມ່ໃຫ້ລາວແລະໃຫ້ລາວມີລູກຫລານຫລາຍຈົນນັບບໍ່ຫມົດ. ແຜ່ນດິນການາອານນັ້ນ ຄືແຜ່ນດິນພຣະສັນຍາ ແລະອີຊາກລູກຊາຍຂອງລາວເປັນຜູ້ສືບທອດຕໍ່ໄປ (24:3).

ພຣະສັນຍາຂອງພຣະເຈົ້າສືບທອດຕໍ່ໄປຈົນເຖິງຢາໂຄບ (24:4). ຄອບຄົວນີ້ແຜ່ອອກໄປເປັນສິບສອງຕະກູນ ແລະພຣະເຈົ້າໄດ້ນຳພວກເຂົາອອກຈາກການເປັນຂ້າທາດຂອງປະເທດເອຢິບ (24:5-7). ພຣະອົງໄດ້ນຳພວກເຂົາໄປແຜ່ນດິນພຣະສັນຍາ ໂດຍໃຫ້ພວກເຂົາໄດ້ຮັບຊັຍຊະນະເຫນືອກະສັດຕ່າງໆໃນພາກເຫນືອຂອງຢໍແດນ (24:8-10) ແລະປະຊາຊົນທີ່ເຄີຍຢູ່ໃນແຜ່ນດິນການາອານ (24:11-12). ເພື່ອເນັ້ນໃຫ້ເຫັນວ່າພຣະອົງໄດ້ເລືອກເອົາຊົນຊາດອິສຣາເອນ ແລະໄດ້ປົກປັກຮັກສາພວກເຂົາຕລອດມາ. ພວກເຂົາຈຶ່ງໄດ້ອາສັຍຢູ່ໃນດິນແດນທີ່ມີທຸກສິ່ງທີ່ພວກເຂົາຕ້ອງການຊຶ່ງພຣະອົງໄດ້ປະທານໃຫ້ແກ່ພວກເຂົາ (24:13). ພວກເຂົາບໍ່ໄດ້ຍຶດຄອງແຜ່ນດິນການາອານດ້ວຍກຳລັງຂອງພວກເຂົາເອງ. ແມ່ນຂອງພຣະຣາຊທານຈາກພຣະເຈົ້າ. ໂຢຊວຍຈຶ່ງໄດ້ຫນູນໃຈພວກເຂົາໃຫ້ຕຶກຕອງຢ່າງຖ້ວນທີ່ໃນທຸກສິ່ງທີ່ພຣະເຈົ້າໄດ້ກະທຳເພື່ອພວກເຂົາໃນການຕັດສິນໃຈເທື່ອນີ້.

<u>ການຕັດສິນໃຈທີ່ໄດ້ອະທິບາຍຢ່າງແຈ່ມແຈ້ງ</u> (24:14-22)

ຫລັງຈາກໂຢຊວຍໄດ້ເລົ່າເຣື່ອງປະວັດທີ່ຜ່ານມາແລ້ວ ລາວກ່າວວ່າ "ສະນັ້ນ" ແມ່ນຄຳເນັ້ນໃຫ້ຜູ້ຟັງເຫັນວ່າພວກເຂົາຈະເຮັດຢ່າງໃດກ່ຽວກັບເຣື່ອງນີ້. ລາວຈຶ່ງເນັ້ນໃຫ້ເຫັນວ່າພຣະເຈົ້າຊົງມີພຣະຄຸນອັນລົ້ນເຫລືອຕໍ່ຊາວອິສຣາເອນ ພວກເຂົາຈະຕ້ອງຕັດສິນໃຈຢ່າງຄັກແນ່. ຜູ້ຊ່ຽວຊານໃນພຣະສັນຍາເດີມຫລາຍຄົນມີຄວາມເຫັນວ່າ ໂຄງຮ່າງຂອງພຣະທັມບົດນີ້ແມ່ນເປັນຮູບຂອງການຕົກລົງກັນລະຫວ່າງປະເທດໃນສມັຍບູຮານ ຫລືພັນທະສັນຍາລະຫວ່າງປະເທດມະຫາອຳນາດແລະປະເທດນ້ອຍໆ. ປະເທດນ້ອຍໆຈະຕ້ອງສາບານຕົນ ໃຫ້ມີຄວາມຈົງຮັກພັກດີໃນການຮັບໃຊ້ປະເທດມະຫາອຳນາດນັ້ນແຕ່ປະເທດດຽວ ໃນຂນະດຽວກັນປະເທດມະຫາອຳນາດນັ້ນຈະໃຫ້ຄວາມປົກປ້ອງຮັກສາບໍ່ໃຫ້ປະເທດໃດໆມາຂົ່ມເຫງພວກເຂົາ. ໃນທຳນອງດຽວກັນນັ້ນແຫລະ ໂຢຊວຍຕ້ອງການໃຫ້ປະຊາຊົນຂອງອິສຣາເອນປະກາດຮັບເອົາພຣະຢາໂຮວາເປັນອົງພຣະຜູ້ເປັນເຈົ້າອົງດຽວຂອງພວກເຂົາ.

ໃນຂໍ້ທີ 14 ມີຄຳສຳຄັນໃນພາສາເຮັບເຣີທີ່ຜູກພັນກັບຄວາມຈິງຂອງເຣື່ອງຈິດວິນຍານ. ພຣະຄັມພີພາສາລາວສະບັບ 1979 ໃຊ້ຄຳວ່າ "ຂາບໄຫວ້" ແລະ ສະບັບພາສາຂອງຄົນທົ່ວໄປໃຊ້ຄຳວ່າ "ຍົກຍໍໃຫ້ກຽດ." ສຳລັບພາສາອັງກິດໃຊ້ຄຳວ່າ "fear" ບໍ່ໄດ້ຫມາຍຄວາມວ່າໃຫ້ຢ້ານພຣະເຈົ້າ ແຕ່ຫມາຍຄວາມວ່າຮັບຮູ້ພຣະລັກສະນະຂອງພຣະເຈົ້າ ຢືນຢູ່ຕໍ່ພຣະພັກຂອງພຣະອົງດ້ວຍຄວາມຢຳເກງ ແລະຖວາຍກຽດແດ່ພຣະອົງ. ອີກຄຳນຶ່ງແມ່ນ "ບົວຣະບັດຮັບໃຊ້" ຄຳນີ້ມີຄວາມຫມາຍເຖິງຂ້າທາດຮັບໃຊ້ເຈົ້ານາຍຂອງຕົນ. ຕົ້ນຕໍຂອງຄຳນີ້ມາຈາກຄຳວ່າ "ສັດຊື່" ປະກອບດ້ວຍຄວາມຈິງ, ຫມັ້ນທ່ຽງ, ອາສັຍໄດ້. ໂຢຊວຍເລັ່ງໃຫ້ຊາວອິສຣາເອນຮັບໃຊ້ພຣະເຈົ້າດ້ວຍຄວາມຈົງຮັກພັກດີດ້ວຍບໍຣິສຸດໃຈ. ພາສາອັງກິດຍັງມີອີກຄຳນຶ່ງຕື່ມເຂົ້າມາ "all" (serve him with all faithfulness) ຫມາຍຄວາມວ່າຮັບໃຊ ້ພຣະອົງດ້ວຍ

ຄວາມສັດຊື່ຫມົດທັງຊີວິດແລະຈິດໃຈ. ຄຳວ່າ "ຫມົດທັງ ຫລືວ່າ ທັງຫມົດ" ມີຄວາມຫມາຍມາຈາກການນຳເອົາສັດຖວາຍມາໃຫ້ພຣະເຈົ້າ. ສັດໂຕນັ້ນຈະຕ້ອງເປັນສັດທີ່ບໍ່ມີຈຸດດ່າງພ້ອຍຫມົດທັງໂຕ.

ຖ້າຫາກວ່າຊາວອິສຣາເອນຍອມ "ປະຖິ້ມບັນດາພຣະທີ່ປູ່ຍ່າຕາຍາຍ" ຂອງພວກເຂົາເຄີຍຂາບໄຫວ້ ກໍຫມາຍຄວາມວ່າພວກເຂົາຈະຂາບໄຫວ້ແຕ່ພຣະຢາໂຮວາເທົ່ານັ້ນ. ພວກເຂົາຈະຕ້ອງຖິ້ມຮູບໂຄຣົບ ຫລືອັນໃດກໍຕາມທີ່ມີສັນຍາລັກເຖິງສິ່ງນັບຖືທີ່ພວກເຂົາເຄີຍຖືວ່າເປັນສິ່ງສັກກາຣະບູຊາຂອງພວກເຂົາ. ເຖິງແມ່ນວ່າໃນພຣະສັນຍາເດີມບໍ່ມີຖ້ອຍຄຳໃດໆທີ່ກ່າວໂທດເຖິງການຂາບໄຫວ້ຮູບໂຄຣົບໃນຖ້ານກາງໄພ່ພົນຂອງພຣະເຈົ້າ ໃນສມັຍບັນພະບຸຣຸດຂອງພວກເຂົາເປັນຂ້າທາດໃນປະເທດເອຢິບ ເບິ່ງເຫມືອນກັບວ່າການຂາບໄຫວ້ຮູບໂຄຣົບອາດເກີດຂຶ້ນໄດ້.

ຕໍ່ມາໃນສມັຍຂອງສມັຍໂຢຊວຍ ພວກເຂົາອາດຈະຖືກທົດລອງໃຫ້ຂາບໄຫວ້ຮູບໂຄຣົບເຫມືອນກັບບັນພະບຸຣຸດຂອງພວກເຂົາຖືກມາແລ້ວ (24:15). ໂຢຊວຍໃຫ້ຊາວອິສຣາເອນຕັດສິນໃຈເລືອກຈະຂາບໄຫວ້ພຣະຢາໂຮວາ ຫລືຈະຂາບໄຫວ້ພຣະອື່ນໆ. ເພື່ອນບ້ານຂອງພວກເຂົາ (ບໍ່ແມ່ນຄົນອິສຣາເອນ) ບໍ່ຈຳເປັນຕ້ອງຕັດສິນໃຈເລືອກວ່າຈະຂາບໄຫວ້ພຣະອົງນີ້ຫລືພຣະອົງນັ້ນ ເພາະວ່າພວກເຂົາຂາບໄຫວ້ຫມົດທຸກອົງ. ສຳລັບຊາວອິສຣາເອນຕ້ອງໄດ້ຕັດສິນໃຈເລືອກເພາະວ່າພຣະຢາໂຮວາໄດ້ຕັດໄວ້ວ່າມີພຣະອົງແລ້ວບໍ່ມີພຣະອື່ນ. ພຣະຜູ້ເປັນເຈົ້າບໍ່ໄດ້ບັງຄັບໃຫ້ຜູ້ໃດຂາບໄຫວ້ພຣະອົງ. ພຣະອົງໃຫ້ພວກເຂົາເປັນຜູ້ເລືອກ ຖ້າພວກເຂົາຕັດສິນໃຈເລືອກເອົາພຣະອົງ ພວກເຂົາຈະມີພຣະອື່ນບໍ່ໄດ້.

ໂຢຊວຍບໍ່ໄດ້ບັງຄັບຈິດໃຈຂອງຊາວອິສຣາເອນ. ລາວບໍ່ໄດ້ບັງຄັບວ່າ ອັນນີ້ແມ່ນທາງທີ່ຖືກຕ້ອງແລ້ວໃຫ້ພວກເຂົາຮັບເອົາ. ລາວບໍ່ສາມາດຈະຕັດສິນໃຈເພື່ອຜູ້ໃດອີກດ້ວຍ. ເຖິງຢ່າງໃດກໍຕາມ ລາວສາມາດບອກພວກເຂົາໃນການຕັດສິນໃຈຂອງລາວ. ຜູ້ນຳທີ່ແຂງແຮງຄົນນີ້ກ້າປະກາດຕົວວ່າສຳລັບລາວແລ້ວລາວຈະຈົງຮັກພັກດີຕໍ່ພຣະຢາໂຮວາພຽງແຕ່ອົງດຽວ. ລາວມີຄວາມຕັ້ງໃຈຈະນຳພາຫມົດທຸກຄົນໃນຄອບຄົວຂອງລາວຫລືຜູ້ທີ່ລາວຊັກຊວນອອນໃຈໄດ້ໃຫ້ຮັບໃຊ້ພຣະຜູ້ເປັນເຈົ້າ. ຜູ້ນຳຝ່າຍຈິດວິນຍານທີ່ເອົາແບບຢ່າງຂອງໂຢຊວຍຈະດຳເນີນໄປໄດ້ດີ. ລາວເປັນຕົວຢ່າງທີ່ດີໃຫ້ຄົນອື່ນປະຕິບັດຕາມ ໂດຍປາສຈາກການບັງຄັບແລະຂູ່ເຂັນ.

ປະຊາຊົນອິສຣາເອນເຫັນພ້ອມກັບໂຢຊວຍ. ພວກເຂົາເຫັນພ້ອມວ່າ ພຣະເຈົ້າໄດ້ກະທຳຫລາຍຢ່າງເພື່ອພວກເຂົາແລະເປັນພຣະຄຸນອັນໃຫຍ່ຫລວງທີ່ໄດ້ປະທານແຜ່ນດິນທີ່ພວກເຂົາອາສັຍຢູ່ນີ້ (24:17-18). ພວກເຂົາຮັບຮອງໃນການຕັດສິນໃຈຂອງລາວ. ພວກເຂົາປະກາດວ່າ ພວກເຂົາຈະຮ່ວມກັບລາວອຸທິດຕົນຂາບໄຫວ້ແລະຮັບໃຊ້ພຣະຢາໂຮວາພຽງແຕ່ອົງດຽວ (24:16, 18).

ທຳອິດເມື່ອໄດ້ຟັງຄຳຕອບຂອງໂຢຊວຍກ່າວຕໍ່ປະຊາຊົນອິສຣາເອນນັ້ນເປັນຖ້ອຍຄຳທີ່ຫນ້າວິຕົກຫລາຍທີ່ສຸດທີ່ບໍ່ເຄີຍໄດ້ຍິນມາກ່ອນໃນພຣະທັມທັງຫມົດຂອງພຣະສັນຍາເດີມ (24:19-20). ລາວປະກາດຢ່າງກ້າຫານຕໍ່ປະຊາຊົນອິສຣາເອນວ່າ ພວກເຂົາບໍ່ອາດຈະບົວຣະບັດຮັບໃຊ້ພຣະເຈົ້າໄດ້ຕາມທີ່ພວກເຂົາໄດ້ສັນຍານັ້ນ. ລາວບໍ່ຢາກໃຫ້ພວກເຂົາຕັດສິນໃຈລົງໄປໂດຍບໍ່ເຂົ້າໃຈຄັກແນ່ແລະບໍ່ໄດ້ຕຶກຕອງຢ່າງທີ່ຖ້ວນ ກໍອາດເປັນໄປໄດ້. ລາວບໍ່ຢາກໃຫ້ພວກເຂົາເຂົ້າໃຈວ່າການໄວ້ວາງໃຈພຣະເຈົ້າເປັນເຣື່ອງງ່າຍ <u>ຂ້ອຍກໍເຮັດໄດ້</u> ແຕ່ບໍ່ມີການເສັຽສລະແລະບໍ່ມີການຝຶກຝົນຕົນເອງໃຫ້ຈະເຣີນຂຶ້ນໃນຄວາມເຊື່ອ.

ຄຳວ່າ "ບໍຣິສຸດ" (24:19) ບັນລະຍາຍເຖິງພຣະລັກສະນະອັນພິເສດສຸດຂອງພຣະເຈົ້າ. ພຣະເຈົ້າທີ່ "ຫວງແຫນ" ພຣະອົງປະຕິເສດບໍ່ໃຫ້ໄພ່ພົນຂອງພຣະອົງໄປມົ້ວສຸມກັບພຣະອື່ນ ເພາະວ່າພຣະອົງບໍ່ຕ້ອງການມີຄູ່ແຂ່ງ. ພຣະອົງຊົງປະທານຄວາມຮັກທັງຫມົດໃຫ້ໄພ່ພົນຂອງພຣະອົງ ແລະພຣະອົງກໍກາງຕໍ່ຄວາມຮັກທັງຫມົດຈາກໄພ່ພົນຂອງພຣະອົງ

ຄືນ. ບໍ່ວ່າໃຜກໍຕາມຢ່າໄດ້ຖືເບົາໃນຖ້ອຍຄໍາຂອງຂໍ້ທີ 20. ພຣະອົງລົງໂທດຜູ້ທີ່ຫັນໜີຈາກພຣະອົງ. ໃນຂະນະດຽວກັນ ໃຫ້ເບິ່ງພຣະທັມຂໍ້ອື່ນດ້ວຍທີ່ກ່າວເຖິງພຣະຄຸນການໃຫ້ອະພັຍໃນຄວາມຮັກຂອງພຣະອົງ.

ປະຊາຊົນຢືນຢັດໃນການຕັດສິນໃຈຂອງພວກເຂົາ (24:21) ແຕ່ວ່າ ບາງທີມີຜູ້ທີ່ມີຄວາມຮູ້ສຶກຢ່າງແຮງກ້າແລະໄດ້ຕັດສິນໃຈເດັດຂາດຈະຮັບໃຊ້ພຣະເຈົ້າ. ພວກເຂົາເຊື່ອໜັ້ນຜູ້ນໍາຂອງພວກເຂົາ. ລາວບໍ່ໄດ້ປ່ອຍປະລະເລີຍພວກເຂົາ. ລາວຊ່ອຍອະທິບາຍໃຫ້ພວກເຂົາຢ່າງແຈ່ມແຈ້ງ ຄວາມໝາຍອັນແທ້ຈິງຂອງການບົວລະບັດຮັບໃຊ້ພຣະເຈົ້າດ້ວຍຄວາມສັດຊື່ໝົດທັງຊີວິດແລະຈິດໃຈ. ລາວຕ້ອງການໃຫ້ພວກເຂົາມີຄວາມຮອບຮູ້ໃນການຕັດສິນໃຈຂອງພວກເຂົາໂດຍປາສຈາກການບັງຄັບໃດໆທັງສິ້ນ. ພວກເຂົາຈຶ່ງປະກາດ ຫລືເປັນຄໍາພຍານທີ່ມີຄວາມສມັກໃຈໃນການຕັດສິນໃຈຂອງພວກເຂົາ.

<u>ການຕັດສິນໃຈທີ່ໄດ້ຖືກຮັບຮອງແລ້ວ</u> (24:23-25)

"ສະນັ້ນ" (24:23) ຄໍານີ້ແມ່ນຄໍາດຽວກັນກັບໃນຂໍ້ທີ 14. ປະຊາຊົນອິສຣາເອນໄດ້ກ່າວເຖິງການຕັດສິນໃຈຂອງພວກເຂົາ. ພວກເຂົາປາຖນາຈະອຸທິດຕົນຮັບໃຊ້ພຣະຢາໂຮວາອົງດຽວເທົ່ານັ້ນ ຄືພຣະເຈົ້າຂອງອິສຣາເອນ. ໂຢຊວຍໄດ້ຮ້ອງຂໍພວກເຂົາແລ້ວ (24:14) ລາວຮຽກຮ້ອງໃຫ້ພວກເຂົາປະຖິ້ມພຣະອື່ນໆ ຫລືຮູບໂຄຣົບທີ່ພວກເຂົາຍັງມີຢູ່. ຄວາມແຕກຕ່າງໃນຂໍ້ນີ້ ລາວບໍ່ໄດ້ບັນລະຍາຍວ່າເປັນພຣະຂອງປູ່ຍ່າຕາຍາຍຂອງພວກເຂົາອີກ. ລາວເອີ້ນພຣະພວກນີ້ເປັນ "ພຣະຂອງຊາວຕ່າງດ້າວທີ່ພວກເຈົ້າມີຢູ່" (24:23).

ປະຊາຊົນປະຕິບັດຕາມດ້ວຍຄວາມເຕັມໃຈ. ພວກເຂົາປະກາດຕົນວ່າຈະຮັບໃຊ້ພຣະເຈົ້າ. ພວກເຂົາຈະ "ເຊື່ອຟັງຂໍ້ຄໍາສັ່ງຂອງພຣະເຈົ້າ" (24:24) ໂດຍທໍາລາຍຮູບໂຄຣົບທີ່ພວກເຂົາມີຢູ່.

ມາເຖິງບັດນີ້ ພວກເຮົາຮູ້ແລ້ວວ່າຈຸດປະສົງຂອງການເຕົ້າໂຮມອັນສໍາຄັນນີ້ (24:25). ຄໍາວ່າ "ເຮັດຄໍາໝັ້ນສັນຍາ" ປາກົດເປັນຄັ້ງທໍາອິດໃນບົດນີ້ ແຕ່ຖ້ອຍຄໍາໃນບົດນີ້ເປັນໂຄງຮ່າງໃຫ້ເຫັນເຖິງການທໍາຄໍາໝັ້ນສັນຍາຕລອດມາ. ເມື່ອຊົນຊາດຕ່າງໆທໍາຄໍາໝັ້ນສັນຍາໃດໆໃນສມັຍບູຮານ ພວກເຂົາອະນຸມັດຕາມຂໍ້ຕົກລົງໂດຍເອົາສໍາເນົາຂອງການສັນຍາມາຊ້ອງໜ້າກັນໃນກາງສາທາຣະນະຊົນ. ພິເສດສຸດແລ້ວ ໃນພຣະທັມຕອນນີ້ແມ່ນ "ພຣະບັນຍັດແລະກົດລະບຽບ" ທີ່ກ່ຽວຂ້ອງກັບຄວາມຈົງຮັກພັກດີຕໍ່ພຣະເຈົ້າແຕ່ຜູ້ດຽວ ຕາມຄໍາຮຽກຮ້ອງຂອງພຣະອົງ (ອົບພະຍົບ 20:2-3; ພຣະບັນຍັດສອງ 6:4-9). ໂດຍທົ່ວໄປແລ້ວແມ່ນກົດບັນຍັດຕ່າງໆຂອງພຣະເຈົ້າທີ່ພວກເຂົາຮັບເອົາຊຶ່ງເປັນພາກສ່ວນຂອງການສັນຍາທີ່ພູເຂົາຊີນາຍ. ພິທີອະນຸມັດພັນທະສັນຍາໄດ້ຈັດຂຶ້ນທີ່ເມືອງຊີເຄມ (24:26-27).

ຫລັງຈາກໄດ້ນໍາຊາວອິສຣາເອນທໍາຄໍາໝັ້ນສັນຍາຈະຮັບໃຊ້ພຣະເຈົ້າແລ້ວ ພັນທະກິຈຂອງໂຢຊວຍໄດ້ສໍາເຣັດ. ລາວໄດ້ເສັຽຊີວິດແລະໄດ້ຖືກຝັງໄວ້ໃນທີ່ດິນຂອງລາວ (24:29-30).

ປາສຈາກໂຢຊວຍຜູ້ນໍາທີ່ດີເລີດຂອງຊາວອິສຣາເອນ ພວກເຂົາຈະເຮັດຢ່າງໃດ? ເຣື່ອງລາວຊ້ອນຊ້າງຄືກັນຫລືບໍ່? ພວກເຂົາປະສົບມາແລ້ວຄັ້ງນຶ່ງເມື່ອໂມເຊໄດ້ຈາກໄປ ແລະພຣະເຈົ້າປະທານໂຢຊວຍໃຫ້ແກ່ພວກເຂົາ. ບັດນີ້ພວກເຂົາສາມາດສະແດງອອກໃຫ້ເຫັນວ່າ ພວກເຂົາໄວ້ວາງໃຈໃນພຣະອົງໄດ້ແລ້ວ.

<u>ບາດກ້າວຂອງພິທີການທໍາສັນຍາ</u>

ພິທີການທໍາສັນຍາໃນສມັຍບູຮານໃນຕາເວັນອອກກາງມີຮູບແບບແລະຂັ້ນຕອນ. ການທໍາສັນຍາລະຫວ່າງຂອງຄົນສອງກຸ່ມ ກຸ່ມທີ່ມີອໍານາດແລະກຸ່ມທີ່ບໍ່ມີອໍານາດມີຫົກຂັ້ນຕອນຕໍ່ລົງໄປນີ້:

1. ກ່າວເຖິງເຣື່ອງທີ່ຈະທຳສັນຍາກັນ
2. ສລູບປະຫວັດຄວາມສັມພັນຂອງທັງສອງກຸ່ມໃນທີ່ຜ່ານມາ
3. ກຳນົດເງື່ອນໄຂຂອງການຮັບຜິດຊອບຂອງກຸ່ມທີ່ບໍ່ມີອຳນາດ
4. ອ່ານຄຳຕົກລົງກັນແລະເອົາໄປຝາກໄວ້ໃນພຣະວິຫານ
5. ຮ້ອງໃຫ້ສິ່ງສັກສິດ ຫລື ພຣະມາເປັນພຍານຫລັກຖານ
6. ຖ້ອຍຄຳຈາກຄຳສາບແຊ່ງແລະຄຳອ່ວຍພອນຕາມທີ່ມີຄວາມສັດຊື່ໃນການຕົກລົງກັນ

<u>ຄຳຖາມ</u>

1. ໃຫ້ຄຶດຫວນຄືນເບິ່ງການຕັດສິນໃຈສອງຫລືສາມຢ່າງທີ່ສຳຄັນທີ່ສຸດໃນຊີວິດຂອງທ່ານ (ຕົວຢ່າງ: ຕັດສິນໃຈໃນການຊົງເອີ້ນຂອງພຣະເຈົ້າ ເລືອກການສຶກສາສູງ ເລືອກຄູ່ຄອງໃນຊີວິດ ເລືອກເຮືອນທີ່ຈະຊື້ ຫລືອື່ນໆ). ແມ່ນຜູ້ໃດຊ່ອຍອະທິບາຍໃຫ້ທ່ານເຫັນແຈ່ມແຈ້ງແລະນຳພາທ່ານໃຫ້ຕັດສິນໃຈໃນທາງທີ່ຖືກຕ້ອງ?
2. ແມ່ນຫຍັງທີ່ເປັນຈຸດສຳຄັນສາມຫາສີ່ຈຸດໃນບົດຮຽນ "ສລູບເຣື່ອງປະວັດສາດທີ່ຜ່ານມາ" ພຣະເຈົ້າໄດ້ເຮັດຫຍັງແດ່ໃນຊີວິດຂອງທ່ານ?
3. ທ່ານຄຶດວ່າແມ່ນຫຍັງເປັນສິ່ງພິສູດໃຫ້ເຫັນວ່າຄົນສມັຍນີ້ໄດ້ມອບກາຍຖວາຍຈິດໃຈໃຫ້ກັບພຣະເຈົ້າຢ່າງເດັດຂາດແລະຮັບໃຊ້ພຣະອົງຈົນສຸດກຳລັງ?
4. ໃຫ້ຫວນຄຶດເຖິງຊີວິດການຮັບໃຊ້ຂອງໂຢຊວຍ. ທ່ານຄຶດວ່າ ແມ່ນຫຍັງເປັນສິ່ງສຳຄັນທີ່ເຮັດໃຫ້ລາວຮັບໃຊ້ພຣະເຈົ້າຈົນເຖິງທີ່ສຸດ?

ສຈ. ບຸຣເຮັ່ງ ພົງປຣະພັນ

# ບົດຮຽນທີ 7
# ລົງໄປເຖິງຊົ່ວລູກຫລານ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ພວກຜູ້ປົກຄອງ 2:6-7, 11-19
ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້: ພວກຜູ້ປົກຄອງ 1--2
ຈຸດສຳຄັນຂອງບົດຮຽນນີ້: ຢ່າປະຖິ້ມພຣະເຈົ້າ
ຄຳຖາມເພື່ອການສຳຣວດ: ໃນສມັຍລູກຫລານເຮົາຈະຕ້ອງເຊື່ອພຣະເຈົ້າຄືເຮົາບໍ່?
ຈຸດປະສົງຂອງບົດຮຽນນີ້: ເພື່ອສ້າງທາງແຫ່ງຄວາມເຊື່ອໄປເຖິງຈຸດສຸດຍອດ

ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ນຳຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.

## ບົດນຳ

ຫລັງຈາກໂຢຊວຍຜູ້ນຳອິສຣາເອນຕໍ່ຈາກໂມເຊຕາຍແລ້ວ ພວກເຂົາກໍຍັງສືບຕໍ່ບົວຣະບັດພຣະເຈົ້າຕລອດຊົ່ວຊີວິດຂອງພວກຜູ້ນຳທຸກຄົນ ດ້ວຍວ່າເຂົາໄດ້ເຫັນຣິດເດດຂອງອົງພຣະຜູ້ເປັນເຈົ້າໃນຂະນະທີ່ເຂົາອົບພະຍົບມາຈາກເອຢິບ, ໃນເວລານັ້ນກົດໝາຍບ້ານເມືອງຍັງບໍ່ທັນມີຈຶ່ງເອີ້ນພວກນາຍທະຫານຫລືພວກຜູ້ນຳວ່າ ພວກຜູ້ປົກຄອງ ດັ່ງນັ້ນຊົນຊາດອິສຣາເອນຈະຢູ່ເຢັນເປັນສຸກແລະປອດພັຍຫລາຍຊ່ຳໃດນັ້ນແມ່ນຂຶ້ນຢູ່ກັບວ່າ ພວກເຂົາຈົ່ງຮັກພັກດີຕໍ່ອົງພຣະຜູ້ເປັນເຈົ້າຫລາຍຊ່ຳໃດ, ເມື່ອເຂົາຫັນໜີຈາກທາງຂອງພຣະເຈົ້າພວກເຂົາກໍຈະພົບກັບຄວາມພິນາດຈິບຫາຍ.

## ພວກຜູ້ນຳຮັບໃຊ້ຕໍ່ຈາກໂຢຊວຍ 2:6-7

ໂຢຊວຍສັ່ງອິສຣາເອນແລະພວກຜູ້ນຳທັງຫລາຍທີ່ຕິດຕາມການປົກຄອງຂອງໂຢຊວຍແລ້ວເພິ່ນກໍແບ່ງດິນແດນໃຫ້ແຕ່ລະຄົນເປັນກຳມະສິດ, ແຕ່ລະຄົນມີຄວາມພໍອົກພໍໃຈໃນການຮັບແຜ່ນດິນໃຫມ່ມາເປັນຊັບສົມບັດສ່ວນຕົວແລະຄອບຄົວປະຊາຊົນອິສຣາເອນຮູ້ວ່າໂຢຊວຍເປັນຜູ້ນຳທີ່ດີແລະຖືກຕ້ອງຕາມນ້ຳພຣະທັຍພຣະເຈົ້າດັ່ງນັ້ນເມື່ອໂຢຊວຍໄດ້ນຳເຂົາມາເຖິງປານນີ້ແລ້ວເຂົາກໍຈະຕິດຕາມຮັບໃຊ້ພຣະອົງເໝືອນດັ່ງໂຢຊວຍໄດ້ຮັບໃຊ້ເປັນຕົວຢ່າງແກ່ພວກເຂົາ, ພວກຜູ້ນຳເຫລົ່ານີ້ໄດ້ຮັບໃຊ້ຮ່ວມກັບໂຢຊວຍເປັນເວລາປະມານ 40ປີ ພວກເຂົາໄດ້ເຫັນການປົກຄອງຂອງໂຢຊວຍເປັນການຖືກຕ້ອງ. ໂຢຊວຍໄດ້ກ່າວກັບພວກຜູ້ນຳວ່າ "ຈົ່ງຂາບໄຫວ້ພຣະຜູ້ເປັນເຈົ້າ ແລະຮັບໃຊ້ພຣະອົງ ດ້ວຍຄວາມຈິງໃຈ ແລະ ຄວາມສັດຊື່ ຈົ່ງປະຖິ້ມພຣະຕ່າງໆ ທີ່ປູ່ຍ່າຕາຍາຍຂອງພວກທ່ານຂາບໄຫວ້ຢູ່ໃນປະເທດເມຊາໂປຕາເມັຽ ແລະທີ່ປະເທດເອຢິບ ແລ້ວຈົ່ງຮັບໃຊ້ພຣະຜູ້ເປັນເຈົ້າ ຖ້າວ່າພວກທ່ານບໍ່ເຕັມໃຈຮັບໃຊ້ພຣະເຈົ້າ ຈົ່ງຕັດສິນໃຈມື້ນີ້ວ່າ ພວກທ່ານຈະຮັບໃຊ້ຜູ້ໃດ ຈະຮັບໃຊ້ພຣະຂອງປູ່ຍ່າຕາຍາຍທີ່ປະເທດເມຊາໂປຕາເມັຽ ຫລືວ່າພຣະຂອງຊາວອາໂມຣິດໃນແຜ່ນດິນທີ່ພວກທ່ານອາສັຍຢູ່ ແຕ່ວ່າຂ້າພະເຈົ້າແລະຄອບຄົວຂອງຂ້າພະເຈົ້າຈະຮັບໃຊ້ພຣະຜູ້ເປັນເຈົ້າ" (ໂຢຊວຍ 24:15). ເປັນຄວາມເວົ້າທີ່ເຂັ້ມແຂງຢ່າງເດັດຂາດ, ໂຢຊວຍສັ່ງຢ່າງໜັກແໜ້ນຢູ່ສາມຢ່າງຄື; 1. ຖ້າຈະຮັບໃຊ້ກໍຈົ່ງຮັບໃຊ້

ດ້ວຍ ຄວາມຈິງໃຈບໍ່ແມ່ນຮັບໃຊ້ພໍແລ້ວມື້ແລ້ວເວັນ ຫລືຮັບໃຊ້ດ້ວຍຄວາມຂົມຂື່ນແບບບໍ່ພໍໃຈ. <u>໒.</u> ຕ້ອງຮັບໃຊ້ດ້ວຍຄວາມສັດຊື່ຕໍ່ພຣະເຈົ້າ, ຕໍ່ປະຊາຊົນແລະສິ່ງຂອງທີ່ເປັນຂອງພຣະເຈົ້າ. <u>3.</u> ຈົ່ງປະຖິ້ມພຣະຕ່າງໆທີ່ເຄີຍຂາບໄຫວ້ນຳພວກເຖົ້າແກ່ໂບຮານ. ເມື່ອໂຢຊວຍກ່າວມາຮອດບ່ອນນີ້ ເພິ່ນຍັງເປີດໂອກາດໃຫ້ພວກຜູ້ນຳທີ່ຕິດຕາມເພິ່ນພ້ອມກັບປະຊາຊົນວ່າ "ພວກທ່ານ ຈະຮັບໃຊ້ຜູ້ໃດ ຈະຮັບໃຊ້ພຣະຂອງປູ່ຍ່າຕາຍາຍທີ່ປະເທດເມຊາໂປຕາເມັຽ ຫລືວ່າພຣະຂອງຊາວ ອາໂມຣິດ ໃນແຜ່ນດິນທີ່ ພວກທ່ານອາສັຍຢູ່" ໝາຍຄວາມວ່າໂຢຊວຍໃຫ້ໂອກາດໃຫ້ພວກເຂົາເລືອກເອົາຕາມໃຈເຂົາ, ດ້ວຍວ່າ ພວກເຂົາຮູ້ແລ້ວວ່າແມ່ນພຣະຜູ້ເປັນເຈົ້າເປັນຜູ້ຊົງນຳເຂົາອອກມາຈາກການເປັນຂ້າທາດ ແລະຍັງໂຜດປະທານແຜ່ນດິນອຸດົມສົມບູນນີ້ໃຫ້ແກ່ເຂົາ, ໃນສມັຍເຂົາເປັນຂ້າທາດຢູ່ນັ້ນແຜ່ນດິນເທົ່າຝ່າມືເຂົາກໍບໍ່ມີ ເວລານີ້ພຣະເຈົ້າໄດ້ໂຜດປະທານແຜ່ນດິນອັນອຸດົມສົມບູນແລ້ວ ພວກເຂົາແຕ່ລະຄົນກໍໄປຮັບສ່ວນແບ່ງຂອງໃຜລາວໃນແຜ່ນດິນນັ້ນ. (ຂໍ້ 6). ດັ່ງນັ້ນຫາກເຂົາບໍ່ຮັບໃຊ້ພຣະອົງ ຫລືເປັນຄົນເນຣະຄຸນກໍຕາມໃຈ ໂຢຊວຍກ່າວໃນຕອນທ້າຍວ່າ "ຂ້າພະເຈົ້າແລະ ຄອບຄົວຂອງຂ້າພະເຈົ້າຈະຮັບໃຊ້ພຣະຜູ້ເປັນເຈົ້າ" ດັ່ງນັ້ນເມື່ອໂຢຊວຍເສັຍຊີວິດໄປຈຶ່ງບໍ່ເປັນການຍາກທີ່ພວກເຂົາ ຈະສືບຕໍ່ວຽກງານການຮັບໃຊ້ພຣະເຈົ້າຕໍ່ໄປ. "ຫລັງຈາກເພິ່ນເສັຍຊີວິດໄປແລ້ວພວກເຂົາກໍຍັງຮັບໃຊ້ຕໍ່ໄປຈົນຕລອດຊົ່ວອາຍຸຂອງພວກຜູ້ນຳ ພວກຜູ້ນຳເຫລົ່ານີ້ເປັນຜູ້ຮູ້ຈັກກິຈການທຸກຢ່າງທີ່ພຣະຜູ້ເປັນເຈົ້າຊົງກະທຳຕໍ່ພວກອິສຣາເອນ" (ຂໍ້ 7).

<u>ລຸ້ນເກີດໃໝ່ໃຫຍ່ລຸນ ໒:11-19</u>

ຫລັງຈາກພວກຜູ້ນຳທີ່ເຄີຍຮັບໃຊ້ຮ່ວມກັບໂຢຊວຍຕາຍໄປໝົດແລ້ວ ພວກລູກຫລານກໍບໍ່ໄດ້ເຮັດຕາມພໍ່ແມ່ຫລືປູ່ຍ່າຕາຍາຍຂອງພວກເຂົາ, ຄຳວ່າປູ່ຍ່າຕາຍາຍໃນບ່ອນນີ້ຢ່າເຂົ້າໃຈຜິດວ່າເປັນສມັຍຂອງປູ່ຍ່າຕາຍາຍກ່ອນໜ້າເຂົ້າແຜ່ນດິນພັນທະສັນຍາ ແຕ່ແມ່ນປູ່ຍ່າຕາຍາຍສມັຍເຂົ້າໄປຢູ່ແຜ່ນດິນໃໝ່ແລ້ວ ຄືລຸ້ນຜູ້ຮັບໃຊ້ຕໍ່ຈາກໂຢຊວຍ. ພວກລູກຫລານຂອງພວກຜູ້ນຳຫລັງຈາກໂຢຊວຍບໍ່ຮູ້ເຣື່ອງການຊົງໄຖ່ຂອງພຣະເຈົ້າ ທີ່ຊົງໄຖ່ພວກປູ່ຍ່າຕາຍາຍຂອງເຂົາຈາກເອຢິບສ່ວນພວກເຂົາທັງໝົດແມ່ນເກີດຢູ່ໃນແຜ່ນດິນໃໝ່ແລ້ວ ຈຶ່ງບໍ່ຮູ້ຄວາມທຸກຍາກລຳບາກແລະຄຳໝັ້ນສັນຍາຂອງພວກປູ່ຍ່າຕາຍາຍຂອງພວກເຂົາ. ໃນທຳນອງດຽວກັນຫາກເຮົາເລົ່າຊີວິດການເປັນອົພຍົບທີ່ສູນອົພຍົບປະເທດໄທໃຫ້ລູກຫລານເຮົາຟັງເຂົາເຈົ້າກໍຈະບໍ່ມີຄວາມຮູ້ສຶກໃດໆ ເພາະພວກເຂົາເຈົ້າບໍ່ໄດ້ຜ່ານຊີວິດແນວນັ້ນ.

"ເມື່ອພວກອິສຣາເອນເຮັດຜິດຕໍ່ສູ້ພຣະຜູ້ເປັນເຈົ້າ" (ຂໍ້ 11ກ). ຄຳວ່າອິສຣາເອນເຮັດຜິດແມ່ນຜິດຄຳໝັ້ນສັນຍາທີ່ປູ່ຍ່າຕາຍາຍຂອງເຂົາໄດ້ສັນຍາວ່າ ຈະນະມັສການຂາບໄຫວ້ແຕ່ພຣະເຈົ້າອົງດຽວຄືຜູ້ຊົງນຳເຂົາອອກມາຈາກການເປັນຂ້າທາດ, ມາເຖິງເລລານີ້ພວກເຂົາໄປຂາບໄຫວ້ພຣະອື່ນຖືວ່າເປັນການຕໍ່ສູ້ພຣະເຈົ້າ, ຄວນຈິງແລ້ວບໍ່ມີມະນຸດຜູ້ໃດຈະສາມາດຕໍ່ສູ້ພຣະເຈົ້າໄດ້ດອກ ຫາກຂືນໄປຕໍ່ສູ້ພຣະເຈົ້າ ກໍຄ້າຍກັບວ່າເອົາໄຂ່ໄປທັບຫີນເພື່ອໃຫ້ຫີນແຕກ ຫລືຫາກຫີນທັບໄຂ່ງກໍຈະແຕກແນ່ນອນ. "ສ່ວນພຣະຜູ້ເປັນເຈົ້າກໍຊົງພຣະພິໂຣດຕໍ່ອິສຣາເອນ" (ຂໍ້ 14ກ) ( ພຣະພິໂຣດແປວ່າໃຈຮ້າຍ) ເມື່ອພຣະເຈົ້າໃຈຮ້າຍພຣະອົງຊົງອະນຸຍາດໃຫ້ສິ່ງນີ້ເກີດກັບເຂົາ; 1. ຊົງເຮັດໃຫ້ພວກໂຈນເຂົ້າມາໂຈມຕີແລະປຸ້ນພວກເຂົາ" (ຂໍ້ 14)ຄຳວ່າເຮັດໃຫ້ພວກໂຈນມາໂຈມຕີແລະປຸ້ນມີຄວາມໝາຍວ່າພຣະອົງປ່ອຍປະບໍ່ເບິ່ງແຍງຮັກສາຫລືພຣະອົງເມີນເສີຍບໍ່ເອົາໃຈໃສ່ພວກເຂົາ. ໒. "ພຣະເຈົ້າຊົງປ່ອຍໃຫ້ພວກສັຕຣູທີ່ຢູ່ອ້ອມຮອບນັ້ນຊະນະພວກເຂົາ" (ຂໍ້ 14) ໝາຍຄວາມວ່າພຣະອົງບໍ່ຊ່ອຍເຂົາໃນຍາມສັຕຣູທຸກຄົນມາໂຈມຕີເຂົາ. 3. "ພຣະຜູ້ເປັນເຈົ້າຊົງຕໍ່ສູ້ພວກເຂົາຕາມທີ່ພຣະອົງຊົງບອກໄວ້ແລ້ວ" (ຂໍ້ 14) ນອກຈາກພຣະເຈົ້າຊົງປ່ອຍໃຫ້ໂຈນມາປຸ້ນ, ປ່ອຍໃຫ້ສັຕຣູຊະນະເຂົາແລ້ວພຣະອົງຍັງຕໍ່ສູ້ເຂົາອີກ, ນີ້ແຫລະຄືຫມາກຜົນຂອງການຫລົງລືມພຣະຄຸນພຣະເຈົ້າ.

ພວກອິສຣາເອນທົນຕ້ອງທຸກທໍຣະມານຈາກພວກໂຈນມາປຸ້ນຈີ້ຂ້າແລະຍາດເອົາສິ່ງຂອງແລະເອົາລູກເມັຽຂອງເຂົາໄປ

ຊ້ຳແລ້ວຊ້ຳເລົ່າຢ່າງນີ້ຕລອດມາ ພວກເຂົາບໍ່ສາມາດປົກປ້ອງຊັບສົມບັດແລະຄອບຄົວເຂົາໄດ້ ດ້ວຍວ່າພຣະເຈົ້າບໍ່ໄດ້ຢູ່ຝ່າຍເຂົາ ແລະພວກໂຈນກໍແຂງແຮງກວ່າພວກເຂົາ, ພວກເພື່ອນບ້ານໃກ້ຊິດກໍກາຍເປັນສັດຕູ ແລ້ວມານາບຂູ່ຂົ່ມເຫງເຂົາຕ່າງໆນາ ພວກອິສຣາເອນພະຍາຍາມລຸກຂຶ້ນຕໍ່ສູ້ ແຕ່ປາກົດວ່າທຸກເທື່ອທີ່ເຂົາລຸກຂຶ້ນຕໍ່ສູ້ເຂົາກໍພ່າຍແພ້ທຸກຄັ້ງ. "ທຸກເທື່ອທີ່ພວກເຂົາອອກໄປສູ້ຮົບພຣະຜູ້ເປັນເຈົ້າກໍຊົງຕໍ່ສູ້ພວກເຂົາຕາມທີ່ພຣະອົງຊົງບອກໄວ້ແລ້ວພວກເຂົາຕົກຢູ່ໃນພາວະຂັດສົນຢ່າງໃຫຍ່ຫລວງ" (ຂໍ້ 15). ພຣະອົງຊົງປ່ອຍໃຫ້ເຂົາຢູ່ໃນພາວະເຊັ່ນນັ້ນກໍເພາະວ່າພຣະອົງຕ້ອງການສັ່ງສອນແລະໃຫ້ໂອກາດເຂົາກັບໃຈຄືນຫາພຣະອົງໃໝ່.

"ເວລາຕໍ່ມາພຣະຜູ້ເປັນເຈົ້າຊົງໂຜດໃຫ້ພວກອິສຣາເອນມີຜູ້ປົກຄອງທີ່ເຂັ້ມແຂງ ເພື່ອຊ່ອຍໃຫ້ພົ້ນຈາກເງື້ອມມືຂອງພວກໂຈນ ແຕ່ເຂົາບໍ່ຍອມປະຕິບັດຕາມຄຳສັ່ງຂອງພວກຜູ້ປົກຄອງເຫລົ່ານັ້ນ ແລ້ວບໍ່ສັດຊື່ຕໍ່ພຣະຜູ້ເປັນເຈົ້າ ໂດຍໄປນະມັສການພຣະອື່ນ ພໍ່ແມ່ຂອງພວກເຂົາໄດ້ຟັງຄຳສັ່ງຂອງອົງພຣະຜູ້ເປັນເຈົ້າ ແຕ່ເຂົາເອງບໍ່ຍອມປະຕິບັດຕາມ" (ຂໍ້ 15-17). ພຣະຄັມພີບໍ່ໄດ້ບອກວ່າພວກອິສຣາເອນກັບໃຈ ແຕ່ພຣະເຈົ້າຊົງເມດຕາໃຈທີ່ແຂງກະດ້າງຂອງເຂົາ ພຣະອົງກໍຊົງໂຜດປະທານໃຫ້ອິສຣາເອນມີຜູ້ນຳເຂັ້ມແຂງຂຶ້ນມາເພື່ອໃຫ້ເຂົາພົ້ນຈາກເງື້ອມມືຂອງພວກໂຈນແຕ່ເຂົາຫົວດື້ຄື <u>1.</u> ເຂົາບໍ່ຍອມປະຕິບັດຕາມຄຳສັ່ງຂອງພວກຜູ້ປົກຄອງເຫລົ່ານັ້ນ, ຕ່າງຄົນກໍຢາກເຮັດຕາມໃຈຕົນເອງ. <u>2.</u> ພວກເຂົາຍັງບໍ່ສັດຊື່ຕໍ່ພຣະຜູ້ເປັນເຈົ້າອີກ ພຣະຄັມພີຍັງບອກອີກວ່າ ພໍ່ແມ່ຂອງພວກເຂົາໄດ້ຟັງຄຳສັ່ງຂອງອົງພຣະຜູ້ເປັນເຈົ້າ ແຕ່ເຂົາເອງບໍ່ຍອມປະຕິບັດຕາມ.

"ທຸກເທື່ອທີ່ພຣະຜູ້ເປັນເຈົ້າຊົງໂຜດໃຫ້ເຂົາມີຜູ້ປົກຄອງ ພຣະອົງກໍຊົງຊ່ອຍຜູ້ນັ້ນ ແລະຊົງຊ່ອຍປະຊາຊົນໃຫ້ພົ້ນຈາກເງື້ອມມືຂອງສັດຕູຕລອດຊີວິດຂອງຜູ້ປົກຄອງຄົນນັ້ນ ພຣະຜູ້ເປັນເຈົ້າຊົງມີຄວາມເມດຕາເຂົາ ເພາະວ່າພວກເຂົາໄດ້ຮ້ອງຄວນຄາງຢ່າງທໍຣະມານຍ້ອນຖືກຂົ່ມເຫງ ແຕ່ເມື່ອຜູ້ປົກຄອງເສັຽຊີວິດໄປແລ້ວ ພວກປະຊາຊົນກໍກັບຄືນເຮັດຢ່າງເກົ່າ ແລະເຮັດຊົ່ວຮ້າຍຫລາຍກວ່າພໍ່ແມ່ເຂົາ ພວກເຂົາຕິດຕາມພຣະອື່ນທັງຮັບໃຊ້ແລະບົວຣະບັດພຣະນັ້ນ" (ຂໍ້ 18-19). ພຣະຄັມພີບອກວ່າຜູ້ປົກຄອງແມ່ນພຣະເຈົ້າເປັນຜູ້ແຕ່ງຕັ້ງ ເມື່ອພຣະອົງຊົງແຕ່ງຕັ້ງຜູ້ປົກຄອງ ພຣະອົງກໍຊົງຊ່ອຍຜູ້ນັ້ນ ດ້ວຍເຫດນີ້ຜູ້ປົກຄອງບໍ່ວ່າໃນສມັຍໃດກໍຕາມບໍ່ຄວນກັງວົນໃຈໃນການປົກຄອງຂອງຕົນດ້ວຍວ່າພຣະຈະຊົງຊ່ອຍຜູ້ນັ້ນ ແລະຊົງຊ່ອຍປະຊາຊົນຜູ້ຢູ່ໃນຄວາມດູແລຂອງຜູ້ປົກຄອງຜູ້ນັ້ນຈົນກວ່າຜູ້ປົກຄອງຜູ້ນັ້ນຈະຕາຍ ໄປ. ເຮົາທັງຫລາຍມີໜ້າທີ່ຍອມເຊື່ອຟັງແລະປະຕິບັດຕາມຄຳສັ່ງຂອງຜູ້ປົກຄອງຂອງເຮົາ ຕາບໃດທີ່ພວກເຮົາຍັງເຊື່ອຟັງຜູ້ປົກຄອງພວກເຮົາໆກໍຈະປອດພັຍຈາກພວກສັດຕູ. "ພຣະຜູ້ເປັນເຈົ້າຊົງມີຄວາມເມດຕາເຂົາ ເພາະວ່າພວກເຂົາໄດ້ຮ້ອງຄວນຄາງຢ່າງທໍຣະມານຍ້ອນຖືກຂົ່ມເຫງ" (ຂໍ້ 18). ເວລານີ້ພວກເຮົາຫລາຍຄົນຍັງຮ້ອງຄວນຄາງຢ່າງທໍຣະມານຢ່າງແສນສາຫັດ, ເຮົາບໍ່ຮູ້ວ່າຍາມໃດພຣະອົງຈະສົງສານຄວາມໃຈແຂງຂອງເຮົາ ເປັນຫຍັງເຮົາບໍ່ສາຣະພາບບາບຂອງເຮົາວັນນີ້ເສັຽ ດີກວ່າຈະລໍຖ້າພຣະອົງສົງສານເອງ.

<u>ຄຳຖາມ:</u>

1. ທ່ານຈະເຮັດແນວໃດເພື່ອໃຫ້ຄວາມເຊື່ອຂອງທ່ານຜ່ານໄປເຖິງພວກລູກຫລານ?

2. ໂຢຊວຍຖາມພວກຜູ້ນຳຂອງເພິ່ນວ່າ ຈະຮັບໃຊ້ອົງພຣະຜູ້ເປັນເຈົ້າ ຫລືຈະຮັບໃຊ້ພຣະຂອງປູ່ຍ່າຕາຍາຍ? ທ່ານເດຈະຮັບໃຊ້ພຣະເຈົ້າ ຫລືຮັບໃຊ້ພຣະຂອງອີ່ພໍ່ອີ່ແມ່ຂອງທ່ານ?

3. ທ່ານສາມາດເວົ້າຄືໂຢຊວຍໄດ້ບໍ່ວ່າ ສ່ວນຂ້າພະເຈົ້າຈະຮັບໃຊ້ອົງພຣະຜູ້ເປັນເຈົ້າ? ຫາກທ່ານສາມາດເວົ້າວ່າ ຂ້າພະເຈົ້າແລະຄອບຄົວຈະຮັບໃຊ້ອົງພຣະຜູ້ເປັນເຈົ້າ ທ່ານຈະເຮັດແນວໃດແຕ່ນີ້ນີ້ເປັນຕົ້ນໄປ?

4. ເປັນຫຍັງພວກໂຈນຈຶ່ງມາປຸ້ນ, ແລະສັດຕູຈຶ່ງຊະນະອິສຣາເອນ? ທ່ານຈະເອົາບົດຮຽນນີ້ມາໃຊ້ໃນຊີວິດຢ່າງໃດ?

5. ເມື່ອເຮົາມີຜູ້ນຳ (ອາຈານ, ເຖົ້າແກ່) ເຮົາສົມຄວນເຮັດແນວໃດກັບເພິ່ນ?

6. ຫາກເຮົາໄດ້ຮ້ອງຄວນຄາງດ້ວຍຄວາມທຸກຕ່າງໆ ວັນນີ້ເຮົາຈະເຮັດແນວໃດກັບຄວາມທຸກນັ້ນ?

ສຈ. ດຣ. ທູນພັນ ວົງສຸຣິດທ໌

# ບົດຮຽນທີ 8
## ນາງເດໂບຣາ: ຜູ້ປະກາດ, ຜູ້ປົກຄອງ, ແລະພັລຍາ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ພວກຜູ້ປົກຄອງ 4:1-17, 21; 5:1-3, 12-13
ຂໍ້ພຣະຄັມພີສຳລັບເບື້ອງຫຼັງ: ພວກຜູ້ປົກຄອງ 4--5
ຈຸດສຳຄັນຂອງບົດຮຽນນີ້: ພຣະເຈົ້າຊົງໃຊ້ທັງຊາຍແລະຍິງເພື່ອໃຫ້ພຣະປະສົງຂອງພຣະອົງສຳເຣັດ.
ຄຳຖາມເພື່ອການສຳຣວດ: ຜູ້ຍິງຈະຮັບໃຊ້ພຣະເຈົ້າໄດ້ແນວໃດ?
ຈຸດປະສົງຂອງບົດຮຽນນີ້: ເພື່ອພິຈາຣະນາເບິ່ງພາຣະຂອງນາງເດໂບລາໃນການຮັບໃຊ້ພຣະເຈົ້າແລະການປົດປ່ອຍຊາວອິສຣາເອັນ ວ່າມີຄວາມໝາຍແນວໃດສຳລັບທຸກວັນນີ້.

### ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:

- ພຣະຄັມພີຄືຫລັກສຳຄັນສຳລັບຊີວິດແລະການຮັບໃຊ້.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.
- ໃຫ້ທຸກຄົນໃນຄອບຄົວຂອງພຣະເຈົ້າມີສ່ວນໃນການຕັດສິນໃຈ ແລະການຮັບໃຊ້.
- ເຫັນຄຸນຄ່າຂອງທຸກຄົນວ່າໄດ້ຖືກສ້າງຂຶ້ນມາຕາມພຣະສາຍາຂອງພຣະເຈົ້າ.
- ສົ່ງເສີມຄອບຄົວໃຫ້ສົມບູນດີ.
- ຈັດຕຽມຄົນໃຫ້ເປັນຜູ້ນຳແບບຮັບໃຊ້.

### ຄຳນຳ

ການຮັບໃຊ້ຂອງຜູ້ຍິງໃນແຜນການຂອງພຣະເຈົ້າເປັນເຣື່ອງຈິງໃນພຣະຄັມພີ. ພຣະເຈົ້າຊົງໃຊ້ຜູ້ຍິງ ເຊັ່ນນາງເດໂບຣາ ເພື່ອໃຫ້ວຽກງານຂອງພຣະອົງສຳເຣັດ. ຄຳຖາມນຶ່ງທີ່ໄດ້ຍິນຢູ່ເລື້ອຍໆໃນສມັຍນີ້ແມ່ນ: ເຮົາຄວນອະນຸຍາດໃຫ້ຜູ້ຍິງຮັບຕຳແໜ່ງເປັນຜູ້ນຳຝ່າຍຈິດວິນຍານບໍ່? ຜູ້ຍິງຄວນຈະມີພາກສ່ວນແນວໃດແດ່ໃນການຮັບໃຊ້?

ຜູ້ຍິງຫລາຍໆຄົນໃນປະວັດສາດໄດ້ຮັບໃຊ້ພຣະເຈົ້າ. ໃນພຣະສັນຍາເດີມກໍມີຕົວຢ່າງການຮັບໃຊ້ຂອງນາງເດໂບຣາ, ນາງຢາເອນ (ໃນບົດຮຽນນີ້) ແລະນາງມີຣິອາມ (ເອື້ອຍຂອງໂມເຊ- ອພຍ 15:20). ໃນພຣະສັນຍາໃໝ່ກໍມີນາງມາຣິອາ (ແມ່ຂອງພຣະເຢຊູ), ນາງອານາ (ຜູ້ປະກາດ- ລກ 2:36), ພວກຜູ້ຍິງທີ່ໄປບອກສາວົກເຣື່ອງການຄືນພຣະຊົນ (ມທ 28:5-7), ລູກສາວສີ່ຄົນຂອງຟີລິບຜູ້ປະກາດ (ກຈ 21:8-9), ຜູ້ຮ່ວມງານຂອງໂປໂລ ເຊັ່ນນາງຟອຍເບຜູ້ບົວຣະບັດ (ໂຣມ16:1), ນາງປີຊີນລາ ແລະຍິງອື່ນໆ (ໂຣມ 16).

ນອກນັ້ນຍັງມີສະຕຣີອີກຫລາຍໆຄົນໃນພຣະຄັມພີແລະໃນປະວັດສາດ ທີ່ພຣະເຈົ້າໄດ້ຊົງເອີ້ນພວກເຂົາເຈົ້າໃຫ້ເປັນຜູ້ຮັບໃຊ້. ບົດຮຽນໃນມື້ນີ້ຈະເວົ້າເຖິງການເປັນຜູ້ນຳຢ່າງດີທີ່ສຸດຂອງນາງເດໂບຣາ ຜູ້ໄດ້ຕອບຮັບການຊົງເອີ້ນຂອງພຣະຜູ້ເປັນເຈົ້າເພື່ອໄປນຳພາໄພ່ພົນຂອງພຣະອົງ.

ປະວັດສາດ ແລະເບື້ອງຫລັງ (4:1-3)
ຫລັງຈາກຜູ້ປົກຄອງເອຮູດໄດ້ຕາຍໄປແລ້ວ, ຊົນຊາດອິສຣາເອັນກໍພາກັນກັບໄປເຮັດບາບອີກ (ຜປຄ 4:1). ສະນັ້ນ ພຣະເຈົ້າຈຶ່ງຊົງໃຊ້ເຈົ້າຢາບິນ ກະສັດຂອງຊາວການາອານໃຫ້ມາຂົ່ມເຫັງຊາວອິສຣາເອັນ (ຜປຄ 4:2). ຢາບິນເປັນກະສັດຂອງເມືອງຮາໂສ ທີ່ໂຢຊວຍແລະກອງທັບອິສຣາເອັນໄດ້ທຳລາຍໄປແລ້ວປະມານ 100 ປີທີ່ຜ່ານມາ (ຢຊ 11:1-11). ຢາບິນເປັນກະສັດທີ່ສລາດແລະເຂັ້ມແຂງ (ຜປຄ 4:3,7); ເຂົາໄດ້ບີບບັງຄັບຊົນຊາດອິສຣາເອັນເປັນເວລາເຖິງ 20 ປີ (4:3). "ແລ້ວປະຊາຊົນອິສຣາເອັນກໍໄດ້ຮ້ອງໃຫ້ຫາພຣະຜູ້ເປັນເຈົ້າໃຫ້ຊ່ວຍເຫລືອ" (4:3).

ພຣະເຈົ້າຍັງຊົງໄດ້ຍິນການຮ້ອງໃຫ້ຂອງໄພ່ພົນຂອງພຣະອົງ. ຊາວອິສຣາເອັນໄດ້ກັບຄືນຫາພຣະເຈົ້າເພື່ອການປົດປ່ອຍ, ພວກເຮົາກໍສາມາດທຳເຊັ່ນດຽວກັນ. ນັກການເມືອງບໍ່ອາດສາມາດທີ່ຈະປ່ຽນແປງບ້ານເມືອງຂອງພວກເຮົາເໝືອນດັ່ງອົງພຣະຜູ້ເປັນເຈົ້າໄດ້.

ນາງເດໂບຣາ, ຜູ້ປົກຄອງ, ພັລຍາ, ແລະຜູ້ປະກາດ (4:4-10)
ນາງເດໂບຣາເປັນຜູ້ຍິງທີ່ພິເສດຫລາຍ. ນາງໄດ້ຮັບຕຳແໜ່ງເຖິງສາມຢ່າງດ້ວຍກັນ: ຜູ້ປະກາດ, ພັລຍາ, ແລະຜູ້ປົກຄອງອິສຣາເອັນ (4:4). ຊື່ສຽງຂອງນາງເດໂບຣາໄດ້ລືກ້ອງກາຍເຂດແດນຂອງອິສຣາເອັນ. ນາງເດໂບຣາເປັນເມັຽຂອງລັບປີໂດດ ຊຶ່ງແປວ່າແປວໄຟ. ພຣະທັມບໍ່ໄດ້ໃຫ້ລາຍລະອຽດກ່ຽວກັບຊີວິດການແຕ່ງງານຂອງນາງເດໂບຣາ, ແຕ່ພວກເຮົາສາມາດຮູ້ໄດ້ວ່າ ຊີວິດຄອບຄົວບໍ່ໄດ້ເປັນສິ່ງກີດຂວາງການເປັນຜູ້ນຳຜູ້ຍິ່ງໃຫຍ່ແລະໜ້ານັບຖືຂອງນາງ.

ຄຳວ່າ "ຜູ້ປະກາດ" ໃນພຣະສັນຍາເດີມແລະໃນພຣະສັນຍາໃໝ່ ບໍ່ໄດ້ໝາຍເຖິງຜູ້ທຳນວາຍ ແຕ່ໝາຍເຖິງຜູ້ເວົ້າແທນພຣະເຈົ້າ. ການທຳນວາຍອາດຈະເປັນພາກສ່ວນນຶ່ງໃນວຽກງານຂອງຜູ້ປະກາດ, ແຕ່ວຽກສ່ວນໃຫຍ່ແມ່ນການປະກາດພຣະຄຳຂອງພຣະເຈົ້າໃຫ້ກັບໄພ່ພົນຂອງພຣະອົງ. ນາງເດໂບຣາໄດ້ນຳພຣະຄຳຂອງພຣະເຈົ້າໄປບອກກັບ ບາຫລັກລູກຊາຍຂອງອາບີໂນອາມ ທີ່ເມືອງເບັດເອນໃນແຖບເຂດພູດອຍເອຟະຣາອີມ (4:5). ພຣະເຈົ້າໄດ້ສັ່ງໃຫ້ບາຫລັກເກນທະຫານ 10,000 ຄົນຈາກເຜົ່ານັບທາລີແລະເຜົ່າເສບູໂລນ. ກອງທັບນີ້ຈະໄປຕັ້ງຄ້າຍຢູ່ທີ່ພູຕາໂບເຣຊຶ່ງຕັ້ງຢູ່ຣະຫວ່າງຊາຍແດນພາກໃຕ້ຂອງສອງຕະກຸນ. ພູຕາໂບເຣຕັ້ງຢູ່ໃກ້ທົ່ງຮາບເຢຊະເຣອີນ.

ນາງເດໂບຣາວາງແຜນທີ່ຈະຍົວະ ຊີເຊລາ (ແມ່ທັບຂອງກະສັດຢາບິນ) ພ້ອມດ້ວຍຣົດຮົບຂອງເຂົາໃຫ້ມາທີ່ຫ້ວຍນ້ຳກີໂຊນ. ບາຫລັກແມ່ທັບຂອງອິສຣາເອັນເປັນຄົນທີ່ຂາດຄວາມກ້າຫານ; ລາວເປັນຄົນທີ່ມີຄວາມເຊື່ອນ້ອຍ. ຫລາຍຄົນໃນປະວັດສາດກໍມີລັກສະນະຄ້າຍກັບບາຫລັກເວລາຖືກພຣະເຈົ້າເອີ້ນ (ໂມເຊ, ເອຊາຢາ, ແລະເຢຣະມີຢາ ເປັນຕົ້ນ). ຫລາຍຄົນຕ່າງກໍຫາທາງຫລີກເມື່ອໄດ້ຮັບການຊົງເອີ້ນ. ພວກເຮົາໃນສມັຍນີ້ກໍອາດຈະເປັນເຊັ່ນນັ້ນເໝືອນກັນ. ແຕ່ພຣະເຈົ້າໄດ້ຊົງທຳງານຜ່ານຜູ້ນຳເຫຼົ່ານັ້ນຢ່າງໜ້າອັສຈັນ. ພຣະເຈົ້າກໍຈະຊົງເຮັດຢ່າງດຽວກັນໃນຊີວິດຂອງບາຫລັກ. ບາຫລັກຂາດຄວາມເຊື່ອ ແລະເຂົາຕ້ອງການຢາກຮູ້ຢ່າງແນ່ນອນວ່າພຣະເຈົ້າຈະຊົງຢູ່ກັບເຂົາ (4:7-10). ບາຫລັກຂໍໃຫ້ນາງເດໂບຣາໄປກັບເຂົາ (4:8); ນາງເດໂບຣາໄດ້ບອກກັບບາຫລັກວ່າ "ພຣະຜູ້ເປັນເຈົ້າຈະມອບຊີເຊຣາ ໄວ້ຢູ່ໃນເງື້ອມມືຂອງຍິງຄົນນຶ່ງ" (4:9).

ຫລາຍຄົນໃນປັດຈຸບັນຍັງບໍ່ຍອມຮັບຜູ້ຍິງໃນການຮັບໃຊ້. ສະຕຣີຫລາຍຄົນຢາກຈະຮັບໃຊ້ ແຕ່ໄດ້ຖືກຕໍ່ຕ້ານ. ໂຮງຮຽນພຣະທັມ ແລະຜູ້ນຳໃນບາງຄະນະໄດ້ກີດກັ້ນຜູ້ຍິງບໍ່ໃຫ້ຮັບໃຊ້. ນາງລອດຕີ້ ມູນ ເປັນສະຕຣີຜູ້ສຳຄັນໃນປະວັດສາດຂອງຄະນະບັບຕິດພາກໃຕ້. ນາງໄດ້ໄປຮັບໃຊ້ທີ່ປະເທດຈີນໃນປີ 1873 ເມື່ອໄດ້ຮັບການຊົງເອີ້ນ. ໃນທີ່ນັ້ນ, ນາງໄດ້ເທສນາ, ສັ່ງສອນ, ແລະບັບຕິສະມາຜູ້ເຊື່ອຢ່າງຫລວງຫລາຍ. ອົງການສົ່ງຜູ້ປະກາດໄດ້ຮຽກຮ້ອງໃຫ້ນາງຢຸດຢັ້ງພາຣະກິດເຫຼົ່ານັ້ນເພາະຖືວ່າສິ່ງເຫຼົ່ານັ້ນເປັນໜ້າທີ່ຂອງສິດຍາພິບານຜູ້ຊາຍ; ນາງໄດ້ຕອບຄຳສັ່ງຂອງອົງການວ່າ

"ຈຶ່ງຊອກຫາຜູ້ຊາຍແລ້ວສົ່ງພວກເຂົາມາທີ່ປະເທດຈີນ." ໃນຂະນະດຽວກັນນາງລອດຕີ້ ມູນກໍດໍາເນີນວຽກງານຂອງພຣະເຈົ້າຕໍ່ໄປເລື້ອຍໆ ເຖິງອີງການຈະບໍ່ເຫັນພ້ອມ. ນາງເດໂບຣາໄດ້ເຮັດໃນສິ່ງທີ່ພຣະເຈົ້າໄດ້ຊົງເອີ້ນນາງໃຫ້ເຮັດ.

<u>ການສູ້ຮົບກັບ ຊີເຊຣາ (4:11-24)</u>

ເມື່ອຊີເຊຣາ ແມ່ທັບຂອງເຈົ້າຢາບີນຮູ້ວ່າບາຣັກໄດ້ນໍາພົນຈໍານວນ 10,000 ຄົນມາຕໍ່ສູ້ລາວ. ເຂົາຈຶ່ງເຄື່ອນກໍາລັງພົນແລະຣົດລົບຈໍານວນ 900 ຄັນໄປຍັງຫ້ວຍນໍ້າກີໂຊນ. ນາງເດໂບຣາໄດ້ສັ່ງໃຫ້ບາຣັກໃຫ້ໄປຕໍ່ສູ້ກັບຊີເຊຣາ ແລະໄດ້ບອກບາຣັກວ່າ, "ມື້ນີ້ພຣະເຈົ້າຈະໃຫ້ເຈົ້າມີຊັຍຊະນະ" (4:14). ນາງເດໂບຣາໄດ້ອະທິບາຍກິຈກັມຂອງພຣະເຈົ້າໃນບົດເພງຂອງນາງວ່າ, "ນໍ້າຫ້ວຍນັ້ນຍັງໄຫລຫລັ່ງແຕ່ໃດໆມາຄືຫ້ວຍກີໂຊນໄຫລພັດເອົາເຫລົ່າສັດຕຣູໄປກ້ຽງ" (5:21-22). ຄວາມໝາຍອາດຈະແມ່ນວ່າ ພຣະເຈົ້າຈະຊົງສົ່ງຝົນລົງມາໃຫ້ນໍ້າຖ້ວມຝັ່ງ ແລະຣົດຮົບຂອງສັດຕຣູຈະຄາຢູ່ໃນນໍ້າແລະໃນຕົມ. ແລ້ວທະຫານອິສຣາເອັນຈະໄດ້ຊັຍຊະນະຢ່າງງ່າຍດາຍ. ພຣະເຈົ້າໄດ້ຊົງເຮັດໃຫ້ກອງທັບຂອງເຊຊີຣາເກີດຄວາມສັບສົນວຸ້ນວາຍ ແລະໃນທີ່ສຸດເຊຊີຣາກໍໂດດອອກຈາກຣົດຮົບ ແລະປົບໜີໄປຫາເຕັ້ນຂອງນາງຢາເອນ ເມັຍຂອງເຮເບ ຊາວເກນິດ. ນາງຢາເອນໄດ້ເຊື່ອງຊີເຊຣາໄວ້ໃນເຕັ້ນ. ນາງໄດ້ເຊີນເຂົາໃຫ້ພັກຜ່ອນຫລັງຈາກທີ່ໄດ້ເອົານົມໃຫ້ກິນເພາະຊີເຊຣາຫິວເຂົ້າ. ໃນບໍ່ນານເທົ່າໃດເຊຊີຣາກໍນອນຫຼັບສນິດ. ນາງຊາເອນຈຶ່ງເອົາຄ້ອນຕີຕອກຫລັກສຽບຜ້າເຕັ້ນໃສ່ທີ່ຂະໜັບຂອງຊີເຊຣາຈົນຊອດຮອດພື້ນດິນ. ເມື່ອບາຫລັກມາທີ່ເຕັ້ນຂອງນາງ, ຊາເອນຈຶ່ງບອກກັບເຂົາເຖິງສິ່ງທີ່ເກີດຂຶ້ນ. ບາຫລັກໄດ້ພົບເຊຊີຣາແມ່ທັບຄົນດັງ ນອນຕາຍຢູ່ໃນເຕັ້ນຂອງນາງຢາເອນ. ເດໂບຣາໄດ້ຮ້ອງເພງສັຣເສີນນາງຢາເອນ ແລະພາກສ່ວນຂອງນາງໃນຊັຍຊະນະຕໍ່ກອງທັບການາອານ (5:24-27).

ພຣະເຈົ້າໄດ້ເອົາຊະນະເຈົ້າຢາບີນກະສັດຂອງຊາວການາອານໃນມື້ນັ້ນ. ຫລັງຈາກທີ່ອິສຣາເອັນໄດ້ເຂັ້ມແຂງຂຶ້ນ, ພວກເຂົາກໍໄດ້ຂ້າຢາບີນເສັຍ (4:23-24).

<u>ບົດເພງຂອງເດໂບຣາ (5:1-31)</u>

ບົດເພງນີ້ເຫລົ່າເຣື່ອງການເສັຍຊັຍຂອງເຊຊີຣາ. ເດໂບຣາໄດ້ຍົກຍ້ອງຣິດອໍານາດຂອງພຣະເຈົ້າຊຶ່ງໃຫ້ຄວາມຊ່ວຍເຫລືອໃນເວລາຍາກລໍາບາກ ແລະເວລາທີ່ເຫັນວ່າເປັນໄປບໍ່ໄດ້. ພາກສ່ວນຂອງບາຫລັກໄດ້ຖືວ່າເປັນສິ່ງລອງລົງມາເພາະແມ່ນແຕ່ຊື່ຂອງເຂົາກໍຖືກຈັດໄວ້ໃນລໍາດັບສອງ ລອງຈາກຊື່ຂອງເດໂບຣາ (5:1). ລໍາດັບຊື່ໃນພຣະທັມຄັມພີມີຄວາມໝາຍສໍາຄັນ. ຊື່ຂອງຜູ້ອາຍຸສູງຫລືຜູ້ສໍາຄັນຈະຂຶ້ນກ່ອນສເມີ.

ເດໂບຣາໄດ້ຍົກຍ້ອງພຣະຜູ້ເປັນເຈົ້າສໍາລັບຊັຍຊະນະ (5:3-5). ມີຫລາຍເທື່ອພວກເຮົາກໍໄດ້ຂໍໃຫ້ພຣະເຈົ້າຊ່ວຍເຫລືອແຕ່ພວກເຮົາບໍ່ໄດ້ໃຫ້ເຄຣດິດກັບພຣະອົງຢ່າງສົມຄວນ ຫລັງຈາກໄດ້ຊັຍຊະນະແລ້ວ. ແຕ່ເດໂບຣາບໍ່ໄດ້ເຮັດເຊັ່ນນັ້ນເພາະນາງຮູ້ວ່າ ພຣະເຈົ້າຄືກໍາລັງຂອງຊາວອິສຣາເອັນ. ເດໂບຣາໄດ້ສັຣເສີນຕະກຸນຕ່າງໆທີ່ໄດ້ມາຊ່ວຍ ບາຫລັກເຮັດສົງຄາມ. ນາງໄດ້ຕໍາໜິຫລາຍຕະກຸນທີ່ບໍ່ຍອມເຂົ້າສົມທົບກໍາລັງເຊັ່ນ ຕະກຸນຣູເບັນ, ກີລີອາດ, ດານ, ແລະ ອາເຊ (5:15-17).

ນາງເດໂບຣາໄດ້ສັຣເສີນນາງຢາເອນ (5:24-27) ແລະໄດ້ເຍາະເຍີ້ຍມານດາຂອງ ເຊຊີຣາ (5:28-30). ເດໂບຣາໄດ້ຈົບບົດເພງດ້ວຍການສັຣເສີນພຣະຜູ້ເປັນເຈົ້າອີກເທື່ອນຶ່ງ (5:31). ຜູ້ຂຽນໄດ້ບັນທຶກໄວ້ວ່າ "ປະເທດຊາດບ້ານເມືອງກໍມີຄວາມສງົບສຸກເປັນເວລາ 40 ປີ (5:31).

ເມື່ອກໍານົດຮອບຂອງຜູ້ປົກຄອງຈົບລົງ, ປະຊາຊົນກໍເຮັດຄວາມຜິດບາບ; ພຣະເຈົ້າຊົງໄດ້ລົງໂທດພວກເຂົາ; ປະຊາຊົນຮ້ອງໃຫ້ຫາພຣະເຈົ້າ; ພຣະເຈົ້າຊົງສົ່ງຄົນມາຊ່ວຍເຫລືອພວກເຂົາ.

<u>ຄຳຖາມ:</u>

1. ທ່ານຄິດວ່າເປັນຫຍັງຊົນຊາດອິສຣາເອັນຈຶ່ງປະພຶດແບບນັ້ນ (ຕາມກຳນົດຮອບຂອງຜູ້ປົກຄອງ)? ພວກເຮົາເຄີຍເຮັດແບບດຽວກັນບໍ່?

2. ນາງເດໂບຣາແມ່ນ "ຄົນທີສອງ" ທີ່ພຣະເຈົ້າຊົງເລືອກໃຫ້ນຳພາກອງທັບອິສຣາເອັນໄປສູ້ຮົບກັບ ເຊຊີຣາບໍ່?

3. ທ່ານຄິດວ່າ ບາຫລັກມີຄວາມເຊື່ອນ້ອຍບໍ່?

4. ທ່ານຄິດວ່າຜູ້ຍິງຄວນມີສ່ວນໃນການນຳຫຍັງແດ່ໃນຄຣິສຕະຈັກທ້ອງຖິ່ນ?

5. ທ່ານຄິດວ່າຄຣິສຕະຈັກສົມຄວນຈະສະຖາປະນາ ຜູ້ຍິງຫລືບໍ່?

6. ຜູ້ຍິງທີ່ຖືກພຣະເຈົ້າເອີ້ນໃຫ້ເປັນຜູ້ຮັບໃຊ້ ຄວນຈະໄດ້ຮັບຕຳແໜ່ງ "ຜູ້ຮັບໃຊ້" ໃນຄຣິສຕະຈັກທ້ອງຖິ່ນບໍ່?

ສຈ. ດຣ. ສິດນີ ຄານ

# ບົດຮຽນທີ 9
# ກິເດໂອນ-ຕໍ່ສູ້ກັບຄວາມບໍ່ແນ່ໃຈ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ພວກຜູ້ປົກຄອງ 6: 7-18, 21-22, 36-40
ຂໍ້ພຣະຄັມພີສຳລັບເບື້ອງຫຼັງ: ພວກຜູ້ປົກຄອງ 6
ຈຸດສຳຄັນຂອງບົດຮຽນນີ້: ສັດຊື່ຕໍ່ພຣະເຈົ້າໝາຍເຖິງການຍອມຮັບການຊົງນຳພາ.
ຄຳຖາມເພື່ອການສຳຣວດ: ພວກເຮົາສາມາດໝັ້ນໃຈໄດ້ບໍ່ ວ່າເຮົາເຮັດໃນສິ່ງທີ່ພຣະເຈົ້າຊົງໃຫ້ເຮັດ?
ຈຸດປະສົງຂອງບົດຮຽນນີ້: ເພື່ອຊອກຫາວິທີ ທີ່ພວກເຮົາຈະສາມາດຮັບການຊົງນຳໃນຊີວິດ.

### ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:

- ພຣະຄັມພີຄືຫລັກສຳຄັນສຳລັບຊີວິດແລະການຮັບໃຊ້.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.

## ຄຳນຳ

ການຊອກຫາແລະການຮູ້ຈັກພຣະປະສົງຂອງພຣະເຈົ້າອາດຈະເປັນການຍາກ, ແຕ່ພວກເຮົາສາມາດທີ່ຈະຮູ້ນ້ຳພຣະທັຍຂອງພຣະອົງໂດຍການອ້ອນວອນອະທິຖານແລະການສແວງຫາຢ່າງສັດຊື່.
ຕາມທັມມະດາແລ້ວ ຄຣິສຕຽນແຕ່ລະຄົນຈະຕ້ອງສແວງຫານ້ຳພຣະທັຍຂອງພຣະເຈົ້າສຳລັບຊີວິດຂອງຕົນ. ແຕ່ການສແວງຫານ້ຳພຣະທັຍຂອງພຣະເຈົ້າກໍເປັນເຣື່ອງລຳບາກສົມຄວນ. ຂອບຄຸນພຣະເຈົ້າທີ່ພວກເຮົາມີພຣະຄັມພີ ແລະພຣະວິນຍານບໍຣິສຸດເພື່ອຊ່ວຍເຮົາໃນເຣື່ອງນີ້. ໃນພຣະທັມພວກເຮົາໄດ້ເຫັນພຣະເຈົ້າທຳງານໃນຊີວິດຂອງຫລາຍໆຄົນ. ນອກນັ້ນເຮົາຍັງໄດ້ເຫັນພຣະເຈົ້າໃນພຣະເຢຊູຄຣິດຜູ້ຊົງມີລັກສະນະແບບດຽວກັບພຣະບິດາ. ຈາກການສັງເກດເບິ່ງຊີວິດຂອງບຸກຄົນໃນພຣະຄັມພີ ແລະຊີວິດຂອງພຣະເຢຊູຄຣິດ, ພວກເຮົາພໍຈະເຂົ້າໃຈ ພຣະປະສົງຂອງພຣະເຈົ້າສຳລັບຊີວິດຂອງພວກເຮົາແຕ່ລະຄົນ.

ສະນັ້ນພວກເຮົາໄດ້ພົບວ່າວິທີທີ່ຈະຮູ້ນ້ຳພຣະທັຍຂອງພຣະເຈົ້າໃນພຣະຄັມພີເປັນເຣື່ອງແປກປລາດຫລາຍ. ໂດຍສະເພາະໃນເຣື່ອງພຣະເຈົ້າຊົງເອີ້ນກິເດໂອນໃຫ້ເປັນຜູ້ນຳໄພ່ພົນຂອງພຣະອົງ.

### ການປົກຄອງຂອງພວກມີດີອານ (6:1-6)

ອີກເທື່ອນຶ່ງພວກເຮົາໄດ້ເຫັນວ່າ ປະຊາຊົນອິສຣາເອັນໄດ້ເຮັດຜິດບາບຕໍ່ສູ້ພຣະເຈົ້າ (6:1). ພຣະເຈົ້າໄດ້ຊົງສົ່ງ "ຊາວມີດີອານ, ຊາວອາມາເຫລັກ, ແລະຄົນໃນເຜົ່າຕ່າງໆ" ເຂົ້າມາບຸກໂຈມຕີເຂດແດນຂອງອິສຣາເອັນ. ອິສຣາເອັນໄດ້ຖືກຄົນຕ່າງຊາດຂົ່ມເຫງຢູ່ເປັນເວລາເຈັດປີ. ຊາວມີດີອານເປັນສັດຕຣູສຳຄັນ ເພາະເປັນປະເທດເພື່ອນບ້ານທາງພາກໃຕ້. ພວກສັດຕຣູໄດ້ເຂົ້າບຸກໂຈມຕີແຕ່ເໜືອຕລອດໃຕ້, ແຕ່ທິດຕາເວັນອອກເຖິງທິດຕາເວັນຕົກ. ພວກເຂົາໄດ້ທຳລາຍດິນແດນຈົນອິສຣາເອັນໝົດທາງທີ່ຈະຕໍ່ສູ້.

ຊາວມີດີອານໄດ້ປຸ້ນເອົາທຸກອຍ່າງ; ປະຊາຊົນອິສຣາເອັນຈຳເປັນຕ້ອງນຳເອົາເຄື່ອງຂອງ, ຜົລປູກ, ແລະໂຕອູດເຂົ້າໄປເຊື່ອງໄວ້ໃນຖ້ຳແລະໃນທີ່ປອດພັຍຕ່າງໆຕາມເທິງພູ (6:2).

## ຂ່າວຈາກຜູ້ປະກາດພຣະທັມ (6:7-10)

ໃນຖ້າມກາງຄວາມຜິດບາບຂອງປະຊາຊົນ ພຣະເຈົ້າຍັງຊົງມີບຸກຄົນທີ່ຍັງສັດຊື່ຕໍ່ພຣະອົງ. ພຣະເຈົ້າໄດ້ຊົງສົ່ງຜູ້ປະກາດພຣະທັມໄປບອກປະຊາຊົນອິສຣາເອັນວ່າເປັນຫຍັງຊາວມີດີອານແລະຄົນອື່ນໆຈຶ່ງມາທຳລາຍສັດລ້ຽງ ແລະເຂົ້າໃນນາຂອງພວກເຂົາ. ຂ່າວສານຈາກຜູ້ປະກາດພຣະທັມມີພຽງສັ້ນໆວ່າ: ພຣະເຈົ້າໄດ້ນຳອິສຣາເອັນມາເຖິງແຜ່ນດິນແຫ່ງພຣະສັນຍາຕາມທີ່ພຣະອົງໄດ້ສັນຍາໄວ້ກັບພວກເຂົາ. ພຣະອົງສັນຍາວ່າຈະປົກປັກຮັກສາພວກເຂົາ ແຕ່ຊາວອິສຣາເອັນຈະຕ້ອງຫລີກເວັ້ນຈາກການໄປຂາບໄຫວ້ພຣະອື່ນໆ (ຜປຄ 6:10). ຊາວອິສຣາເອັນບໍ່ພຽງແຕ່ໄດ້ພາກັນຂາບໄຫວ້ພຣະເຢໂຮວາເທົ່ານັ້ນ, ພວກເຂົາຍັງໄດ້ໄປກາບໄຫວ້ພຣະຂອງຊາວອາມາເຫລັກອີກດ້ວຍ.

ພຣະເຈົ້າເຄີຍໄດ້ຊົງເຕືອນປະຊາຊົນອິສຣາເອັນແລ້ວ "ແຕ່ພວກເຈົ້າບໍ່ໄດ້ເຊື່ອຟັງເຮົາ" (6:10). ພຣະອົງຈຶ່ງລົງໂທດພວກເຂົາເພາະການບໍ່ເຊື່ອຟັງ. ຫລາຍຄັ້ງພວກເຮົາກໍເຮັດຄວາມຜິດຢ່າງດຽວກັນ ຄືບໍ່ຍອມເຊື່ອຟັງ. ພວກເຮົາບໍ່ຟັງຄຳສັ່ງຂອງພຣະເຈົ້າ ເພາະພວກເຮົາພຍາຍາມເຮັດໄປໃນທາງຂອງຕົນ. ຄຣິສຕະຈັກ ແລະຜູ້ເຊື່ອທັງຫລາຍໄດ້ເຮັດຜິດບາບຕໍ່ພຣະເຈົ້າເພາະໄປເອົາຕົວຢ່າງຂອງຊາວໂລກທີ່ຢູ່ອ້ອມຂ້າງພວກເຂົາ. ພຣະເຈົ້າໄດ້ຊົງບອກຢ່າງແຈ້ມແຈ້ງວ່າສິ່ງໃດຜິດ ແລະສິ່ງໃດຖືກ. ຫລາຍໆເທື່ອ, ຄຳສັ່ງຂອງພຣະເຈົ້າກໍກົງກັນຂ້າມກັບສັງຄົມ. ແທນທີ່ຈະເຮັດຕາມສັງຄົມ, ພວກເຮົາຈຳເປັນຈະຕ້ອງຕັ້ງໝັ້ນແລະສັດຊື່ຕໍ່ພຣະທັມຄຳສອນຂອງພຣະເຈົ້າ.

## ການຊົງເອີ້ນກີເດໂອນ (6:11-18)

ຊື່ "ກີເດໂອນ" ມີຄວາມໝາຍວ່າ ຄົນຕັດໄມ້ ຫລືຄົນເຈາະຫີນ. ທີ່ຈິງແລ້ວເຂົາກໍສົມຄວນກັບຊື່ນີ້ແທ້ ເມື່ອເຂົາໄດ້ໄປຕັດເສົາສັກສິດຂອງເຈົ້າແມ່ອາເຊຣາ (6:25-27). ທູດຂອງພຣະເຈົ້າ (6:11) ໄດ້ໄປພົບກັບກີເດໂອນແລະທັກທາຍເຂົາວ່າ, "ຊາຍຜູ້ອົງອາດກ້າຫານເອີຍ ພຣະຜູ້ເປັນເຈົ້າຊົງສະຖິດກັບເຈົ້າ" (6:12). ຄຳທັກທາຍນີ້ເຮັດໃຫ້ກີເດໂອນຕົກຕະລຶງ ເພາະຕາມປົກຕິແລ້ວ "ຊາຍຜູ້ອົງອາດກ້າຫານ" ຈະບໍ່ໄປລີ້ຟາດເຂົ້າຢູ່ຫລັງບ່ອນບີບນ້ຳອະງຸ່ນ. ຫລາຍໄປກວ່ານັ້ນ ຖ້າພຣະເຈົ້າຊົງຢູ່ກັບເຂົາ ຈຳເປັນບໍ່ທີ່ເຂົາຕ້ອງຫລົບລີ້ຈາກພວກສັດຕຣູຂອງເຂົາ (6:13).

ກີເດໂອນເຄີຍໄດ້ຍິນຄຳເລົ່າລືເຣື່ອງຣິດອຳນາດຂອງພຣະເຈົ້າ ໃນການປົດປ່ອຍປະຊາຊົນອິສຣາເອັນຈາກການເປັນທາດທີ່ປະເທດອີຢິບ, ໃນການນຳພາອິສຣາເອນຜ່ານຖິ່ນທຸຣະກັນດານ, ແລະມາເຖິງແຜ່ນດິນແຫ່ງພຣະສັນຍາ. ແຕ່ໃນຄວາມຄິດຂອງກີເດໂອນໃນຕອນນີ້ ເຂົາຄິດວ່າພຣະເຈົ້າຢຸດການເຮັດສິ່ງອັສຈັນແລ້ວ ຫລືບໍ່ດັ່ງນັ້ນພຣະເຈົ້າຄົງຈະປະຖິ້ມຊົນຊາດອິສຣາເອັນແລ້ວ. ຫລາຍໆຄັ້ງພວກເຮົາມັກພິພາກສາ ຕາມທີ່ເຮົາເຫັນດ້ວຍສາຍຕາ; ແຕ່ຍັງມີຫລາຍຢ່າງທີ່ກຳລັງເກີດຂຶ້ນຢູ່ໃນຈັກວານຊຶ່ງພວກເຮົາບໍ່ສາມາດເຫັນດ້ວຍຕາເປົ່າ. ຄຣິສຕຽນມັກຈະມີຄວາມສົງສັຍເຣື່ອງຣິດອຳນາດຂອງພຣະເຈົ້າເມື່ອຕົກຢູ່ໃນຄວາມຍາກລຳບາກ.

ໃນ 6:14, ພຣະເຈົ້າຊົງຕອບກີເດໂອນດ້ວຍຄຳຖາມທີ່ເຂົາຄາດບໍ່ເຖິງ. ພຣະເຈົ້າຊົງກ່າວໃນທຳນອງນີ້, ເຮົາຈະສົ່ງເຈົ້າ, ກີເດໂອນ, ໃຫ້ໄປຊ່ອຍກູ້ເອົາຊາດອິສຣາເອັນຈາກການຂົ່ມເຫງຂອງຊາວມີດີອານ. ພຣະເຈົ້າຊົງກ່າວກັບກີເດໂອນຕໍ່ໄປວ່າ ເຂົາຄືຄຳຕອບຂອງການຮ້ອງໃຫ້ ແລະການອ້ອນວອນຂໍການປົດປ່ອຍຂອງຊົນຊາດອິສຣາເອັນ.

ຜູ້ຮັບໃຊ້ຂອງພຣະເຈົ້າຫລາຍໆຄົນໄດ້ໃຫ້ຄຳຕອບການຊົງເອີ້ນຂອງພຣະອົງໃນທຳນອງດຽວກັບກີເດໂອນ. ໂມເຊ (ອພຍ 3--4), ເອຊາຢາ (ອຊຢ 6:5), ເຢເຣມີຢາ (ຢຣມຢ 1:6), ແລະຄົນອື່ນໆກໍຮູ້ສຶກຕົວເອງວ່າບໍ່ເໝາະສົມກັບວຽກ

ທີ່ພຣະເຈົ້າຊົງເອີ້ນໃຫ້ເຮັດ. ກີເດໂອນຢາກຈະບອກກັບພຣະເຈົ້າວ່າ ພຣະອົງຊົງເອີ້ນຄົນຜິດແລ້ວ ແລະເຂົາກໍໄດ້ໃຫ້ເຫດຜົນຫລາຍໆຢ່າງ (ຜປຄ 6:15). ສິ່ງທີ່ກີເດໂອນເວົ້າອາດຈະເປັນຄວາມຈິງທຸກຢ່າງ ແຕ່ພຣະເຈົ້າຊົງຕັດວ່າ, "ເຈົ້າເຮັດສິ່ງນີ້ໄດ້ເພາະເຮົາຈະຊ່ວຍເຈົ້າ" (6:16).

ມາເຖິງຕອນນີ້, ກີເດໂອນຍັງບໍ່ແນ່ໃຈວ່າເຂົາກຳລັງເວົ້າກັບອົງພຣະຜູ້ເປັນເຈົ້າແທ້. ເຂົາຈຶ່ງຂໍພິສູດວ່າພຣະອົງຜູ້ທີ່ກຳລັງເວົ້າກັບເຂົາຢູ່ນັ້ນ ແມ່ນພຣະຜູ້ເປັນເຈົ້າຜູ້ຊົງເຮັດສິ່ງອັສຈັນໃນການນຳພາຊາວອິສຣາເອັນໃນອະດີດຢ່າງແທ້ຈິງ (6: 17). ກີເດໂອນເຊີນພຣະເຈົ້າໃຫ້ຢູ່ກັບເຂົາ ເພື່ອເຂົາຈະໄດ້ຈັດຕຽມອາຫານ ແລະເຄື່ອງຖວາຍບູຊາພຣະອົງ (6:18).

<u>ເຄື່ອງຖວາຍບູຊາ (6:19-24)</u>

ກີເດໂອນໄດ້ນຳອາຫານທີ່ຕົນໄດ້ຈັດແຈງແລ້ວນັ້ນມາມອບໃຫ້ທູດຂອງພຣະເຈົ້າ. ທູດສວັນໄດ້ບອກໃຫ້ກີເດໂອນເອົາເຄື່ອງຖວາຍວາງໄວ້ທີ່ໂງ່ນຫີນ ແລະຫລັງຈາກນັ້ນທູດຂອງພຣະເຈົ້າກໍເອົາປາຍໄມ້ເທົ້າຂອງຕົນແຕະຕ້ອງເຄື່ອງຖວາຍແລ້ວໄຟກໍລຸກຂຶ້ນເຜົາເຄື່ອງເຫລົ່ານັ້ນຈົນໝົດ. ໃນທັນໃດນັ້ນ, ທູດສວັນຂອງພຣະເຈົ້າກໍຫາຍຕົວໄປ. ກີເດໂອນຈຶ່ງຮູ້ໄດ້ວ່າເພິ່ນເປັນທູດຂອງພຣະເຈົ້າແທ້; ກີເດໂອນເວົ້າວ່າ, "ຂ້າພຣະອົງໄດ້ເຫັນທູດຂອງພຣະອົງໜ້າຕໍ່ໜ້າແລ້ວ" (6:22).

ກີເດໂອນໄດ້ເກີດຄວາມຢ້ານກົວຢ່າງໃຫຍ່ ເພາະລາວຮູ້ວ່າບໍ່ມີຜູ້ໃດທີ່ໄດ້ເຫັນພຣະເຈົ້າໜ້າຕໍ່ໜ້າແລ້ວຈະມີຊີວິດຢູ່ຕໍ່ໄປໄດ້. ແຕ່ທູດຂອງພຣະເຈົ້າບອກກັບກີເດໂອນວ່າ "ຢ່າຢ້ານເລີຍ; ເຈົ້າຈະບໍ່ຕາຍດອກ" (6:23). ກີເດໂອນໄດ້ເຫັນນິມິດໝາຍທີ່ລາວຕ້ອງການ, ແລ້ວລາວຈຶ່ງສ້າງແທ່ນບູຊາໄວ້ໃນທີ່ນັ້ນ.

<u>ການທຳລາຍສະຖານທີ່ສັກສິດຂອງພະບາອານ (6:25-32)</u>

ໃນຄືນດຽວກັນນັ້ນພຣະເຈົ້າໄດ້ຊົງປາກົດຕົວຕໍ່ກີເດໂອນອີກ. ພຣະອົງໄດ້ຊົງສັ່ງໃຫ້ເຂົາໄປທຳລາຍແທ່ນບູຊາທີ່ພໍ່ຂອງເຂົາໄດ້ສ້າງໃຫ້ພຣະບາອານ, ໃຫ້ໄປຕັດຕົ້ນເສົາສັກສິດຂອງເຈົ້າແມ່ອາເຊຣາ, ແລ້ວໃຫ້ສ້າງແທ່ນບູຊາສຳລັບພຣະຜູ້ເປັນເຈົ້າແທນທີ່ນັ້ນ. ພຣະອົງຊົງສັ່ງກີເດໂອນໃຫ້ເອົາໄມ້ທີ່ເຂົາໄດ້ຕັດລົງນັ້ນໄປເຮັດຟືນເພື່ອເຜົາງົວເຖິກ ເທິງແທ່ນບູຊາເພື່ອພຣະຜູ້ເປັນເຈົ້າຂອງອິສຣາເອນ.

ກີເດໂອນໄດ້ພາຄົນໃຊ້ຂອງເຂົາສິບຄົນໄປເຮັດໃນສິ່ງທີ່ພຣະຜູ້ເປັນເຈົ້າໄດ້ຊົງສັ່ງໃນເວລາກາງຄືນ. ໃນເຊົ້າຕໍ່ມາກໍບໍ່ມີຜູ້ໃດຮູ້ເລີຍວ່າແມ່ນໃຜໄດ້ມາເຮັດໃນສິ່ງນີ້. ແຕ່ໃນທີ່ສຸດກໍມີຄົນບອກວ່າ ແມ່ນກີເດໂອນລູກຊາຍຂອງໂຢອາດເປັນຜູ້ເຮັດ (6:29). ປະຊາຊົນໃນເມືອງຕ້ອງການທີ່ຈະຂ້າກີເດໂອນເພາະການກະທຳຂອງເຂົາ ແຕ່ໂຢອາດຜູ້ເປັນພໍ່ໄດ້ປ້ອງກັນເຂົາໄວ້ຈາກມືຂອງປະຊາຊົນທັງຫລາຍ. ໂຢອາດໄດ້ບອກກັບຄົນທັງຫລາຍວ່າ ພຣະບາອານຄວນຈະປ້ອງກັນຕົວເອງ ແລະແທ່ນບູຊາຂອງເຂົາ ຖ້າເຂົາເປັນເຈົ້າແທ້ໆ (6:31). ຄົນທັງຫລາຍຈຶ່ງໄດ້ເອີ້ນກີເດໂອນວ່າ ເຢລຸບບາອານ" ຊຶ່ງໝາຍຄວາມວ່າ ຈົ່ງໃຫ້ບາອານຈັດການກັບລາວເອງ (6:32).

<u>ກີເດໂອນຕ້ອງການນິມິດໝາຍເພີ່ມອີກ (6:36-40)</u>

ກີເດໂອນຍັງບໍ່ແນ່ໃຈວ່າພຣະເຈົ້າຊົງຕ້ອງການເຂົາແທ້ຫລືບໍ່ໃນການທີ່ຈະປົດປ່ອຍຊົນຊາດອິສຣາເອັນ, ເຂົາຈຶ່ງຂໍເບິ່ງນິມິດໝາຍຕື່ມອີກ. ລາວໄດ້ບອກກັບພຣະເຈົ້າວ່າລາວຈະເອົາຂົນແກະໄປວາງໄວ້ທີ່ເທິງດິນບ່ອນຟາດເຂົ້າ; ຖ້າພຣະເຈົ້າໄດ້ຊົງເລືອກໃຫ້ເຂົາເປັນຜູ້ປົດປ່ອຍອິສຣາເອັນແທ້ນັ້ນ ໃນຕອນເຊົ້າໃຫ້ມີນ້ຳໝອກຕົກໃສ່ຂົນແກະຈົນປຽກ ແຕ່ໃຫ້ພື້ນດິນນັ້ນແຫ້ງຢູ່ຄືເກົ່າ(6:36-37). ໃນຕອນເຊົ້າຂອງມື້ໃໝ່, ພຣະຜູ້ເປັນເຈົ້າກໍຊົງໄດ້ເຮັດຕາມທີ່ກີເດໂອນຢາກເຫັນ; ປາກົດວ່າຂົນແກະກໍປຽກດ້ວຍຫິມະຈົນບັ້ນເອົານ້ຳໄດ້ ແຕ່ໜ້າດິນກໍແຫ້ງຢູ່.

ແຕ່ເຖິງປານນັ້ນ, ກີເດໂອນກໍຍັງບໍ່ແນ່ໃຈໃນການຊົງເອີ້ນຂອງພຣະເຈົ້າ. ເຂົາຈຶ່ງຂໍເບິ່ງນິມິດໝາຍຈາກພຣະອົງອີກເທື່ອນຶ່ງ. ເຂົາໄດ້ບອກກັບພຣະເຈົ້າວ່າໃນເທື່ອນີ້ ເຂົາຈະເອົາຂົນແກະໄປວາງໄວ້ເທິງທີ່ດິນບ່ອນເກົ່າ; ແລະຖ້າພຣະອົງຊົງເລືອກເຂົາແທ້ ຂໍໃຫ້ໜ້າດິນນັ້ນປຽກ ແຕ່ໃຫ້ຂົນແກະນັ້ນແຫ້ງຕາມປົກຕິ. ພຣະເຈົ້າຊົງພໍພຣະທັຍໃນການຂໍຮ້ອງຂອງກີເດໂອນ ແລະພຣະອົງກໍໄດ້ຊົງເຮັດໃຫ້ເຂົາເຫັນຕາມຄຳຂໍຮ້ອງ. ໃນທີ່ສຸດກີເດໂອນກໍເກີດຄວາມແນ່ໃຈ.

ເຣື່ອງລາວຂອງກີເດໂອນຄົງຈະບໍ່ເປັນເຣື່ອງແປກປະຫລາດສຳລັບຄຣິສຕຽນສ່ວນຫລາຍ. ພວກເຮົາຫລາຍໆຄົນກໍໄດ້ທົດລອງພຣະເຈົ້າເຊັ່ນກັນ. ພຣະເຢຊູໄດ້ຊົງສອນໃນເຣື່ອງນີ້ ຕອນທີ່ພຣະອົງໂຕ້ຕອບການທົດລອງຂອງຊາຕານວ່າ, "ມີຄຳຂຽນໃນພຣະຄັມພີອີກວ່າ ຢ່າທົດລອງພຣະອົງຜູ້ເປັນພຣະເຈົ້າຂອງທ່ານ" (ມທ 4:7).

ໃນສມັຍນີ້ ພວກເຮົາມີພຣະຄຳຂອງພຣະເຈົ້າຊຶ່ງໄດ້ຖືກບັນທຶກໄວ້ໃນພຣະຄັມພີ. ນອກນັ້ນພວກເຮົາຍັງມີພຣະເຢຊູຄຣິດຜູ້ຊົງເປັນພຣະຄຳທີ່ມີຊີວິດ ແລະພຣະວິນຍານບໍຣິສຸດຜູ້ຊົງເປັນຄຣູຂອງພວກເຮົາ. ສະນັ້ນການສແວງຫານ້ຳພຣະທັຍຂອງພຣະເຈົ້າສຳລັບຊີວິດຂອງພວກເຮົາຈຶ່ງເປັນວຽກທີ່ງ່າຍຂຶ້ນ. ທ່ານເຄີຍໄດ້ຄວາມຄິດຈາກພຣະເຈົ້າບໍ່ ແລະທ່ານຮູ້ໄດ້ບໍ່ວ່າຄວາມຄິດນັ້ນແມ່ນພຣະປະສົງຂອງພຣະເຈົ້າ? ຈົ່ງຈົດຈຳໄວ້ສເມີວ່າ, ທຸກໆຄວາມຄິດທີ່ມາຈາກພຣະເຈົ້າ ຈະສອດຄ່ອງກັບພຣະຄຳທີ່ໄດ້ຖືກເປີດເຜີຍໄວ້ແລ້ວໃນພຣະຄັມພີ ແລະໃນພຣະເຢຊູຄຣິດຢູ່ສເມີ.

<u>ຄຳຖາມ:</u>

1. ທ່ານມີຄວາມລຳບາກຫລາຍປານໃດ ໃນການສແວງຫານ້ຳພຣະທັຍຂອງພຣະເຈົ້າສຳລັບຊີວິດ?
2. ທ່ານແນ່ໃຈຫລາຍປານໃດ ວ່າທ່ານໄດ້ຍິນສຽງຈາກພຣະເຈົ້າແທ້?
3. ທ່ານຄິດວ່າທ່ານຈະຕ້ອງໄດ້ "ເອົາຂົນແກະ" ໄປປົງໄວ້ຕໍ່ໜ້າພຣະເຈົ້າບໍ່ໃນມື້ນີ້? ເປັນຫຍັງ?
4. ການເພິ່ງຄຣິສຕຽນຄົນອື່ນໆເພື່ອຊ່ວຍໃຫ້ຮູ້, ໂດຍບໍ່ຕ້ອງສົງສັຍ, ວ່າສິ່ງນັ້ນຄືນ້ຳພຣະທັຍຂອງພຣະເຈົ້າສຳລັບທ່ານ ເປັນເຣື່ອງທີ່ໄວ້ໃຈໄດ້ບໍ່?
5. ທ່ານກຳລັງຢູ່ໃນພຣະປະສົງຂອງພຣະເຈົ້າສຳລັບຕົວເອງບໍ່ໃນມື້ນີ້? ເປັນຫຍັງທ່ານຈຶ່ງຕອບໃນທຳນອງນັ້ນ?

ສຈ. ດຣ. ສິດນີ ຄານ

## ບົດຮຽນທີ 10
## ກິເດໂອນ-ເພິ່ງພຣະເຈົ້າ

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ພວກຜູ້ປົກຄອງ 7:2-8, 16-21
<u>ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:</u> ພວກຜູ້ປົກຄອງ 7
<u>ຈຸດສຳຄັນຂອງບົດຮຽນນີ້:</u> ພຣະເຈົ້າຊົງເອີ້ນພວກເຮົາໃຫ້ເພິ່ງພຣະອົງໃນທຸກໆຢ່າງ.
<u>ຄຳຖາມເພື່ອການສຳຣວດ:</u> ພວກເຮົາຈະສາມາດເພິ່ງພຣະເຈົ້າທັງໝົດໄດ້ແນວໃດ ຖ້າໃນຂະນະດຽວກັນເຮົາພຍາຍາມ ຕັ້ງໃຈໃສ່ໃນສິ່ງທີ່ເຫັນວ່າຄວນຈະເຮັດເອງ?
<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອອະທິບາຍວິທີ ທີ່ພວກເຮົາຈະສາມາດເພິ່ງພຣະເຈົ້າໄດ້ທັງໝົດ ຖ້າມກາງໂລກທີ່ກຳລັງບອກພວກເຮົາວ່າ "ຕົນນັ້ນແລ ເປັນທີ່ເພິ່ງຂອງຕົນ."

<u>ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:</u>

- ພຣະຄັມພີຄືຫລັກສຳຄັນສຳລັບຊີວິດແລະການຮັບໃຊ້.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.

## ຄຳນຳ

ພວກເຮົາຄວນຍົກຍ້ອງພຣະເຈົ້າເຣື່ອງຄວາມສຳເຣັດໃນຄຣິສຕະຈັກ ແລະໃນຊີວິດຂອງພວກເຮົາ. ຖ້າພວກເຮົາອ້ອນວອນອະທິຖານຂໍຄວາມຊ່ວຍເຫຼືອຈາກພຣະເຈົ້າ,ເວລາພວກເຮົາໄດ້ຮັບຄວາມຊ່ວຍເຫຼືອແລ້ວພວກເຮົາຈະຕ້ອງຖວາຍພຣະກຽດແດ່ພຣະເຈົ້າ.

<u>ຕຽມຕົວເພື່ອທຳສົງຄາມ (7:2-8)</u>
ໃນບົດຮຽນທີ່ຜ່ານມາ ພວກເຮົາໄດ້ເຫັນວ່າກິເດໂອນໄດ້ເຫັນນິມິດໝາຍຈາກພຣະເຈົ້າຊຶ່ງເປັນສິ່ງຢັ້ງຢືນວ່າພຣະອົງໄດ້ຊົງເອີ້ນລາວແທ້. ກິເດໂອນຈຶ່ງໄດ້ເຕົ້າໂຮມກຳລັງທັບ ແລະໄດ້ນຳກອງທະຫານຈຳນວນ 32,000 ຄົນໄປຕັ້ງທັບຢູ່ທີ່ບໍ່ນ້ຳຮາໂຣດ. ສ່ວນກຳລັງຂອງພວກມີດີອານກໍຕັ້ງຄ້າຍຢູ່ໃກ້ກັບພູໂມເຣ, ຊຶ່ງຢູ່ປະມານສາມຫລືສີ່ໄມທາງທິດເໜືອຂອງທະຫານ ກິເດໂອນ. ໃນກຳລັງຂອງພວກມີດີອານຍັງມີຊາວອາມາເຫລັກແລະຄົນໃນເຜົ່າຕ່າງໆເຂົ້າປະກອບສ່ວນ; ພຣະ ທັມ 7:12 ບອກເຖິງພວກສັດຕຣູນີ້ວ່າ, "ພວກເຂົາມີຝູງອູດຢ່າງຫລວງຫລາຍຄ້າຍກັບເມັດດິນຊາຍຕາມແຄມທະເລ."

ແນ່ນອນທີ່ສຸດ ເວລາກິເດໂອນໄດ້ເຫັນກຳລັງຂອງສັດຕຣູ ລາວຄົງຄິດວ່າທະຫານ 32,000 ຄົນຂອງຕົນອາດຈະບໍ່ພຽງພໍ. ແຕ່ພຣະຜູ້ເປັນເຈົ້າໄດ້ບອກກິເດໂອນວ່າກຳລັງທະການຂອງລາວນັ້ນຫລາຍໂພດແລະເມື່ອພວກເຂົາຊະນະເສິກ ເຂົາກໍຈະອວດວ່າພວກຕົນໄດ້ຊະນະເພາະກຳລັງຂອງຕົວເອງ. ພຣະເຈົ້າບໍ່ຊົງຕ້ອງການໃຫ້ມີສິ່ງນັ້ນຢູ່ໃນໃຈຂອງພວກເຂົາ. ພຣະອົງຈຶ່ງຊົງສັ່ງໃຫ້ກິເດໂອນຜ່ອນກຳລັງທະຫານລົງ. ພຣະເຈົ້າຊົງສັ່ງເຂົາໃຫ້ບອກພວກທະຫານວ່າ ຖ້າຜູ້ໃດຢ້ານໃຫ້ກັບເມືອບ້ານ. ໃນຕອນນັ້ນທະຫານຈຳນວນ 20,000 ຄົນພາກັນກັບບ້ານ ແລະຍັງເຫລືອພຽງ 10,000 ຄົນທີ່ຈະສູ້

ຣີບ. ແຕ່ພຣະເຈົ້າຊົງບອກກີເດໂອນວ່າ 10,000 ຄົນຍັງຫລາຍໂພດໃຫ້ຜ່ອນຈຳນວນລົງອີກ. ພຣະເຈົ້າຊົງບອກກີເດໂອນໃຫ້ສັ່ງພວກທະຫານລົງໄປກິນນ້ຳທີ່ບໍ່ ແລະໃຫ້ສັງເກດເບິ່ງເວລາພວກເຂົາກິນນ້ຳ. ຖ້າຜູ້ໃດໃຊ້ລີ້ນເລັຽນ້ຳຄືສັດສີ່ຕີນເວລາກິນນ້ຳໃຫ້ສົ່ງພວກເຂົາໜີ, ແລະຖ້າຜູ້ໃດໃຊ້ມືກອບນ້ຳກິນ ໃຫ້ຮັກສາຜູ້ນັ້ນໄວ້ (7:4-6). ປາກົດວ່າມີຄົນຈຳນວນ 300 ເທົ່ານັ້ນທີ່ໃຊ້ມືກອບນ້ຳກິນ. ມາເຖິງຕອນນີ້, ກອງທັບຂອງກີເດໂອນມີຈະນວນທັງໝົດພຽງ 300 ຄົນ.

<u>ສອດແນມເບິ່ງຄ້າຍຂອງມີດີອານ (7:9-15)</u>

ພຣະເຈົ້າຊົງຊາບເຖິງຈິດໃຈຂອງກີເດໂອນ ແລະພຣະອົງຊົງຮູ້ວ່າເຂົາກຳລັງຄິດຫຍັງຢູ່. ສະນັ້ນພຣະເຈົ້າຈຶ່ງຊົງສັ່ງກີເດໂອນໃຫ້ລັກເຂົ້າໄປໃນຄ້າຍຂອງພວກມີດີອານໃນເວລາກາງຄືນເພື່ອເຂົາຈະໄດ້ຍິນວ່າ ພວກສັດຕຣູກຳລັງເວົ້າຫຍັງ. ກີເດໂອນໄດ້ເຮັດຕາມທີ່ພຣະເຈົ້າໄດ້ຊົງສັ່ງແລະໄດ້ເຂົ້າໄປໃນຄ້າຍຂອງມີດີອານພ້ອມກັບຄົນໃຊ້ຊື່ປູຣາ.

ໃນຄ້າຍຂອງສັດຕຣູ, ກີເດໂອນ ແລະປູຣາໄດ້ຍິນທະຫານຜູ້ນຶ່ງກຳລັງເລົ່າຄວາມຝັນໃຫ້ກັບເພື່ອນທະຫານຂອງຕົນຟັງ. ໃນຄວາມຝັນນັ້ນເຂົາໄດ້ເຫັນກ້ອນເຂົ້າຈີ່ນຶ່ງກ້ອນຊຶ່ງເຮັດດ້ວຍເຂົ້າບາເລ ກິ້ງເຂົ້າມາໃນຄ້າຍຂອງພວກຕົນແລະເຂົ້າຈີ່ນັ້ນໄດ້ກິ້ງທັບຜ້າເຕັ້ນລົ້ມເພພັງໝົດ. ໝູ່ຂອງລາວຈຶ່ງແປຄວາມຝັນນັ້ນວ່າ, "ອັນນີ້ຕ້ອງໝາຍເຖິງດາບຂອງກີເດໂອນຊາວອິສຣາເອນ ຜູ້ເປັນລູກຊາຍຂອງໂຢອາດ... ພຣະເຈົ້າໄດ້ໃຫ້ລາວມີຊັຍຊະນະເໜືອກອງທັບທັງໝົດຂອງພວກເຮົາແລ້ວ" (7:13-14). ເມື່ອໄດ້ຍິນຄວາມຝັນ ແລະຄວາມແປຂອງມັນແລ້ວ ກີເດໂອນກໍເລີ່ມສັຣເສີນພຣະຜູ້ເປັນເຈົ້າ; ລາວຮູ້ວ່າພຣະອົງໄດ້ຊົງນຳພາພວກຕົນ ແລະພຣະອົງຊົງຄວບຄຸມທຸກຢ່າງ. ແລ້ວກີເດໂອນ ແລະປູຣາຈຶ່ງຮີບກັບຄືນຄ້າຍຂອງອິສຣາເອນຊຶ່ງຢູ່ໄກປະມານສາມຫລືສີ່ໄມ.

<u>ຊັຍຊະນະຜ່ານຄົນຈຳນວນນ້ອຍ (7: 16-21)</u>

ພໍມາເຖິງຄ້າຍກີເດໂອນກໍຕຽມກຳລັງທະຫານເພື່ອຈະເຂົ້າໂຈມຕີສັດຕຣູ. ເຂົາໄດ້ແບ່ງກຳລັງອອກເປັນສາມໝວດ. ແຕ່ລະຄົນໃນໝວດມີແກນຶ່ງອັນ ແລະໄຫນຶ່ງໜ່ວຍຊຶ່ງມີກະບອງລຸກຢູ່ທາງໃນ (7:16). ພຣະທັມບໍ່ໄດ້ເວົ້າເຖິງອາວຸດທີ່ພວກເຂົາຈະໃຊ້ໃນການທຳລາຍສັດຕຣູ, ແຕ່ທະຫານທຸກຄົນໄດ້ເຮັດຕາມທີ່ກີເດໂອນສັ່ງ. ກີເດໂອນໄດ້ສັ່ງທະຫານແຕ່ລະໝວດໃຫ້ອ້ອມຄ້າຍຂອງມີດີອານ ແລະໄດ້ສັ່ງພວກເຂົາວ່າ, "ເມື່ອຂ້ອຍແລະພວກຂອງຂ້ອຍເປົ່າແກຂຶ້ນໃຫ້ພວກເຈົ້າເປົ່າແກຂຶ້ນໂລດ. ແລ້ວຈົ່ງໃຫ້ທຸກຄົນທີ່ຢູ່ອ້ອມຄ້າຍພັກຮ້ອງວ່າ: ເພື່ອພຣະຜູ້ເປັນເຈົ້າແລະກີເດໂອນ!" (7:18).

ເມື່ອກີເດໂອນແລະທະຫານຮ້ອຍຄົນມາເຖິງແຄມຄ້າຍຂອງມີດີອານເຂົາກໍພາກັນເປົ່າແກຂຶ້ນ ແລະທັບໄຫທີ່ພວກເຂົາຖືໄປນັ້ນ. ແລ້ວທະຫານອີກສອງໝວດກໍເຮັດແບບດຽວກັນ; ທຸກຄົນໄດ້ຮ້ອງຈົນໝົດແຮງວ່າ "ດາບເພື່ອພຣະຜູ້ເປັນເຈົ້າແລະເພື່ອກີເດໂອນ! (7:21). ສຽງແກ, ສຽງໄຫແຕກ, ແລະແສງໄຟທີ່ປະກົດຢູ່ອ້ອມຄ້າຍພ້ອມໆກັນໄດ້ສ້າງຄວາມສັບສົນຢ່າງໃຫຍ່ຫລວງໃຫ້ກັບກຳລັງທະຫານຂອງພວກສັດຕຣູ. ພວກເຂົາຈຶ່ງເລີ່ມຂ້າກັນເອງ (7:22).

ພັນທະມິດຂອງທະຫານມີດີອານກໍພາກັນແລ່ນໜີ. ພວກເຂົາໄດ້ແຕກກະຈາຍເປັນຈຳນວນນ້ອຍໆຊຶ່ງເຮັດໃຫ້ກອງທັບອິສຣາເອນສາມາດທຳລາຍພວກສັດຕຣູໄດ້ຢ່າງງ່າຍດາຍ. ທະຫານອິສຣາເອນໄດ້ເອີ້ນເອົາກຳລັງຈາກເຜົ່າເນັບທາລີ, ເຜົ່າອາເຊ, ເຜົ່າມານາເຊ, ແລະເຜົ່າເອຟະຣາອິມໃຫ້ ມາຊ່ວຍໄລ່ຕິດຕາມທຳລາຍພວກມີດີອານ (7:23-24).

ພວກເຮົາໄດ້ເຫັນພຣະຜູ້ເປັນເຈົ້າຊົງໃຊ້ສິ່ງທີ່ອ່ອນແອເພື່ອເຮັດໃຫ້ແຜນການຂອງພຣະອົງສຳເຣັດ. ໃນພຣະທັມຂອງພຣະເຈົ້າຫລາຍໆຕອນ, ພວກເຮົາໄດ້ເຫັນວ່າພຣະເຈົ້າຊົງເອີ້ນຜູ້ທີ່ອ່ອນແຮງຫລາຍຄົນມາເປັນຜູ້ຮັບໃຊ້ຂອງພຣະອົງ. ສິ່ງເຫຼົ່ານີ້ເປັນເຫດໃຫ້ພວກເຮົາທຸກຄົນມີຄວາມຫວັງ. ພວກເຮົາສ່ວນຫລາຍຮູ້ວ່າຕົນເອງບໍ່ມີຄວາມສາມາດ ຫລືບໍ່ມີອຸປກອນພຽງພໍທີ່ຈະເຮັດວຽກງານຂອງພຣະເຈົ້າໃຫ້ສຳເຣັດຜົນ; ແຕ່ພວກເຮົາລືມໄປວ່າພຣະເຈົ້າຊົງມີຄົບທຸກຢ່າງ

ເພື່ອຈະຊ່ວຍພວກເຮົາໃນພັນທະກິດທີ່ພຣະອົງໄດ້ຊົງເອີ້ນໃຫ້ພວກເຮົາເຮັດ. ພຣະປະສົງຂອງພຣະເຈົ້າຈະສຳເຣັດດ້ວຍຣິດອຳນາດຂອງພຣະອົງ, ບໍ່ແມ່ນດ້ວຍກຳລັງຂອງພວກເຮົາ. ພວກເຮົາເປັນພຽງເຄື່ອງມືໃນພຣະຫັດຂອງພຣະອົງ.

ພຣະເຈົ້າໄດ້ຊົງເອົາຊັຍຊະນະກອງທັບອັນມະຫາສານດ້ວຍກຳລັງທະຫານພຽງ 300 ຄົນ, ແກ, ໄຫດິນ, ແລະກະບອງ. ພຣະອົງສາມາດເຮັດໄດ້ເຊັ່ນດຽວກັນດ້ວຍຄຣິສຕະຈັກໜ່ວຍນ້ອຍໆທີ່ມີອຸປກອນຈຳນວນຈຳກັດ. ການເຊື່ອຟັງຊ່ວຍພວກເຮົາໃຫ້ໄດ້ຊັຍຊະນະຜ່ານພຣະຫັດຂອງພຣະເຈົ້າ.

<u>ຄຳຖາມ:</u>

1. ເປັນຫຍັງທ່ານຈຶ່ງຄິດວ່າ "ໃຫຍ່ຫລາຍແຕ່ງດີຫລາຍ" ໃນວຽກງານຂອງພຣະເຈົ້າ?

2. ທ່ານປະເມີນເບິ່ງຄວາມສາມາດຂອງຕົວເອງວິທີໃດໃນການຮັບໃຊ້ພຣະເຈົ້າ? ທ່ານມີຄວາມສາມາດຫລາຍແລະມີອຸປກອນຫລາຍພຽງໃດ?

3. ທ່ານຄິດວ່າໃນກອງທັບຂອງກີເດໂອນຊຶ່ງມີຄົນພຽງ 300 ຄົນ ຈະມີຜູ້ທີ່ເລີ້ມເກີດຄວາມສົງສັຍບໍ່?

4. ຄຣິສຕະຈັກຂອງທ່ານສາມາດເຮັດພັນທະກິດຂອງພຣະເຈົ້າໄດ້ຫລາຍປານໃດ? ທ່ານຄິດວ່າຄຣິສຕະຈັກຂອງທ່ານນັ້ນນ້ອຍໂພດ ທີ່ຈະເຮັດວຽກອັນຍິ່ງໃຫຍ່ຂອງພຣະເຈົ້າບໍ່?

ສຈ. ດຣ. ສິດນີ ຄານ

# ບົດຮຽນທີ 11
## ຄວາມຜິດພາດຂອງຜູ້ນຳ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ພວກຜູ້ປົກຄອງ 8:22--9:15

ຂໍ້ພຣະຄຳທັງຫມົດສຳລັບບົດຮຽນນີ້: ພວກຜູ້ປົກຄອງ 8:22--9:15

ຈຸດສຳຄັນຂອງບົດຮຽນນີ້: ຢ່າເຮັດຕາມຄວາມເຂົ້າໃຈຂອງເຮົາ

ຄຳຖາມເພື່ອການສຳຣວດ: ຫາກເຮົາເປັນຜູ້ນຳເຮົາຈະເປັນຜູ້ນຳແນວໃດ??

ຈຸດປະສົງຂອງບົດຮຽນນີ້: ເພື່ອເຮົາຈະເຂົ້າໃຈວ່າການເປັນຜູ້ນຳຄວນສຶກສາໃຫ້ເຂົ້າໃຈ.

ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.

## ບົດນຳ

ຜູ້ນຳໃນໂລກນີ້ມີຫລາຍປະເພດດ້ວຍກັນ, ແລະຜູ້ນຳແຕ່ລະປະເທດ ແຕ່ລະອົງການຕລອດເຖິງຜູ້ນຳທາງສາສນາກໍບໍ່ມີຄວາມຄິດອຸດົມຄະຕິຢ່າງດຽວກັນ. ຜູ້ນຳແຕ່ລະປະເພດມີປໂຍດແຕກຕ່າງກັນ ວັນນີ້ເຮົາຈະເວົ້າເຖິງຜູ້ນຳຜູ້ນຶ່ງມີຊື່ ວ່າ ກີເດໂອນ ເປັນຜູ້ນຳທີ່ພຣະເຈົ້າຊົງເລືອກ, ຫລັງຈາກເພິ່ນເຮັດງານໃຫຍ່ສຳເຣັດແລ້ວ ເພິ່ນກໍໄດ້ເຮັດຜິດພາດ ໂດຍບໍ່ໄດ້ເຈຕະນາ. ຄວາມຜິດພາດຂອງເພິ່ນເປັນບ້ວງແຮ້ວໃສ່ຄອບຄົວຂອງເພິ່ນ ຈຶ່ງເກີດມີຜູ້ນຳໃຫມ່ຊື່ວຊ້າຂຶ້ນມາ ຄືທ່ານອາບີມາເລັກ ເປັນຜູ້ນຳທີ່ບໍ່ເປັນປໂຍດແກ່ຊາວອິສຣາເອນ.

## ຊົງເລືອກກີເດໂອນ 6:-1-40

ທ່ານກີເດໂອນ ເປັນຜູ້ນຳຊາວອິສຣາເອນຜູ້ທີ 5 ແລະນຳຊາວອິສຣາເອນມາຈົນເຖິງ 40 ປີ ເພິ່ນໄດ້ນຳພາອິສຣາເອນໃຫ້ພົ້ນຈາກການຂົ່ມເຫງຂອງຊາວມາດີອານເປັນເວລາ 7 ປີ (6:1) ເມື່ອພວກອິສຣາເອນອ້ອນວອນຂໍຄວາມຊ່ວຍເຫລືອຈາກອົງພຣະຜູ້ເປັນເຈົ້າແລ້ວພຣະອົງກໍສົ່ງເທວະດາຂອງພຣະອົງໄປບອກໃຫ້ກີເດໂອນ ແຕ່ກີເດໂອນບອກກັບເທວະດາວ່າເພິ່ນເອງຢູ່ໃນຄອບຄົວທີ່ອ່ອນແອ ແລະແຖມຍັງບໍ່ເປັນຄົນສຳຄັນໃນຄອບຄົວ (6: 15) ແຕ່ພຣະເຈົ້າຊົງເຮັດໃຫ້ເພິ່ນເປັນຄອບຄົວທີ່ເຂັ້ມແຂງ, ເປັນຄົນສຳຄັນຂອງພຣະອົງເພາະວ່າພຣະເຈົ້າຊົງສະຖິດຢູ່ກັບເພິ່ນ (6: 16). ເມື່ອກີເດໂອນຮູ້ວ່າພຣະເຈົ້າຊົງຍົກເພິ່ນຂຶ້ນດັ່ງນັ້ນເພິ່ນຈຶ່ງຟ້າວເອົາເຄື່ອງຖວາຍມາຖວາຍແກ່ພຣະເຈົ້າແລະເພິ່ນກໍທຳການຖວາຍ(6:18-24)

ກີເດໂອນຟັງຄຳສັ່ງຂອງອົງພຣະຜູ້ເປັນເຈົ້າທຳລາຍແທ່ນບູຊາພຣະບາອານຊຶ່ງເປັນແທ່ນບູຊາຂອງພໍ່ຂອງເພິ່ນ ແລະສ້າງແທ່ນບູຊາໃຫ້ແກ່ພຣະຜູ້ເປັນເຈົ້າ ເພິ່ນເຮັດສິ່ງນີ້ໃນເວລາກາງຄືນເພາະຢ້ານຄົນໃນຄອບຄົວແລະຄົນອື່ນເຫັນແລ້ວຈະຫ້າມປາມເພິ່ນ. ຕື່ນເຊົ້າມາປະຊາຊົນເຫັນແທ່ນບູຊາພຣະບາອານຖືກທຳລາຍ ແລະແທ່ນບູຊາຂອງອົງພຣະຜູ້ເປັນເຈົ້າຖືກສ້າງຂຶ້ນໃໝ່ເຂົາຈຶ່ງທຳການສືບສວນແລະຮູ້ວ່າແມ່ນກີເດໂອນເປັນຜູ້ເຮັດຢ່າງນັ້ນເຂົາຈຶ່ງຈະຂ້າເພິ່ນເສັຽ ( 6:

24-30). ປະຊາຊົນພາກັນມາຟ້ອງໂຢອາຜູ້ເປັນພໍ່ຂອງກິເດໂອນເຖິງການກະທຳຂອງກິເດໂອນ ແຕ່ພໍ່ຂອງເພິ່ນກໍປົກປ້ອງລູກ ຊາຍຂອງເພິ່ນໂດຍກ່າວວ່າ "ພວກເຈົ້າມາຕໍ່ວ່າຂ້ອຍແທນພຣະບາອານບໍ່? ພ ວກເຈົ້າປ້ອງກັນພຣະບາອານບໍ່? ຖ້າວ່າຜູ້ໃດຕໍ່ວ່າແທນມັນ ຜູ້ນັ້ນຈະຖືກຂ້າຖິ້ມກ່ອນຮຸ່ງເຊົ້າ ຄັນວ່າພຣະບາອານເປັນພຣະເຈົ້າ ຈົ່ງໃຫ້ມັນປ້ອງກັນຕົວມັນເອງ ເພາະເປັນແທ່ນບູຊາຂອງມັນຖືກທຳລາຍລົງ" (6:31-32)

ພຣະຜູ້ເປັນເຈົ້າຊົງບອກໃຫ້ຄັດເລືອກທະຫານໄປສູ້ຮົບກັບພວກມາດີອານ ພຣະອົງຊົງບອກບໍ່ໃຫ້ເອົາທະຫານໄປຫຼາຍດ້ວຍວ່າເມື່ອເຂົາຊະນະເຂົາຈະອ້າງວ່າເຂົາມີກຳລັງຫລາຍໂດຍບໍ່ຄິດເຖິງການຊ່ວຍເຫລືອຂອງພຣະເຈົ້າ (7: 2) ດັ່ງນັ້ນພຣະຜູ້ເປັນເຈົ້າຈຶ່ງມີວິທີການ ເລືອກເອົາທະຫານຈາກສາມສິບພັນຄົນໃຫ້ເລືອກເອົາແຕ່ສາມຮ້ອຍຄົນ (7: 4-6) ນອກນັ້ນໃຫ້ຄືນໄປບ້ານຫາຄອບຄົວ. ກິເດໂອນໄດ້ນຳກອງທະຫານສາມຮ້ອຍຄົນບຸກໂຈມຕີພວກມາດີອານຈົນເຂົາປົບໜີໄປ, ໄຊຊະນະຄັ້ງນີ້ແມ່ນຍ້ອນການຊົງນຳຂອງອົງພຣະຜູ້ເປັນເຈົ້າເປັນທີ່ໄດ້ຊົງປ່ຽນກິເດໂອນ ຈາກຄົນອ່ອນແອໃຫ້ມາເປັນຄົນເຂັ້ມແຂງ, ຈາກບຸກຄົນທີ່ບໍ່ມີຄວາມສຳຄັນໃນຄອບຄົວໃຫ້ເປັນຄົນສຳຄັນຂອງຊາດ. ການທີ່ຈະເປັນຄົນແຂງແຮງຫລືອ່ອນແອນັ້ນບໍ່ສຳຄັນຕໍ່ພຣະເຈົ້າ ດ້ວຍວ່າຫາກພຣະເຈົ້າຊົງເລືອກແລ້ວ ຄົນອ່ອນແອກໍຈະກາຍເປັນຄົນເຂັ້ມແຂງ. ເຣື່ອງນີ້ສອນເຮົາວ່າເຖິງແມ່ນເຮົາເປັນຄົນຢ່າງໃດກໍຕາມຫາກພຣະເຈົ້າຊົງພໍພຣະທັຍແລ້ວພຣະອົງກໍຊົງປ່ຽນແປງສິ່ງເຫລົ່ານັ້ນໄດ້. ໜ້າທີ່ອັນສຳຄັນຂອງເຮົາຄືເຮົາຈະຍອມໃຫ້ພຣະເຈົ້າໃຊ້ເຮົາຫລືບໍ່?

<u>ການຜິດພາດຂອງກິເດໂອນ 8:22-28</u>

ຫລັງຈາກໄຊຊະນະເສິກສົງຄາມແລ້ວ ພວກອິສຣາເອນພາກັນໄປຫາກິເດໂອນເວົ້າວ່າ "ຂໍທ່ານພ້ອມທັງລູກຊາຍແລະຫລານຂອງທ່ານຈົ່ງເປັນຜູ້ຄຸ້ມຄອງພວກຂ້ານ້ອຍເຖີ້ນ ເພາະວ່າທ່ານໄດ້ຊ່ວຍເຫລືອພວກຂ້ານ້ອຍໃຫ້ພົ້ນຈາກເງື້ອມມືຂອງພວກມາດີອານ" (ຂໍ້ 22). ເມື່ອເຮົາສັງເກດເບິ່ງຄັ້ງແຣກທີ່ກິເດໂອນມ້າງແທ່ນບູຊາພຣະບາອານເຮົາເຫັນວ່າປະຊາຊົນທັງຫລາຍພາກັນຟ້ອງຮ້ອງເພື່ອຈະຂ້າເພິ່ນ ແຕ່ດຽວນີ້ປະຊາຊົນເຫັນຄວາມສາມາດຂອງເພິ່ນກໍເລີຽພາກັນມາຍອມມອບຕົວແກ່ເພິ່ນໂດຍເຊີນເພິ່ນມາເປັນກະສັດຂອງຊາດອິສຣາເອນ ແຕ່ເພິ່ນກໍບໍ່ໄດ້ຍອມຮັບຄຳຂໍຮ້ອງຂອງປະຊາຊົນໂດຍກ່າວວ່າ "ຂ້ອຍແລະລູກຊາຍຂອງຂ້ອຍຈະບໍ່ເປັນຜູ້ຄຸ້ມຄອງຂອງພວກເຈົ້າ ແຕ່ວ່າແມ່ນພຣະຜູ້ເປັນເຈົ້າເປັນຜູ້ຄຸ້ມຄອງພວກເຈົ້າ" (ຂໍ້ 23). ຄຳເວົ້າຂອງກິເດໂອນເປັນໜ້ານັບຖືດ້ວຍເພິ່ນຮູ້ແລ້ວວ່າຕາມກຳລັງວັງຊາແລະຄວາມສາມາດຂອງເພິ່ນແລ້ວເພິ່ນບໍ່ສາມາດຈະນຳພາຊາວອິສຣາເອນຊະນະສົງຄາມຢ່າງນີ້. ໃນພຣະທັມຕອນນີ້ເຮົາເຫັນວ່າກິເດໂອນເປັນຜູ້ນຳທີ່ດີ ແມ່ນແຕ່ໂອກາດສ້າງຊື່ສຽງແລະກຽດຕິຍົດເພິ່ນກໍບໍ່ຮັບ ເຊິ່ງເປັນການສະແດງເຖິງຄວາມຖ່ອມຕົວຂອງເພິ່ນທີ່ຜູ້ຮັບໃຊ້ທັງຫລາຍຄວນຮຽນຈາກບົດຮຽນນີ້. ກິເດໂອນໄດ້ຖວາຍກຽດແກ່ພຣະເຈົ້າໂດຍກ່າວວ່າ ແມ່ນພຣະຜູ້ເປັນເຈົ້າເປັນຜູ້ຄຸ້ມຄອງພວກເຈົ້າ.

ແຕ່ເມື່ອປະຊາຊົນຍັງວອນຂໍຢູ່ເພິ່ນຈຶ່ງເວົ້າວ່າ "ຂໍໃຫ້ຂ້ອຍຂໍສິ່ງນຶ່ງຈາກພວກເຈົ້າຄືຈົ່ງເອົາຕຸ້ມຫູທີ່ພວກເຈົ້າຍຶດມາໄດ້ນັ້ນໃຫ້ຂ້ອຍ" (ຂໍ້ 24). ພຣະຄັມພີບອກເຮົາວ່າພວກມາດີອານໃນສມັຍໂບຮານພາກັນໃສ່ຕຸ້ມຫູຄຳ ດັ່ງນັ້ນການທີ່ຜູ້ຊາຍໃສ່ຕຸ້ມຫູໃນສມັຍນີ້ກໍບໍ່ແມ່ນສມັຍໃໝ່ ແຕ່ເປັນຄົນໃນສມັຍໂບຮານ. ເມື່ອປະຊາຊົນໄດ້ຍິນຄຳຂໍຂອງກິເດໂອນເຂົາຈຶ່ງເອົາຜ້າມາປູລົງພື້ນແລ້ວເຂົາກໍວາງຕຸ້ມຫູຄຳທີ່ຍຶດມາໄດ້ຈາກສົງຄາມນັ້ນເທື່ອລະຄົນ ແລ້ວກິເດໂອນມາຊັ່ງໄດ້ພັນເຈັດຮ້ອຍບາດ (ຂໍ້ 26) ຫລືປະມານ 25 ກິໂລ. ແລ້ວກິເດໂອນກໍເອົາຄຳເຫລົ່ານັ້ນມາສ້າງເປັນຮູບພຣະແລະຕັ້ງໄວ້ທີ່ເມືອງຂອງເພິ່ນ. ຮູບພຣະທີ່ກິເດໂອນສ້າງນັ້ນມີຊື່ວ່າອີຟອດ ແມ່ນເຄື່ອງຕາຍຂອງປະໂລຫິດຕາມແບບຢ່າງທີ່ພຣະເຈົ້າຊົງສັ່ງໃຫ້ເຮັດໃນ ອົບພະຍົບ 28:6-14. ນັກສາສນາສາດຜູ້ນຶ່ງກ່າວວ່າກິເດໂອນບໍ່ໄດ້ຕັ້ງໃຈເຮັດຮູບນັ້ນເພື່ອໃຫ້ອິສຣາເອນຂາບໄຫວ້ ແຕ່ເພິ່ນຕັ້ງໃຈວ່າເພິ່ນເຮັດຮູບນັ້ນຂຶ້ນມາກໍເພື່ອໃຫ້ປະຊາຊົນຮູ້ວ່າພຣະເຈົ້າຊົງເປັນຜູ້ຄຸ້ມຄອງເຂົາໂດຍສ້າງຮູບເຄື່ອງນຸ່ງປະໂລຫິດ ເພິ່ນໄດ້ເອົາຮູບນັ້ນຕັ້ງໄວ້ທີ່ເມືອງຂອງເພິ່ນເພື່ອປະຊາຊົນຈະໄດ້ຈາຣຶກເຖິງພຣະຄຸນພຣະ ເຈົ້າ ແຕ່ປະຊາຊົນເຫລົ່ານັ້ນພາກັບຂາບໄຫວ້ຮູບເຄື່ອງປະໂລຫິດນັ້ນ, ສາສນາສາດກ່າວຕໍ່ໄປ ວ່າສິ່ງທີ່ກິເດໂອນ

ເຮັດຜິດຄືເພິ່ນບໍ່ໄດ້ອອກຄຳສັ່ງຫ້າມບໍ່ໃຫ້ເຂົາຂາບໄຫວ້ຮູບນັ້ນ. ເຣື່ອງນີ້ສອນໃຫ້ເຮົາຮູ້ວ່າ ເຮົາຄວນຣະມັດຣະວັງໃນການຮັບໃຊ້ຂອງເຮົາ, ຄວນສຶກສາພຣະທັມຂອງພຣະເຈົ້າໃຫ້ເຂົ້າໃຈຕາມຫລັກວິຊາການສາສນາສາດ ບໍ່ແມ່ນຕາມຄວາມເຂົ້າໃຈຕົນເອງ. ກີເດໂອນເຮັດຕາມຄວາມເຂົ້າໃຈຂອງເພິ່ນຄວາມຜິດພາດຈຶ່ງຕາມມາ "ການກະທຳເຊັ່ນນີ້ເປັນບ້ວງແຮ້ວສຳລັບກີເດໂອນແລະຄອບຄົວ" (8:27).

<u>ອາບີມາເລັກຜູ້ນຳບໍ່ດີ 8:29--9:15</u>

ຕໍ່ມາບໍ່ນານເທົ່າໃດກີເດໂອນກໍຕາຍດ້ວຍໂຣກຊະຣາ ແລ້ວພວກອິສຣາເອນພາກັນກັບໄປຂາບໄຫວ້ພຣະບາອານດ້ວຍເຂົາບໍ່ຮູ້ວ່າພຣະຜູ້ເປັນເຈົ້າເປັນຜູ້ຊ່ອຍເຂົາໃຫ້ພົ້ນຈາກເງື້ອມມືຂອງພວກມາດີອານ, ເວລາກີເດໂອນຍັງມີຊີວິດຢູ່ເຂົາກໍຂາບໄຫວ້ຮູບເຄື່ອງນຸ່ງຂອງປະໂລຫິດທີ່ກີເດໂອນສ້າງດ້ວຍທອງຄຳເຈັດຮ້ອຍບາດນັ້ນ. ອິສຣາເອນຮູ້ພຽງວ່າກີເດໂອນເປັນຜູ້ຊ່ອຍເຂົາ ເມື່ອເພິ່ນຕາຍເຂົາກໍຕ້ອງການຜູ້ຊ່ອຍອີກຈຶ່ງເປັນເຫດໃຫ້ເຂົາກັບໄປຂາບໄຫວ້ພຣະບາອານ. ເຣື່ອງນີ້ຂ້າພະເຈົ້າຄິດເຫັນຫລາຍພັນຄົນທີ່ໄດ້ເຊື່ອພຣະເຢຊູໃນຍາມຄັບຂັນ ແຕ່ພໍພົ້ນຈາກພາວະຄັບຂັນແລ້ວກໍຫລົງລືມພຣະອົງ, ຂ້າພະເຈົ້າຍັງຂອບພຣະຄຸນພຣະເຈົ້າເພື່ອທ່ານທັງຫລາຍທີ່ຍັງຢູ່ໃນພຣະຄຸນຂອງພຣະອົງຕລອດມາເຖິງວ່າທ່ານຈະຕົກຢູ່ໃນຄວາມຂັດສົນປານໃດທ່ານກໍບໍ່ຫລົງທາງຈາກພຣະອົງ ແລະຫວັງວ່າທ່ານຈະເຮັດຢ່າງນີ້ຈົນເຖິງວັນນັ້ນ. ກີເດໂອນມີລູກຊາຍເຈັດສິບຄົນ ເພາະເພິ່ນມີເມັຽຫລາຍຄົນ ນອກນັ້ນຍັງມີລູກເມັຍນ້ອຍທີ່ເປັນສາວໃຊ້ຂອງເພິ່ນທີ່ເມືອງຊີເຄມ (8:29). ພຣະຄັມພີບໍ່ໄດ້ບອກເຮົາວ່າເປັນຫຍັງເພິ່ນຈຶ່ງມີເມັຽຫລາຍຄົນ ແລະຍັງເອົາຄົນໃຊ້ເປັນເມັຽນ້ອຍອີກ, ອີງຕາມພວກສາສນາສາດສັນນິຖານວ່າ ການມີເມັຽຫລາຍຄົນນັ້ນບໍ່ແມ່ນຫລັກພຣະຄັມພີແຕ່ຢ່າງໃດ ແຕ່ເປັນເພາະສັງຄົມຂອງພວກເຂົາເຈົ້າຕ່າງຫາກ ດັ່ງເຮົາຈະເຫັນພີ່ນ້ອງຊາວເຜົ່າມົ້ງມີເມັຽຫລາຍຄົນເພາະເປັນສັງຄົມຂອງຊາວເຜົ່າມົ້ງ.

ໃນຕອນແຮກພວກອິສຣາເອນໄດ້ມາຂໍໃຫ້ກີເດໂອນແລະລູກຊາຍຂອງເພິ່ນເປັນຜູ້ຄຸ້ມຄອງພວກເຂົາ(8:22) ຫລັງຈາກກີເດໂອນຕາຍໄປແລ້ວລູກທັງເຈັດສິບຄົນກໍບໍ່ມີຄວາມໝາຍຫຍັງຕໍ່ພວກເຂົາອີກຕໍ່ໄປ "ຫລັງຈາກກີເດໂອນເສັຽຊີວິດແລ້ວພວກອິສຣາເອນກໍບໍ່ເຊື່ອຟັງພຣະເຈົ້າອີກ ພວກເຂົາພາກັນນະມັສການພຣະບາອານ ແລະຖືເອົາພຣະບາອານເບຣິດເປັນພຣະເຈົ້າຂອງພວກເຂົາ ພວກເຂົາຫລົງລືມພຣະຜູ້ເປັນເຈົ້າຂອງພວກເຂົາຜູ້ຊຶ່ງຊ່ອຍເຂົາໃຫ້ພົ້ນຈາກສັດຕຣູທີ່ຢູ່ອ້ອມຮອບເຂົານັ້ນ ພວກເຂົາບໍ່ໄດ້ສະແດງຄວາມເມດຕາຕໍ່ຄອບຄົວກີເດໂອນ ທີ່ເຄີຍສ້າງຄຸນງາມຄວາມດີ ໄວ້ກັບພວກອິສຣາເອນ" (8:33-35).

ອາບີມາເລັກລູກຊາຍຂອງເມັຽນ້ອຍທີ່ເຄີຍເປັນສາວໃຊ້ຂອງກີເດໂອນທີ່ເມືອງຊີເຄັມ ໄດ້ແຕ່ງຕັ້ງຕົນເອງເປັນຜູ້ນຳຈຶ່ງກ່າວກັບຊາວຊີເຄມວ່າ "ພວກເຈົ້າຕ້ອງການໃຫ້ຜູ້ໃດເປັນຜູ້ປົກຄອງພວກເຈົ້າຕ້ອງການລູກຊາຍທັງເຈັດສິບຄົນຂອງເຢຣູບບາອານຫລືວ່າຄົນດຽວ". (ເຢຣູບບາອານແມ່ນອີກຊື່ນຶ່ງຂອງກີເດໂອນ) ຈຶ່ງເຂົ້າໃຈວ່າຂ້ອຍກໍເປັນເນື້ອໜັງແລະກ້ອນເລືອດຂອງພວກເຈົ້າ, ດັ່ງນັ້ນຊາວຊີເຄມຈຶ່ງຕັດສິນໃຈຮັບເອົາອາບີເມເລັກເປັນຜູ້ປົກຄອງເພາະວ່າລາວເປັນເຊື້ອສາຍຂອງເຂົາ ພວກເຂົາໄດ້ເອົາເງິນຈາກວິຫານແຫ່ງພຣະບາອານເບຣິດເຈັດສິບຫຼຽນຈ້າງພວກອັນຕະພານໄປນຳ ແລ້ວມຸ້ງໜ້າໄປເຮືອນພໍ່ຂອງລາວທີ່ເມືອງໂອຟຣາ ແລະຂ້າລູກຊາຍເຈັດສິບຄົນຂອງ ເຢຣູບບາອານ ຢູ່ເທິງກ້ອນຫີນດ້ວຍກັນ (ຂໍ້ 2-4)

ອາບີມາເລັກເປັນຜູ້ນຳຈອມປອມຊຶ່ງເພິ່ນໃຊ້ເລ້ລ່ຽມຂອງເພິ່ນບອກກັບຊາວຊີເຄມວ່າ ເພິ່ນເປັນເຊື້ອຊາດຊາວຊີເຄມແລະເປັນລູກຂອງ ເຢຣູບບານ (ກີເດໂອນ) ສ່ວນອ້າຍຂອງເພິ່ນທັງເຈັດສິບຄົນເປັນຄົນອິສຣາເອນ ດ້ວຍເຫດນີ້ຊາວ

ຊີເຄມຈຶ່ງເລືອກເອົາເພິ່ນເປັນຜູ້ປົກຄອງ ແລະມອບເງິນໃນວິຫານຂອງພຣະບາອານຈຳນວນເຈັດສິບຫຼຽນໃຫ້ແກ່ເພິ່ນ. ເມື່ອຄົນຊົ່ວຮ້າຍເປັນນາຍເພິ່ນກໍໃຊ້ເງິນທີ່ໄດ້ມານັ້ນຈ້າງນັກເລງໄປຂ້າອ້າຍຂອງເພິ່ນທັງເຈັດສິບຄົນທີ່ເມືອງໂອຟຣາດ ທ່ານໂຢທາມຜູ້ເປັນລູກຫລ້າຂອງເຢຣຸບບາອານໄດ້ໄປລີ້ຕົວຢູ່ຈຶ່ງບໍ່ຖືກຂ້າ. ພວກອ້າຍນ້ອງເຈັດສິບຄົນນີ້ໄດ້ຢູ່ເມືອງຂອງພໍ່ດ້ວຍວ່າພວກເຂົາເຈົ້າເປັນລູກຂອງຍິງອິສຣາເອນ ສ່ວນອາບີເລັກຕ້ອງໄດ້ຢູ່ເມືອງອື່ນກັບແມ່ຂອງລາວ ດ້ວຍວ່າແມ່ຂອງລາວເປັນພຽງຍິງສາວໃຊ້ເທົ່ານັ້ນ, ເຣື່ອງນີ້ເປັນເຫດໃຫ້ອາບີມາເລັກເຈັບໃຈທີ່ພໍ່ຂອງລາວໄດ້ປ່ອຍປະລະເລີຍລາວແລະແມ່ຂອງລາວທີ່ເມືອງຊີເຄມໃຫ້ພົບກັບຄວາມລຳບາກ. ດັ່ງນັ້ນລາວຈຶ່ງຂ້າອ້າຍທັງຫມົດເພື່ອເປັນການແກ້ແຄ້ນ ແລະເພື່ອບໍ່ໃຫ້ມີຜູ້ໃດຜູ້ນຶ່ງຄືນມາຕໍ່ຕ້ານລາວ ແລ້ວເຂົາກໍແຕ່ງຕັ້ງລາວເປັນກະສັດ. (ຂໍ້ 1-6).

ຍັງມີນ້ອງຊາຍຫລ້າຊື່ໂຢທາມທີ່ຍັງບໍ່ຖືກຂ້າຕາຍ ຈຶ່ງຫາແຜນການປ່າວປະກາດຄວາມຊົ່ວຮ້າຍຂອງອາບີມາເລັກເປັນສອງຕອນຄື: ຕອນທີແຣກເພິ່ນເວົ້າເປັນຄຳອຸປະມາ (ຂໍ້ 7-13) ແລະຕອນທີສອງເພິ່ນເວົ້າໂດຍກົງ (ຂໍ້ 14-22). ເຖິງປານນັ້ນຜູ້ນຳຊົ່ວຊ້າຢ່າງອາບີມາເລັກກໍປົກຄອງພວກອິສຣາເອນເປັນເວລາສາມປີ (ຂໍ້ 22).

<u>ຄຳຖາມ:</u>

1. ພຣະເຈົ້າຊົງຮຽກເອີ້ນກີເດໂອນຢ່າງໃດ?

2. ກີເດໂອນເປັນຄົນຢ່າງໃດກ່ອນໜ້າພຣະເຈົ້າເອີ້ນເພິ່ນ?

3. ຫລັງຈາກພຣະເຈົ້າເອີ້ນແລ້ວເພິ່ນເຮັດຫຍັງແດ່ໃນເວລາກາງຄືນ?

4. ຫລັງຈາກຊະນະສົງຄາມມາດີອານແລ້ວປະຊາຊົນເວົ້າຫຍັງກັບເພິ່ນ?

5. ຫຼັງຈາກເພິ່ນບໍ່ຮັບເປັນຜູ້ປົກຄອງແລ້ວເພິ່ນຂໍຫຍັງນຳອິສຣາເອນ, ແລະສິ່ງທີ່ເຂົາໃຫ້ເພິ່ນນັ້ນເພິ່ນເອົາໄປເຮັດຫຍັງ?

6. ເປັນຫຍັງສິ່ງເພິ່ນເຮັດຈຶ່ງຜິດຕໍ່ພຣະເຈົ້າ?

7. ຄວາມຜິດພາດຂອງເພິ່ນເປັນບົດຮຽນຫຍັງແກ່ເຮົາ?

8. ແມ່ນໃຜເປັນຜູ້ນຳຊົ່ວ? ເພິ່ນເຮັດຊົ່ວຢ່າງໃດ?

ສຈ. ດຣ. ທູນພັນ ວົງສຸຣິດທ໌

# ບົດຮຽນທີ 12
## ແຊມຊັນ

ຂໍ້ພຣະຄັມພີສໍາລັບບົດຮຽນນີ້: ພວກຜູ້ປົກຄອງ 13:1-7; 16:18-30
ຂໍ້ພຣະຄໍາທັງຫມົດສໍາລັບບົດຮຽນນີ້: ພວກຜູ້ປົກຄອງ 13--18
ຈຸດສໍາຄັນຂອງບົດຮຽນນີ້: ສອນເຮົາໃຫ້ກັບໃຈໃນຍາມຜິດພາດ
ຄໍາຖາມເພື່ອການສໍາຣວດ: ເຮົາຈະຮູ້ໄດ້ຢ່າງໃດວ່າເຮົາເຮັດຜິດ
ຈຸດປະສົງຂອງບົດຮຽນນີ້: ເພື່ອສຶກສາຮຽນຮູ້ວ່າຈະເຮັດແນວໃດຈຶ່ງຈະບໍ່ເຮັດເສັຽຫາຍ

ຫນ້າທີ່ສໍາຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ

- ພຣະຄັມພີເທົ່ານັ້ນເປັນຣິດອໍານາດນໍາພາທາງແຫ່ງຊີວິດໃນການເຮັດພາຣະຫນ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ພຣະເຈົ້າຊົງສ້າງມນຸດທຸກຄົນຄ້າຍຄືພຣະອົງ
- ເພື່ອເຮັດພາຣະກິດຊ່ວຍເຫລືອຜູ້ເຈັບເປັນ, ຜູ້ຕ້ອງການພຣະເຈົ້າ, ແລະຜູ້ມີຄວາມລໍາບາກອື່ນໆ
- ເພື່ອຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ຕຽມພ້ອມໃນການດີ

### ສິ່ງບໍ່ຄາດຫວັງ 13:1-24

ທຸກຄັ້ງທີ່ອິສຣາເອນເຮັດບາບຕໍ່ສູ້ພຣະເຈົ້າ ພຣະອົງກໍບໍ່ຢູ່ນໍາ ຄັ້ງນີ້ພຣະອົງໄດ້ປ່ອຍປະໃຫ້ ອິສຣາເອນໃຫ້ຕົກຢູ່ໃຕ້ອໍານາດຂອງພວກຟີລິສຕິນເປັນເວລາ 40 ປີ (ຂໍ້ 1). ຫລັງຈາກນັ້ນພຣະເຈົ້າຊົງສົງສານດ້ວຍວ່າພວກສິລທັມໄດ້ອ້ອນວອນຂໍ ພຣະອົງຈຶ່ງສົ່ງເທວະດາລົງມາບອກຂ່າວດີກັບເມັຍຂອງທ່ານມາໂນອາ ເມັຽຂອງລາວເປັນຄົນບໍ່ມີລູກ (ຍິງຫມັນ) ເທວະດາກ່າວກັບນາງວ່າ "ເຈົ້າເປັນຄົນບໍ່ມີລູກ ແຕ່ວ່າດຽວນີ້ເຈົ້າຈະຖືພາ ຈະໄດ້ລູກຊາຍ ຈົ່ງຣະວັງຢ່າດື່ມນໍ້າອະງຸ່ນຫລືເຫລົ້າ ແລະຢ່າກິນອາຫານທີ່ຫວງຫ້າມ ເພາະວ່າເຈົ້າຈະຖືພາແລະຈະໄດ້ລູກຜູ້ຊາຍ ນັບແຕ່ນີ້ລູກເຈົ້າເກີດມາລາວຈະ ເປັນຄົນນາຊີອຸທິດຕົວແດ່ພຣະເຈົ້າ ສະນັ້ນຢ່າຕັດຜົມໃຫ້ລາວຈັກເທື່ອ ລາວຈະເປັນຜູ້ເລີ້ມຊ່ອຍພວກອິສຣາເອນໃຫ້ພົ້ນຈາກເງື້ອມມືຂອງພວກຟີລິສຕິນ" (ຂໍ້ 4-5). ເທວະດາຂອງພຣະຜູ້ເປັນເຈົ້າໄດ້ບອກວິທີລ້ຽງໃຫ້ນາງຢ່າງລະອຽດ. ໃນພາສາເຮັບເຣີຊື່ງເປັນພາສາເດີມຄົນນາຊີແປວ່າ ເຮັດໃຫ້ສັກສິດ. ດ້ວຍເຫດນີ້ພຣະຄັມພີຈຶ່ງກ່າວວ່າ "ເດັກນ້ອຍນັ້ນຈະເປັນຄົນຊີນາ" (ຂໍ້ 7). ແປວ່າຄົນອຸທິດຕົນນໍາພາຄົນຂອງພຣະເຈົ້າເຮັດສິ່ງສັກສິດ. ໃນພຣະທັມຕອນນີ້ເຮົາເຫັນຣິດເດດຂອງພຣະເຈົ້າ ໂດຍໂຜດປະທານໃຫ້ຍິງຫມັນມີລູກເປັນຜູ້ຊາຍ ແລະເດັກນ້ອຍຜູ້ນີ້ຍັງຈະເປັນຜູ້ນໍາຂອງຊົນຊາດອີກ. ຍິງຫມັນຜູ້ນີ້ມີຄວາມປິ້ມປີຕິຍິນດີເປັນຢ່າງຍິ່ງດ້ວຍວ່າໃນສັງຄົມຂອງຄົນຢິວ ຫາກຜູ້ຍິງບໍ່ມີລູກກໍນັບວ່າເປັນຍິງທີ່ຂາດພຣະພອນ ແລະຄວາມຮັກຂອງຜົວທີ່ມີຕໍ່ເມັຽກໍຈະນ້ອຍລົງດ້ວຍວ່າບໍ່ມີໃຜຈະສືບຫນໍ່ແທນແນວຂອງຄອບຄົວ. ດ້ວຍຄວາມດີໃນຫລາຍນາງຈຶ່ງແລ່ນໄປບອກເຣື່ອງນີ້ໃຫ້ທ່ານມາໂນອາຜູ້ເປັນຜົວຟັງ (ຂໍ້ 6-7). ນາງບໍ່ເຄີຍຄາດຫວັງວ່າລາວຈະມີລູກດ້ວຍວ່າຕົນເອງເປັນຍິງຫມັນ.

ເມື່ອທ່ານມາໂນອາໄດ້ຍິນເຊັ່ນນັ້ນເພິ່ນຈຶ່ງອ້ອນວອນວ່າ "ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງໂຜດສົ່ງຄົນຂອງພຣະອົງກັບ

ຄືນມາຫາພວກຂ້ານ້ອຍອີກ ແລະຂໍຊົງບອກວ່າພວກຂ້ານ້ອຍວ່າຈະເຮັດຢ່າງໃດກັບເດັກທີ່ເກີດມານັ້ນ " (ຂໍ້ 8). ຄຳອ້ອນວອນຂອງທ່ານມາໂນອາສະແດງອອກເຖິງຄວາມຈິງຮັກພັກດີພ້ອມຈະປະຕິບັດຕາມພຣະເຈົ້າທຸກຢ່າງ ຄຳອ້ອນວອນດັ່ງນີ້ໄປເຖິງພຣະເຈົ້າແລະພຣະອົງກໍຊົງຕອບຄຳອ້ອນວອນຂອງເພິ່ນຄືພຣະເຈົ້າຊົງເຮັດຕາມຄຳອ້ອນວອນຂອງທ່ານ ມາໂນອາ. "ພຣະເຈົ້າກໍຊົງກະທຳຕາມຄຳທີ່ມາໂນອາຂໍຮ້ອງ ຄືທູດຂອງພຣະອົງໄດ້ກັບຄືນມາຫາຍິງນັ້ນໃນຂະນະທີ່ລາວກຳລັງນັ່ງຢູ່ໃນທົ່ງນາ ແຕ່ເວລານັ້ນມາໂນອາຜູ້ເປັນຜົວບໍ່ໄດ້ຢູ່ນຳລາວ ດັ່ງນັ້ນລາວຈຶ່ງແລ່ນໄປບອກຜົວຂອງລາວ " (ຂໍ້ 9-10). ເທວະດາໄດ້ບອກວິທີການລ້ຽງເດັກນ້ອຍຜູ້ນີ້ວ່າ "ເມັຽຂອງເຈົ້າຕ້ອງເຮັດທຸກຢ່າງຕາມທີ່ເຮົາໄດ້ບອກລາວນັ້ນຢ່າງແນ່ນອນ ລາວບໍ່ຕ້ອງກິນຫຍັງຈັກຢ່າງທີ່ໄດ້ມາຈາກຕົ້ນອະງຸ່ນ ລາວບໍ່ຕ້ອງດື່ມນ້ຳອະງຸ່ນຫລືເຫລົ້າ ແລະຢ່າໃຫ້ກິນອາຫານທວງຫ້າມ ລາວຕ້ອງເຮັດທຸກສິ່ງຕາມທີ່ເຮົາໄດ້ບອກລາວແລ້ວ " ( ຂໍ້ 13-14).

ໃຫ້ເຮົາເຂົ້າໃຈວ່າສິ່ງທີ່ເພິ່ນຫ້າມນັ້ນ ບໍ່ແມ່ນສິ່ງທີ່ເພິ່ນຫ້າມນັ້ນເປັນພິດເປັນພັຍຢ່າງໃດ ແຕ່ເປັນກົດຄຳສັ່ງໃຫ້ປະຕິບັດຕາມ ດັ່ງທີ່ກ່າວມາແລ້ວອາດາມແລະເອວາເຮັດບາບນັ້ນບໍ່ແມ່ນຍ້ອນກິນໝາກໄມ້ ແຕ່ແມ່ນຍ້ອນບໍ່ຟັງຄວາມ. ຫລັງຈາກທ່ານມາໂນອາໄດ້ຟັງຖ້ອຍຄຳຂອງເທວະດາແລ້ວ ເພິ່ນກໍທຳການຖວາຍບູຊາພຣະຜູ້ເປັນເຈົ້າເປັນການຂອບພຣະຄຸນໃນຂອງປະທານ, ໃນຂະນະທີ່ເພິ່ນທຳການເຜົາບູຊາຖວາຍຢູ່ນັ້ນແປວໄຟກຳລັງລຸກຂຶ້ນເພິ່ນກໍເຫັນເທວະດາຕົນນັ້ນຂຶ້ນໄປສວັນໃນແປວຄວັນໄຟນັ້ນ (ຂໍ້ ຂໍ້ 20-21). ຕໍ່ມາເມັຽຂອງມາໂນອາກໍເກີດລູກຊາຍ "ຕໍ່ມາຍິງຜູ້ນີ້ກໍໄດ້ ເກີດລູກຊາຍແລະໃສ່ຊື່ວ່າ ແຊມຊັນ ເດັກນ້ອຍນີ້ກໍຈະເລີນເຕີບໂຕຂຶ້ນ ແລະພຣະຜູ້ເປັນເຈົ້າກໍຊົງອວຍພອນລາວ (ຂໍ້ 24).

<u>ພຣະສັນຍາ 14:1--16:3</u>

ແຊມຊັນໄດ້ຖືກລ້ຽງຕາມຄຳບອກເລົ່າຂອງເທວະດາທຸກປະການເພື່ອຈະເປັນຄົນນາຊີ, ເມື່ອແຊມຊັນໃຫຍ່ຂຶ້ນກໍຕົກຂຸມຮັກສາວຊາວຟີລິສຕິນຊຶ່ງເປັນຊົນຊາດທີ່ບີບບັງຄັບອິສຣາເອນເປັນເວລາ 40 ປີທີ່ໄດ້ກ່າວມາແລ້ວ ດ້ວຍເຫດນີ້ຈຶ່ງເປັນການຂັດແຍ້ງກັບພຣະສັນຍາຂອງພຣະເຈົ້າ. ແຊມຊັນເປັນເດັກທີ່ພຣະຜູ້ເປັນເຈົ້າຊົງໃຫ້ເກີດມາເພື່ອປົດປ່ອຍອິສຣາເອນຈາກການຂົ່ມເຫງຂອງຟີລິສຕິນຕາມຄຳອ້ອນວອນຂອງພວກອິສຣາເອນ. ແຊມຊັນໄດ້ບອກໃຫ້ພໍ່ແລະແມ່ຂອງລາວໄປສູ່ຂໍລູກສາວຂອງຟີລິສຕິນ ແຕ່ພໍ່ແມ່ບໍ່ເຫັນດີດ້ວຍວ່າເປັນຄົນນອກສາສນາ ແລະຍັງເປັນພວກຜູ້ກົດຂີ່ຂົ່ມເຫງອິສຣາເອນອີກ ຝ່າຍພໍ່ແລະແມ່ຈຶ່ງແນະນຳໃຫ້ເອົາຜູ້ສາວໃນເຊື້ອສາຍຂອງຕົນເອງຈະດີກວ່າ ແຕ່ແຊມຊັນຍັ້ງຢືນວ່າ "ຂ້ານ້ອຍພໍໃຈນຳນາງຜູ້ດຽວເທົ່ານັ້ນ " (14: 3). ສ່ວນພໍ່ແມ່ຂອງແຊມຊັນບໍ່ຈັກວ່າຈະເຮັດແນວໃດເປັນຂອງທຳມະດາຂອງຄົນທີ່ເຊື່ອພຣະເຈົ້າ ເພາະເຮົາບໍ່ຮູ້ວ່ານີ້ແມ່ນແຜນການຂອງພຣະເຈົ້າຫລືບໍ່? (ຂໍ້ 4). ໃນສມັຍໂບຮານພໍ່ແມ່ມັກຈະຈັດຫາຄູ່ສົມຣົດໃຫ້ແກ່ລູກຍິງ, ລູກຊາຍຂອງຕົນ. ເມື່ອເວົ້າເຖິງຄຳນີ້ແລ້ວຂ້າພະເຈົ້າໄດ້ຍິນນັກເທດຜູ້ນຶ່ງກ່າວວ່າການທີ່ແຊມຊັນແຕ່ງງານກັບຍິ່ງຟີລິສຕິນຜູ້ນີ້ແມ່ນພຣະເຈົ້າຜູ້ເປັນພຣະບິດາ (ພໍ່) ເປັນຜູ້ເລືອກໃຫ້ເພື່ອໃຫ້ສຳເຣັດຕາມແຜນການງຊົງໄຖ່ໃຫ້ພົ້ນຈາກພວກຟີລິສຕິນ.

"ຕໍ່ມາ ແຊມຊັນໄດ້ລົງໄປເມືອງຕິມນາພ້ອມກັບພໍ່ແມ່ ເມື່ອພວກເຂົາໄປຮອດສວນອະງຸ່ນຂອງເມືອງນັ້ນ ມີສິງໜຸ່ມຕົວນຶ່ງຮ້ອງຄຳຣາມເຂົ້າໃສ່ແຊມຊັນ ແຕ່ພຣະວິນຍານຂອງພຣະເຈົ້າຊົງບັນດານໃຫ້ແຊມຊັນມີກຳລັງຈີກຕົວສິງນັ້ນດ້ວຍມືເປົ່າ ເໝືອນດັ່ງຈີກແບ້ຕົວນ້ອຍ ແຕ່ລາວບໍ່ໄດ້ບອກໃຫ້ພໍ່ແມ່ຮູ້ຈັກສິ່ງທີ່ລາວເຮັດນັ້ນ " (ຂໍ້ 5-6). ນັກເທດຜູ້ນັ້ນກ່າວພິສູດວ່າຫາກບໍ່ແມ່ນແຜນການພຣະເຈົ້າພຣະອົງກໍຈະບໍ່ຊົງໂຜດປະທານໃຫ້ລາວມີກຳລັງຈົນຈີກຕົວສິງດ້ວຍມືເປົ່າ,ຍິ່ງໄປກວ່ານັ້ນລາວຍັງບໍ່ບອກໃຫ້ພໍ່ແມ່ຮູ້ຊຶ່ງສແດງເຖິງຄວາມຖ່ອມຕົວຂອງລາວ. ຈາກນັ້ນບໍ່ເທົ່າໃດມື້ແຊມຊັນກໍແຕ່ງງານກັບຍິງສາວຟີລິສຕິນ, ວັນນຶ່ງລາວໄດ້ແວະໄປເບິ່ງຊາກສິງໜຸ່ມທີ່ລາວຂ້າດ້ວຍຝ່າມືເປົ່າ ລາວໄດ້ເຫັນສິ່ງແປກປະຫລາດໃນຊາກສິງຄືລາວເຫັນຮັງເຜິ້ງຢູ່ໃນຊາກສົບສິງ "ລາວປະຫລາດໃຈເມື່ອເຫັນຮັງເຜິ້ງຢູ່ໃນຊາກສິງນັ້ນ ລາວຈຶ່ງບີບເອົານ້ຳເຜິ້ງໃສ່ມືແລະກິນໄປຕາມທາງ ເມື່ອໄປຮອດເຮືອນພໍ່ແມ່ລາວໄດ້ແບ່ງນ້ຳເຜິ້ງນັ້ນໃຫ້ເພິ່ນກິນ " (ຂໍ້ 8-9).

ທີ່ງານລ້ຽງຕາມພາສາຊາວໜຸ່ມທີ່ບ້ານຂອງແຊມຊັນແລະເມັຽຂອງລາວ ມີຊາວໜຸ່ມຟີລິສຕີນສາມຄົນໄປໃນງານລ້ຽງນັ້ນ (Party) ໃນຂະນະທີ່ກຳລັງມ່ວນຊື່ນກັນຢູ່ແຊມຊັນເລີ່ມຈັດການກັບຟີລິສຕີນ ໂດຍກ່າວເປັນຄຳປິສນາທ້າທາຍວ່າ "ມີອາຫານກໍເນື່ອງມາຈາກຜູ້ກິນ, ມີຂອງຫວານກໍເນື່ອງມາຈາກຜູ້ມີແຮງ" (ຂໍ້ 14) ແປວ່າຫຍັງ? ແຊມຊັນໃຫ້ເວລາຊາຍໜຸ່ມສາມສິບຄົນຕອບຄຳທວາຍນີ້ ຫາກເຂົາຕອບໄດ້ແຊມຊັນຈະເອົາເສື້ອງາມໃຫ້ຜູ້ລະໂຕ ຫາກເຂົາຕອບບໍ່ໄດ້ກໍໃຫ້ເຂົາເອົາເສື້ອໃໝ່ຄົນລະໂຕມາໃຫ້ແຊມຊັນ. ຜ່ານໄປສາມວັນເຂົາກໍຄິດແກ້ບັນຫາບໍ່ຕົກ ພວກເຂົາຈຶ່ງວາງ ແຜນເຂົ້າທາງເມັຽຂອງແຊມຊັນ ໂດຍຂູ່ວ່າຫາກນາງບໍ່ໄດ້ຄຳຕອບຈາກແຊມຊັນຜູ້ເປັນຜົວພວກເຂົາກໍຈະທຳລາຍເຜົາເຮືອນພໍ່ຂອງນາງ ດ້ວຍເຫດນີ້ນາງຈຶ່ງເປັນທຸກໃຈ ທາງນຶ່ງກໍແມ່ນຜົວ, ອີກທາງນຶ່ງກໍແມ່ນພໍ່ ໃນທີ່ສຸດນາງກໍຕັດສິນໃຈຮ້ອງໄຫ້ຕໍ່ແຊມຊັນແລ້ວເວົ້າວ່າ "ເຈົ້າບໍ່ຮັກຂ້ອຍ ເຈົ້າມີແຕ່ຊັງຂ້ອຍເທົ່ານັ້ນ ເຈົ້າຕັ້ງຄຳທວາຍໃຫ້ໝູ່ຂອງຂ້ອຍແລະບໍ່ໄດ້ບອກຄວາມໝາຍຂອງຄຳທວາຍນັ້ນໃຫ້ຂ້ອຍ" (ຂໍ້ 16). ແຕ່ແຊມຊັນບໍ່ຍອມບອກນາງງຈຶ່ງຮ້ອງໄຫ້ຈົນເຖິງວັນຖ້ວນເຈັດ ເມື່ອແຊມຊັນອົດເຫັນເມັຽຂອງລາວເປັນທຸກບໍ່ໄດ້ຈຶ່ງໄຂຄວາມລັບຕໍ່ນາງ (ຂໍ້ 18) ແລ້ວຄວາມລັບນີ້ຈຶ່ງໄປຮອດຊາຍໜຸ່ມສາມສິບຄົນນີ້ ພວກເຂົາຈຶ່ງຕອບຄຳທວາຍໄດ້.

ຕໍ່ມາແຊມຊັນກໍໄປເມືອງອັຊກາໂລນແລ້ວໄປຂ້າຊາວໜຸ່ມສາມສິບຄົນ (ຂໍ້ 18) ແລະເມັຽຂອງລາວກໍຖືກຍົກໃຫ້ຊາຍອື່ນ. ແຊມຊັນຄິດຮອດເມັຽຫລາຍຈຶ່ງຢາກໄປຢາມເມັຽ ເມື່ອໄປເຖິງບ້ານຂອງເມັຽກໍພົບກັບພໍ່ເມັຽລາວຈຶ່ງເວົ້າກັບພໍ່ເມັຽວ່າ "ຂ້ອຍຊິໄປຫ້ອງເມັຽຂ້ອຍ ແຕ່ພໍ່ເຖົ້າບໍ່ອະນຸຍາດໃຫ້ລາວໄປ ພໍເຖົ້າເວົ້າຕໍ່ແຊມຊັນວ່າ ຂ້ອຍຄິດວ່າເຈົ້າຊັງລາວແລ້ວ ຂ້ອຍຈຶ່ງຍົກລາວໃຫ້ແກ່ໝູ່ຂອງເຈົ້າງເອົານ້ອງສາວລາວແທນສາ" (15:2). ເມື່ອໄດ້ຍິນເຊັ່ນນັ້ນ ແຊມຊັນຈຶ່ງໃຈຮ້າຍຫລາຍຈຶ່ງເວົ້າກັບພໍ່ເຖົ້າວ່າ "ໃນເທື່ອນີ້ຂ້ອຍຈະບໍ່ມີຄວາມຜິດ ຖ້າຂ້ອຍທຳຮ້າຍໃຫ້ພວກຟີລິສຕີນ ດັ່ງນັ້ນລາວຈຶ່ງໄປເອົາໝາຈອກສາມຮ້ອຍໂຕມາແລ້ວມັດຫາງຂອງມັນຜູກຕິດກັນເປັນຄູ່ແລະມັດກະບອງ ແລ້ວລາວໄດ້ໄຕ້ກະບອງແລະປ່ອຍຝູງໝາຈອກນັ້ນເຂົ້າໄປໃນນາເຂົ້າເບລຂອງພວກຟີລິສຕີນ ໄຟໄດ້ໄໝ້ບໍ່ພຽງແຕ່ເຂົ້າເບລ ທີ່ກ່ຽວແລ້ວເທົ່ານັ້ນ ແຕ່ໄດ້ໄໝ້ເຂົ້າເບລທີ່ຍັງຢູ່ໃນທົ່ງນາ ພ້ອມທັງສວນໝາກກອກແລະສວນອະງຸ່ນອີກ" (15:4-5). ພວກຟີລິສຕີນຄຽດແຊມຊັນຫລາຍຈົນໄດ້ໄປຈູດເຜົາຄອບຄົວເມັຽຂອງລາວ ແລະແຊມຊັນກໍຕັ້ງໃຈຈະແກ້ແຄ້ນໃຫ້ໄດ້.

ພວກຟີລິສຕີນຕັ້ງຄ້າຍພັກຢູ່ເມືອງເລຮີແຂວງຢູດາເພື່ອຕໍ່ສູ້ແຊມຊັນ, ແຕ່ພວກຢູດາເຂົ້າໃຈວ່າພວກຟີລິສຕີນຊຶ່ງເປັນພວກມີອຳນາດມາຕໍ່ສູ້ພວກເຂົາ ແຕ່ຟີລິສຕີນບອກເຂົາວ່າ "ພວກຂ້ອຍຈະມາຈັບແຊມຊັນໄປຂັງຄຸກ" (ຂໍ້ 10). ດ້ວຍພວກຢູດາຢ້ານອຳນາດຂອງຟີລິສຕີນທັງຢ້ານການສູ້ຮົບເປັນຜົລສະທ້ອນແກ່ບ້ານເມືອງຂອງເຂົາພວກເຂົາຈຶ່ງອາສາສມັກໄປເວົ້າກັບແຊມຊັນເພື່ອຈັບລາວສົ່ງໃຫ້ຟີລິສຕີນ. ພວກຢູດາສາມພັນຄົນເວົ້າກັບແຊມຊັນວ່າ "ເຈົ້າຮູ້ບໍ່ວ່າພວກຂ້ອຍຢູ່ໃຕ້ອຳນາດຂອງພວກຟີລິສຕີນ" (ຂໍ້ 11) ພວກເຂົາຈຶ່ງບອກແຊມຊັນວ່າ "ພວກຂ້ອຍມານີ້ເພື່ອຈັບມັດເຈົ້າເອົາເຈົ້າສົ່ງໄປໃຫ້ພວກຟີລິສຕີນ ແຊມຊັນກໍເວົ້າວ່າ ພວກເຈົ້າສາບານກັບຂ້ອຍກ່ອນວ່າ ພວກເຈົ້າຈະບໍ່ຂ້າຂ້ອຍ ພວກເຂົາໄດ້ຕອບ ວ່າພວກຂ້ອຍຂໍສາບານວ່າຈະບໍ່ຂ້າເຈົ້າ ພຽງແຕ່ຈັບມັດເຈົ້າໄປໃຫ້ພວກເຂົາເທົ່ານັ້ນ ແລ້ວເຂົາກໍມັດແຊມຊັນດ້ວຍເຊືອກໃໝ່ສອງເສັ້ນ" (ຂໍ້ 13). ເມື່ອມາເຖິງເມືອງ ເລຮີ ພວກຟີລິສຕີນກໍແລ່ນມາພ້ອມຮ້ອງສຽງດັງໃສ່ລາວແຕ່ພຣະ ວິນຍານຂອງພຣະເຈົ້າໄດ້ຊົງ ບັນດານໃຫ້ລາວມີແຮງຂື້ນ ແຊມຊັນຈຶ່ງທຸດເຊືອກທີ່ມັດແຂນແລະມືຂອງລາວນັ້ນຂາດອອກເໝືອນກັບວ່າ ໄຟໄດ້ໄໝ້ ເສັ້ນດ້າຍ ແລ້ວແຊມຊັນໄດ້ເຫັນກະດູກຄາງລໍທີ່ຍັງໃໝ່ຢູ່ ລາວຈຶ່ງຈັບເອົາ ແລະໄດ້ໃຊ້ກະດູກຄາງລໍນັ້ນຂ້າພວກຟີລິສຕີນຕາຍສາມພັນຄົນ" (ຂໍ້ 14-16).

ດ້ວຍຄວາມເສັຽໃຈແຊມຊັນຈຶ່ງໄປຫຼິ້ນກິນກັບຍິງໂສເພນີທີ່ມີຊື່ວ່ານາງເດລີລາ ແລະກໍມີຄວາມຮັກໄຄ່ກັບຍິງນັ້ນ (16:4). ພວກຟີລິສຕີນຊອກຫາເຄັດລັບຂອງແຊມຊັນກັບນາງເດລີລາດ້ວຍເງິນຈຳນວນຫລວງຫລາຍພວກເຂົາເວົ້າກັບນາງວ່າ "ແລ້ວພວກຂ້ອຍທຸກຄົນຈະເອົາເງິນໃຫ້ເຈົ້າຜູ້ລະນຶ່ງພັນຮ້ອຍຫລຽນ" (16:5). ຈາກນັ້ນນາງເດລີລາ

ຈຶ່ງເລີ້ມຕົ້ນດ້ວຍການຫລອງລວງເຖິງສາມເທື່ອຈຶ່ງໄດ້ຄວາມຈິງ, ຄັ້ງທີສາມນາງເດລີລາເວົ້າວ່າ "ເປັນຫຍັງເຈົ້າຈຶ່ງເວົ້າວ່າເຈົ້າຮັກຂ້ອຍ ໃນເມື່ອໃຈຂອງເຈົ້າບໍ່ໄດ້ຢູ່ຜູກພັນກັບຂ້ອຍ" (16:15). ນີ້ແມ່ນລູກໄມ້ດຽວກັບເມັຽແຊມຊັນທີ່ເວົ້າກັບລາວເບື້ອງຕົ້ນ (14:16) ຜົນສຸດທ້າຍແຊມຊັນກໍບອກນາງຕາມຄວາມຈິງວ່າ "ຂ້ອຍບໍ່ເຄີຽຕັດຜົມຈັກເທື່ອ ເພາະວ່າຕັ້ງແຕ່ຂ້ອຍເກີດມາຂ້ອຍໄດ້ເປັນຄົນນາຊີ ທີ່ອຸທິດຕົວແດ່ພຣະເຈົ້າ ຖ້າຕັດຜົມຂ້ອຍຈະຕ້ອງສູນເສັຍກຳລັງວັງຊາ ແລະຈະກາຍເປັນຄົນອ່ອນແອເໝືອນດັ່ງຄົນອື່ນໆ" (16:16-17). ເມື່ອຄວາມລັບຖືກເປີດເຜີຽທາງຜູ້ຍິງແຊມຊັນຈຶ່ງຖືກສັດຕຣູມາຕັດຜົມຕອນທີ່ລາວນອນຕັກຂອງຍິງໂພເພນີ (ຂໍ້ 19). ຈາກນັ້ນມາແຊມຊັນກໍຖືກເຂົາຈັບໄດ້ງ່າຍດາຍ ແລະເຂົາຍັງເຈາະຕາທັງສອງເບື້ອງຂອງແຊມຊັນອອກ ແລ້ວໃຫ້ລາວເຮັດວຽກເປັນຂ້າຮັບໃຊ້ພວກຟີລິສຕິນ (ຂໍ້ 20-22).

## ລົມຫາຍໃຈຄັ້ງສຸດທ້າຍ 16:23-30

ແຊມຊັນກາຍເປັນຄົນຕາບອດ ແລະເປັນດາວຕລົກໃຫ້ພວກຟີລິສຕິນເຢາະເຢີ້ຍ, ວັນນຶ່ງພວກຟີລິສຕິນເຮັດງານສເລີມສລອງຖວາຍບູຊພຣະດາໂກນຂອງພວກເຂົາໆຈຶ່ງເອົາແຊມຊັນມາເປັນຕົວລະຄອນ ເພື່ອຍ້ອງຍໍສັຣເສີນພຣະຂອງເຂົາທີ່ໃຫ້ເຂົາຊະນະແຊມຊັນສຕຣູຕົວສຳຄັນຂອງເຂົາ ມີຝູງຊົນຈຳນວນຫລວງຫລາຍມາໃນງານນັ້ນ. ເຂົາໄດ້ສັ່ງໃຫ້ເດັກນ້ອຍນຳແຊມຊັນອອກມາເພາະລາວຕາບອດ ແລະກໍເພື່ອສະແດງວ່າ ເມື່ອກ່ອນແຊມຊັນແຂງແຮງຂ້າຄົນດ້ວຍກະດູກຄາງງົວເຖິງສາມພັນຄົນ ດຽວນີ້ລາວບໍ່ມີຮອດເທື່ອແຮງຫລາຍໄປກວ່າເດັກນ້ອຍຜູ້ນຶ່ງຊ້ຳ. ໃນຂະນະທີ່ເດັກນ້ອຍນຳແຊມຊັນມານັ້ນແຊມຊັນໄດ້ຂໍນຳເດັກນ້ອຍຜູ້ນັ້ນວ່າ "ຈົ່ງພາຂ້ອຍໄປຢືນແປະເສົາຄ້ຳຫໍໂຮງນີ້ແດ່ ເພາະຂ້ອຍຢາກອີງເສົາ ໃນເວລາທີ່ຫໍໂຮງເຕັມໄປດ້ວຍປະຊາຊົນທັງຊາຍແລະຍິງ ພວກຜູ້ນຳຟີລິສຕິນທຸກຄົນກໍຢູ່ໃນທີ່ນັ້ນຢູ່ເທິງຫລັງຄາກໍມີປະຊາຊົນທັງຊາຍແລະຍິງປະມານສາມພັນຄົນຊຶ່ງພວກເຂົາກຳລັງຈ້ອງເບິ່ງແຊມຊັນເຮັດຕລົກຢູ່ແຊມຊັນໄດ້ອ້ອນວອນພຣະຜູ້ເປັນເຈົ້າວ່າ ຂ້າແດ່ພຣະຜູ້ເປັນເຈົ້າຂໍໂຜດຈື່ຈຳຂ້ານ້ອຍ ຂໍພຣະອົງຊົງປະທານກຳລັງວັງຊາໃຫ້ຂ້ານ້ອຍອີກແດ່ພຽງເທື່ອດຽວເທົ່ານັ້ນ" (ຂໍ້ 26-28).

ແຊມຊັນເສັຍຍ້ອນຜູ້ຍິງທັງສອງຄັ້ງຈົນກາຍເປັນຄົນຕາບອດໃນຄຸກຂັງຂອງສຕຣູ, ຄົນແຂງແຮງກາຍເປັນຄົນອ່ອນແອ, ຄົນຂຶງຂັງກາຍເປັຍດາວຕລົກແບບບໍ່ມີຊື່ສຽງແຕ່ຖືກເຢາະເຢີ້ຍ ເພາະຊີວິດທີ່ເຮັດຕາມໃຈ, ເຮົາເຫັນວ່າຄັ້ງແຮກລາວບໍ່ຟັງຄວາມພໍ່ແມ່ບໍ່ໃຫ້ແຕ່ງງານກັບສາວຟີລິສຕິນ, ແຊມຊັນເປັນຄົນນາຊີທີ່ອຸທິດຕົນໃຫ້ພຣະເຈົ້າແຕ່ບໍ່ໄດ້ຢູ່ໃນພຣະທັມພຣະເຈົ້າພໍເທົ່າໃດ ລາວໄດ້ຫລິ້ນກິນກັບຍິງໂສເພນີແລະດື່ມຂອງມຶນເມົາຢ່າງບໍ່ເໝາະສົມ, ລາວຍອມຂາຍຄວາມລັບຂອງຕົນເອງໃຫ້ແກ່ຍິງໂສເພນີ, ສ່ວນນາງເອງເອົາເງິນເປັນໃຫຍ່ກວ່າຄວາມຮັກຈຶ່ງເປີດໜົນທາງໃຫ້ສັດຕຣູຈັບຄົນຮັກຂອງຕົນເອງ. ມາເຖິງເວລານີ້ແຊມຊັນຮູ້ສຶກຕົວວ່າພຣະເຈົ້າຖອນກຳລັງໄປຈາກລາວ ດັ່ງນັ້ນຈຶ່ງອ້ອນວອນຂໍພຣະເຈົ້າອີກຄັ້ງດຽວແລ້ວລາວກໍຈະຕາຍພ້ອມກັບພວກຟີລິສຕິນພຣະເຈົ້າກໍປະທານໃຫ້ລາວ "ລາວໄດ້ທຸ້ມເທກຳລັງຂອງລາວຊຸກເສົາທັງສອງນັ້ນ ພ້ອມກັບຮ້ອງຂຶ້ນວ່າຂໍໃຫ້ຂ້ານ້ອຍຕາຍພ້ອມກັບຊາວເມືອງຟີລິສຕິນນີ້ເຖີ້ນ ລາວຊຸກເສົານັ້ນໝົດແຮງຂອງລາວ ຈົນຫໍໂຮງເຈື່ອນລົງທັບພວກຜູ້ນຳແລະຄົນອື່ນໆທຸກຄົນ ແຊມຊັນໄດ້ຂ້າຄົນໃນເວລາລາວເສັຍຊີວິດນີ້ຫລາຍກວ່າຄາວຍັງມີຊີວິດຢູ່" (ຂໍ້ 30).

ຄຳຖາມ:

1. ອິສຣາເອນຖືກຂົ່ມເຫັງຈາກພວກຟີລິສຕິນຈັກປີກ່ອນຈະມີແຊມຊັນມາຊ່ອຍ?

2. ການເກີດຂອງແຊມຊັນເປັນມາຢ່າງໃດ?

3. ມີຂໍ້ຫ້າມຫຍັງແດ່? ເປັນຫຍັງຈຶ່ງຫ້າມ?

4. ເມື່ອແຊມຊັນໃຫຍ່ຂຶ້ນມາແລ້ວຢາກໄດ້ເມັຍຢ່າງໃດ? ພໍ່ແມ່ວ່າຢ່າງໃດ?

5. ແຊມຊັນເສັຽຄວາມລັບຄັ້ງແຮກແນວໃດ? ເສັຽຄວາມລັບຄັ້ງທີສອງແນວໃດ?

6. ເມື່ອແຊມຊັນຖືກຕັດຜົມແລ້ວເປັນຫຍັງຈຶ່ງບໍ່ມີແຮງ? ແລະລາວກາຍເປັນຄົນແນວໃດ?

7. ຕອນສຸທ້າຍແຊມຊັນອ້ອນວອນແນວໃດ? ແລະສອນຫຍັງທ່ານແດ່?

ສຈ. ດຣ. ທູມພັນ ວົງສຸຣິດທ໌

# ບົດຮຽນທີ 13

## ແຕກກະຈັດກະຈາຍ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ພວກຜູ້ປົກຄອງ 17:1-6; 18:1; 19:1; 20:1-5; 21:25

**ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້:** ພວກຜູ້ປົກຄອງ 17--21

**ຈຸດສຳຄັນຂອງບົດຮຽນນີ້:** ຄວາມພິນາດເກີດກັບຄົນທີ່ມັກຕາມໃຈຕົນເອງ

**ຄຳຖາມເພື່ອການສຳຣວດ:** ການເຮັດຕາມໃຈຕົນເອງມີຜົນສະທ້ອນຢ່າງໃດ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອສຶກສາຮຽນຮູ້ວ່າເຮົາອາດຈະຢູ່ໃນຄວາມພິນາດຫາກເຮັດຕາມໃຈ

ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.

## ບົດນຳ

ເນື່ອງຈາກວ່າພຣະຄັມພີສີດຳນັ້ນບໍ່ມີບົດ 17 ເປັນຕົ້ນໄປຂ້າພະເຈົ້າຈຶ່ງຂໍເອົາເຫລັ້ມສີຂຽວຫລືສີຟ້າທີ່ເປັນສະບັບຫລ້າສຸດມາເປັນແນວນະໂຍບາຍໃນບົດຮຽນນີ້. ອີກປະການນຶ່ງເຣື່ອງຂອງມີກາໄທບ້ານນອກຜູ້ນີ້ບໍ່ແມ່ນຜູ້ດຽວກັນກັບຜູ້ປະກາດພຣະທັມມີກາ.

## ສ້າງສາສນາໃນເຮືອນ 17:1-13

ມີຊາຍບ້ານນອກຄົນນຶ່ງລັກເງິນແມ່ຂອງລາວໄປເຊື່ອງໄວ້ຕຽມຈະໄປໃຊ້ຈ່າຍທີ່ເມືອງໄກ, ຫລັງຈາກແມ່ຂອງລາວຮູ້ວ່າມີໂຈນມາລັກເງິນໄປໝົດລາວຈຶ່ງນັ່ງຈົ່ມນັ່ງປ້ອຍດ່າວ່າສາບແຊ່ງນາໆປະການ ລາວໄດ້ຈົ່ມປ່ອຍທັງເຊົ້າທັງແລງຝ່າຍລູກຊາຍຜູ້ມີຊື່ວ່າ ມີກາ ເມື່ອໄດ້ຍິນຄຳປ້ອຍດ່ານັ້ນກໍເລີຍຢ້ານຈຶ່ງສາຣະພາບຕໍ່ແມ່ວ່າ "ເວລາຄົນລັກເອົາເງິນ 1100 ຫລຽນຂອງແມ່ໄປນັ້ນ ລູກໄດ້ຍິນວ່າແມ່ສາບແຊ່ງຄົນຂີ້ລັກ ນີ້ເດ! ເງິນຈຳນວນນັ້ນລູກເອງເປັນຜູ້ເອົາໄປ" (ຂໍ້ 2). ພຣະຄັມພີບໍ່ໄດ້ບອກວ່າແມ່ຂອງລາວໄດ້ປ້ອຍວ່າແນວໃດ ແຕ່ມີກາຢ້ານຄຳປ້ອຍນັ້ນແລະແມ່ເອງເມື່ອຮູ້ວ່າບໍ່ແມ່ນໂຈນນອກບ້ານລັກເງິນລາວ ແຕ່ແມ່ນລູກຊາຍຂອງລາວເອງ ລາວຈຶ່ງຢາກຖອນຄຳປ້ອຍຂອງລາວຈຶ່ງເລີ້ມ ຕົ້ນວ່າ "ລູກເອີຍ! ຂໍພຣະເຈົ້າອວຍພອນເຈົ້າເຖີດ!" (ຂໍ້ 2). ດ້ວຍຄຳເວົ້າຄຳດຽວ ຂໍພຣະເຈົ້າອວຍພອນຍັງບໍ່ເຖິງໃຈນາງຈຶ່ງເວົ້າວ່າ "ເພື່ອໃຫ້ລູກຂອງແມ່ພົ້ນຈາກຄຳສາບແຊ່ງ ແມ່ຂໍຖວາຍເງິນຈຳນວນນີ້ຢ່າງໃຈຈິງແກ່ພຣະຜູ້ເປັນເຈົ້າ ເຈົ້າຕ້ອງເອົາເງິນນີ້ໄປໃຊ້ເຄືອບຮູບໂຄຣົບເປັນໄມ້ ບັດນີ້ແມ່ຂໍເອົາເງິນນີ້ມອບໃຫ້ເຈົ້າ" (ຂໍ້ 3). ຕາມຄວາມເຂົ້າໃຈຂອງຜູ້ອ່ານທັງຫລາຍເຂົ້າໃຈວ່າແມ່ຂອງມີກາຈະມອບເງິນທັງໝົດ 1100 ຫລຽນ ເພາະນາງເວົ້າວ່າເງິນຈຳນວນ ນີ້. ສ່ວນມີກາໄດ້ມອບເງິນທັງໝົດທີ່ລາວລັກມານັ້ນສົ່ງຄືນແມ່ ແລະຜູ້ເປັນແມ່ເອົາເງິນ 200 ຫລຽນ ໄປໃຫ້ຊ່າງຕີເງິນເພື່ອໂອບພຣະໄມ້ໃຫ້ເປັນພຣະເງິນແລ້ວມາຕັ້ງໄວ້ເຮືອນເປັນພຣະສ່ວນຕົວຂໍ້ 4). ຜູ້ຍິງຜູ້ນີ້ໝົດຈິດໝົດໃຈຂອງລາວແມ່ນເງິນລາວຖືວ່າເງິນເປັນພຣະຂອງລາວ ເມື່ອລາວໄດ້ເງິນທີ່ເສັຍໄປແລ້ວຄືນມາອີກ ລາວກໍເອົາເງິນຈຳນວນນຶ່ງໄປໂອບພຣະໄມ້ໃຫ້ເປັນພຣະເງິນ.

ຕໍ່ມາມີກາກໍຈ້າງຄົນເລວີທີ່ຜ່ານມາເປັນປະໂລຫິດສ່ວນຕົວ "ມີກາຈຶ່ງເວົ້າວ່າ ຢູ່ກັບຂ້ອຍສາ ມາເປັນທີ່ປຶກສາແລະເປັນປະໂລຫິດຂອງຂ້ອຍ ທຸກປີໃດຂ້ອຍຈະຈ່າຍເງິນໃຫ້ເຈົ້າສິບຫລຽນພ້ອມທັງເຄື່ອງນຸ່ງແລະອາຫານການກິນ" (ຂໍ້ 10). ຄົນເລວີເປັນຄົນທີ່ເຝົ້າຮັກສາຮັບໃຊ້ໃນວິຫານຂອງພຣະເຈົ້າ ດັ່ງນັ້ນມີກາຈຶ່ງເຊີນເອົາຄົນເລວີຜູ້ນີ້ເປັນຜູ້ເຝົ້າຮັກສາວິຫານສ່ວນຕົວຂອງລາວ "ຝ່າຍຊາຍໜຸ່ມເລວີກໍຕົກລົງຢູ່ກັບມີກາ ແລະເພິ່ນຖືລາວເປັນດັ່ງລູກຊາຍຄົນໜຶ່ງຂອງຕົນ" (ຂໍ້ 11). ເມື່ອຊາຍໜຸ່ມເລວີຜູ້ນີ້ຕົກລົງຄັກແນ່ແລ້ວມີກາຈຶ່ງເວົ້າກັບຕົນເອງວ່າ ຕໍ່ໄປລາວຈະຕ້ອງເປັນຄົນຮັ່ງເພາະວ່າລາວໄດ້ຄົນເລວີມາເປັນປະໂລຫິດສ່ວນຕົວຂອງລາວ "ມີກາຈຶ່ງເວົ້າວ່າ ບັດນີ້ຂ້ອຍຮູ້ວ່າພຣະຜູ້ເປັນເຈົ້າຈະໃຫ້ຂ້ອຍຮັ່ງມີເປັນດີ ເພາະຂ້ອຍໄດ້ຄົນເລວີເປັນປະໂລຫິດສຳລັບຂ້ອຍ" (ຂໍ້ 13).

## ບ່ອນນະມັສການໃຫຍ່ກວ່າ 18:1-31

"ໃນຄາວນັ້ນຊາດອິສຣາເອນຍັງບໍ່ທັນມີກະສັດເທື່ອເວລານັ້ນຄົນໃນເຜົ່າດານກຳລັງຊອກຫາເຂດແດນມາເປັນຂອງຕົນເພື່ອຕັ້ງຖິ່ນຖານຢູ່ ຍ້ອນວ່າໃນບັນດາເຜົ່າຂອງຊາດອິສຣາເອນນັ້ນພວກເຂົາຍັງບໍ່ໄດ້ຮັບດິນແດນສ່ວນໃດໆມາເປັນກຳມະສິດເລີຍ" (ຂໍ້ 1). ຄວາມຈິງແລ້ວພຣະຜູ້ເປັນເຈົ້າຊົງເປັນກະສັດຂອງພວກເຂົາເປັນຜູ້ນຳພວກເຂົາອອກຈາກເອຢິບໃນຄວາມຄິດຂອງພວກເຂົາຫລັງຈາກໂຢຊວຍສິ້ນຊີວິດແລ້ວເຂົາຄິດວ່າບໍ່ມີກະສັດນຳພາເຂົາອີກ. ໃນເວລານັ້ນເຜົ່າດານຊຶ່ງເປັນຊົນເຜົ່າໃນພວກອິສຣາເອນໄດ້ສົ່ງຊາຍສະກັນຫ້າຄົນໄປສຳຣວດເບິ່ງດິນແດນ, ພວກເຂົາຜ່ານໄປທາງພູດອຍເອຟະລາອິມບ້ານຂອງມີກາແລະໄປພັກເຊົາໃນເຮືອນນັ້ນ, ເຂົາໄດ້ຍິນສຳນຽງຄົນຢູດາເວົ້າຈຶ່ງຮູ້ໄດ້ວ່າເປັນຄົນເລວີ ເຂົາຈຶ່ງຖາມຄົນເລວີວ່າ "ເຈົ້າມາເຮັດຫຍັງຢູ່ທີ່ນີ້? ໃຜສົ່ງເຈົ້າມາ?" (ຂໍ້ 3). ຈາກນັ້ນພວກເຂົາກໍໂອ້ລົມກັນຈົນພວກຊາຍສະກັນນັກສືບຫ້າຄົນຮູ້ເຣື່ອງລາວຢ່າງລະອຽດ, ກ່ອນຈາກໄປໜຸ່ມເລວີຜູ້ເປັນປະໂລຫິດຂອງມີກາຈຶ່ງກ່າວກັບຫ້າຄົນວ່າ "ພວກເຈົ້າບໍ່ຕ້ອງເປັນຫວ່ງນຳສິ່ງໃດເລີຍ ພຣະຜູ້ເປັນເຈົ້າຈະປົກປັກຮັກສາໃນການເດີນທາງ ຄັ້ງນີ້" (ຂໍ້ 6).

ພວກນັກສືບຫ້າຄົນເດີນທາງໄປເມືອງລາລິດ ເປັນເມືອງທີ່ອຸດົມສົມບູນແລະປອດພັຍດີ ເມື່ອເຫັນດັ່ງນັ້ນຊາຍທັງຫ້າກໍກັບຄືນໄປລາຍງານທີ່ເມືອງໂສລາແລະເມືອງເອຊະຕາໂອນ ບ່ອນທີ່ພວກເຂົາຖືກສົ່ງອອກໄປ ເຂົາລາຍງານວ່າ "ໃຫ້ພວກເຮົາພາກັນໄປຕີເອົາເມືອງລາລິດ ພວກຂ້ອຍໄດ້ເຫັນເມືອງນັ້ນເປັນດິນແດນດີທີ່ສຸດ" (ຂໍ້ 9). ດັ່ງນັ້ນເຜົ່າດານຈຶ່ງຕຽມທະຫານ 600 ຄົນເພື່ອໄປຕໍ່ສູ້ຍຶດເອົາເມືອງນັ້ນ (ຂໍ້ 11). ພວກທະຫານ 600 ຄົນມາຕັ້ງຄ້າຍພັກຢູ່ໃກ້ບ້ານຂອງມີກາ ແລະພາກັນໄປຍຶດເອົາພຣະເງິນຂອງມີກາ "ດັ່ງນັ້ນພວກເຂົາຈຶ່ງຂຶ້ນໄປຍັງເຮືອນຂອງມີກາ ບ່ອນທີ່ຊາຍໜຸ່ມເລວີອາສັຍຢູ່ນັ້ນ ແລະຖາມເຖິງຄວາມສຸກທຸກຂອງລາວ ໃນຂະນະດຽວກັນນັ້ນທະຫານຊາວດານ 600 ຄົນກໍຍືນຢູ່ທີ່ປະຕູບ້ານ" (ຂໍ້ 15-16). "ເມື່ອຊາຍເຫລົ່ານັ້ນເຂົ້າໄປເອົາສິ່ງຂອງສັກສິດອອກມາຈາກເຮືອນມີກາ ປະໂລຫິດຈຶ່ງຖາມວ່າພວກເຈົ້າກຳລັງເຮັດຫຍັງນັ້ນ? ພວກເຂົາຕອບວ່າຢ່າປາກ ຈົ່ງມາກັບພວກເຮົາສາ! ໄປເປັນປະໂລຫິດ ແລະເປັນທີ່ປຶກສາຂອງພວກເຮົາ ທ່ານຈະເປັນປະໂລຫິດຂອງຊາຍຄົນດຽວ ຫລືທ່ານຈະເປັນປະໂລຫິດຂອງເຜົ່ານຶ່ງໃນຊາດອິສຣາເອນທັງໝົດອັນໃດຈະດີກວ່າກັນ? ເຣື່ອງນີ້ເຮັດໃຫ້ປະໂລຫິດມີຄວາມດີໃຈຫລາຍ ສະນັ້ນລາວຈຶ່ງນຳເອົາສິ່ງສັກສິດເຫລົ່ານັ້ນໜີຕາມຊາວດານໄປ (ຂໍ້ 19-20). ຝ່າຍມີກາໄດ້ຕິດຕາມໄປນຳເອົາພຣະຄືນ ແຕ່ເຂົາກໍຂູ່ຂ້າລາວທັງຄອບຄົວ (ຂໍ້ 25). ຫລັງຈາກນັ້ນເຜົ່າດານກໍພາກັນໄປຕີເອົາເມືອງລາອິດແລະປ່ຽນຊື່ມາເປັນເມືອງດານ (ຂໍ້ 29). ແລະຮູບໂຄຣົບທີ່ຍຶດມາໄດ້ຈາກມີກາກໍໄດ້ມາຕັ້ງໄວ້ໃນເມືອງນີ້.

## ຊົ່ວຍິ່ງກວ່າສັດ 19:1--20:-48

ຄົນເລວີຜູ້ນຶ່ງມີເມັຽເປັນໄທເມືອງເບັດເລເຮັມແຂວງຢູດາຍ ອາສັຍຢູ່ເຂດພູດອຍທາງແຖບພູເອຟະລາອິມ, ວັນນຶ່ງເມັຽ

ຂອງລາວຄຽດໃຫ້ລາວຫລາຍຈຶ່ງຍ້າຍກັບຄືນເຮືອນພໍ່ຂອງລາວທີ່ເມືອງເບັດເລເຮັມ ຝ່າຍຜູ້ເປັນຜົວກໍໄດ້ຕິດຕາມນາງໄປຍັງບ້ານພໍ່ເມັຽ, ສ່ວນພໍ່ເມັຽມີຄວາມພໍໃຈກັບລູກເຂີຽຫລາຍຈຶ່ງພະຍາຍາມຊັກຊວນໃຫ້ລູກເຂີຽຢູ່ຕໍ່ກ່ອນຈະພາເມັຽກັບບ້ານພູດອຍ ພໍ່ເມັຽໄດ້ໜ່ວງໜ່ຽວລາວໄວ້ເຖິງຫ້າຄືນທີ່ບ້ານຂອງລາວ ຕໍ່ມາໃນຄືນທີ່ຫົກລູກເຂີຽເລວີບໍ່ຍອມຢູ່ຕໍ່ໄປ. ເມື່ອເຂົາເດີນທາງມາໃກ້ຈະຮອດເມືອງຢູເບ (ເຢຣູຊາເລັມ) ເປັນເວລາທີ່ຕາເວັນຕົກດິນແລ້ວ ແຕ່ບໍ່ພັກດ້ວຍວ່າເມືອງນີ້ບໍ່ແມ່ນເມືອງຂອງອິສຣາເອນ ເຂົາຈຶ່ງເດີນທາງຕໍ່ໄປຈົນເຖິງເຂດແດນຂອງເຜົ່າເບັນຢາມິນ "ພວກເຂົາຈຶ່ງແວະ ເຂົ້າໄປຄ້າງຄືນໃນເມືອງນີ້" (ຂໍ້ 15). ເມື່ອເຂົ້າໄປໃນເມືອງທີ່ເຂົາບໍ່ຮູ້ຈັກໃຜເຂົາກໍພາກັນນັ່ງທີ່ສີ່ແຍກກາງເມືອງ ບັງເອີນມີຜູ້ເຖົ້າຜູ້ນຶ່ງກັບມາຈາກທຳນາ ເມື່ອເຫັນຄົນແປກໜ້າບໍ່ມີບ່ອນພັກອາສັຍລາວຈຶ່ງເຊີນໄປຄ້າງຄືນທີ່ບ້ານຂອງລາວ (ຂໍ້ 20-21).

ຫລັງຈາກກິນເຂົ້າກິນນ້ຳແລ້ວກໍໂອ້ລົມກັນຖາມຂ່າວຄວາມສຸກທຸກຊື່ງກັນແລະກັນຕາມພາສາຊາວບ້ານ, ຄືນນັ້ນມີເຫດຮ້າຍເກີດຂຶ້ນ "ໃນຂະນະທີ່ພວກເຂົາລົມກັນຢ່າງມວນຊື່ນຢູ່ນັ້ນ ໄດ້ມີພວກນັກເລງມາລ້ອມເຮືອນໄວ້ ແລະໃຊ້ກຳປັ້ນຕີປະຕູເຮືອນ ພວກເຂົາບອກຊາຍແກ່ຜູ້ນັ້ນວ່າ ຈົ່ງນຳເອົາຊາຍທີ່ມາຄ້າງຢູ່ໃນເຮືອນຂອງເຈົ້າອອກມາ ເພາະພວກຂ້ອຍຢາກຮ່ວມເພດກັບລາວ" (ຂໍ້ 22). ຄວາມຊົ່ວຖ້າມກາງຄວາມຊົ່ວຂອງພວກນັກເລງຊາຍບັງຄັບຮ່ວມເພດກັບເພດຊາຍ.

ເມື່ອຊາຍແກ່ຜູ້ເປັນເຈົ້າຂອງບ້ານອອກໄປຂໍຮ້ອງເຂົາບໍ່ໃຫ້ທຳຮ້າຍແຂກຂອງລາວ ແຕ່ຊາຍແກ່ຜູ້ນີ້ຍອມເສັຽສະລະລູກສາວຂອງລາວໃຫ້ພວກນັກເລງ ລາວເວົ້າກັບພວກນັກເລງວ່າ "ຫັ້ນເດ ລູກສາວຂອງຂ້ອຍທີ່ຍັງບໍຣິສຸດຢູ່ ແລະເມັຽຂອງລາວ (ເມັຽຂອງຄົນເລວີ) ຂ້ອຍຈະພາພວກເຂົາອອກມາໃຫ້ພວກເຈົ້າດຽວນີ້ແລະໃຫ້ເປັນຂອງພວກເຈົ້າພວກເຈົ້າ ຢາກເຮັດຢ່າງໃດກັບພວກເຂົາກໍຈົ່ງເຮັດຕາມໃຈເທີ້ນ ຢ່າເຮັດແບບຮ້າຍກາດຕໍ່ຊາຍຄົນນີ້ເລີຽ" (ຂໍ້ 24-25). ຊາຍແກ່ປົກປ້ອງແຂກຂອງລາວຈົນໄດ້ມອບລູກສາວໃຫ້ພວກນັກເລງຂົ່ມຂືນ. ຂ້າພະເຈົ້າຄິດເຖິງພຣະເຈົ້າຜູ້ຊົງສະລະພຣະບຸດອົງດຽວຂອງພຣະອົງເພື່ອເຮົາທັງຫລາຍຈະໄດ້ພົ້ນ. "ພວກເຂົາພາກັນກຸມແລະຂົ່ມຂືນຊຳເລົານາງຢ່າງບໍ່ຢຸດຢັ້ງຈົນເຖິງມື້ເຊົ້າ. ພໍ່ຮຸ່ງເຊົ້າຊາຍເລວີກໍຕຽມເດີນກັບບ້ານແລະເຫັນເມັຽລາວທີ່ຖືກພວກນັກເລງຂົ່ມຂືນນອນຕາຍຢູ່ປາກປະຕູເຮືອນແຕ່ລາວບໍ່ຮູ້ວ່າເມັຽຕາຍແລ້ວ, " ລາວເວົ້າວ່າ ລຸກຂຶ້ນໄປກັນເທາະ! ແຕ່ບໍ່ມີສຽງຕອບໃດໆໝົດດັ່ງນັ້ນລາວຈຶ່ງເອົາສົບຂອງນາງພາດໃສ່ຫລັງລໍ ແລະອອກເດີນທາງກັບເມືອເຮືອນ ເມື່ອມາຮອດເຮືອນແລ້ວລາວກໍໃຊ້ພ້າຕັດຮ່າງກາຍຂອງເມັຽນ້ອຍນັ້ນອອກເປັນສິບສອງຕ່ອນ ແລະຈັດສົ່ງໃຫ້ແຕ່ລະເຜົ່າໃນສິບສອງເຜົ່າຂອງອິສຣາເອນ" (ຂໍ້ 28-29). ຄົນເລວີຜູ້ນີ້ໃຈຮ້າຍໃຫ້ພວກນັກເລງຫລາຍທີ່ຂົ່ມຂືນເມັຽຂອງລາວຈົນຕາຍ, ລາວໄດ້ຕັດຮ່າງກາຍຂອງນາງເພື່ອສົ່ງໄປໃຫ້ທຸກເຜົ່າອິສຣາເອນເພື່ອພິຈາຣະນາເຣື່ອງນີ້.

ຄົນທັງສິບສອງເຜົ່າເປັນນ້ຳນຶ່ງໃຈດຽວກັນໄປໂຈມຕີ "ແລ້ວພວກອິສຣາເອນກໍໃຊ້ຜູ້ນຳຂ່າວໄປບອກທົ່ວເຂດເບັນຢາມິນວ່າ ເຫດໃດຈຶ່ງກໍ່ຄວາມຜິດຮ້າຍແຮງນີ້ ພວກທ່ານຈົ່ງມອບພວກຜູ້ຊາຍນັກເລງໃນເມືອງກິເບອາໃຫ້ພວກເຮົາປະຫານ ຊີວິດເສັຽ ເພື່ອວ່າພວກເຮົາຈະໄດ້ກຳຈັດສິ່ງຊົ່ວຊ້ານີ້ອອກໄປຈາກອິສຣາເອນ" (20:12-13). ແຕ່ພວກເບັນຢາມິນ ຈາກທົ່ວເມືອງຕ່າງໆຊ້ຳພາກັນມາທີ່ກິເບອາເພື່ອສູ້ຮົບພວກອິສຣາເອນ ດັ່ງນັ້ນສົງຄາມຈຶ່ງເກີດຂຶ້ນເປັນເວລາຫລາຍວັນ, ໃນທີ່ສຸດພວກອິສຣາເອນກໍຊະນະພວກເບັນຢາມິນ (20: 41-48).

<u>ຫາເມັຽໃຫ້ເຜົ່າເບັນຢາມິນ ບົດ 21</u>

ຫລັງຈາກຊະນະສົງຄາມແລ້ວພວກອິສຣາເອນທຸກເຜົ່າພາກັນເວົ້າແລະສັນຍາວ່າ ຈະບໍ່ໃຫ້ລູກສາວຂອງຕົນແຕ່ງງານກັບພວກເບັນຢາມິນ, ໃນເວລາປະຊຸມຕົກລົງນັ້ນພວກຢາເບັດບໍ່ໄດ້ເຂົ້າຮ່ວມຂໍ້ຕົກລົງ, ກົດມີຢູ່ວ່າເຜົ່າໃດບໍ່ເຂົ້າຮ່ວມປະຊຸມຈະຕ້ອງຂ້າຖິ້ມທັງເຜົ່າ. ກອງປະຊຸມຄັ້ງນີ້ແມ່ນກອງປະຊຸມເຣື່ອງຂອງເຜົ່າເບັນຢາມິນທີ່ເຫລືອຕາຍຈາກສົງຄາມ

ມີນ້ອຍ, ພວກອິສຣາເອນຢ້ານວ່າເຜົ່າເບັນຢາມິນຈະດັບສູນໄປ "ໃນມື້ນີ້ເຜົ່າໜຶ່ງໃນອິສຣາເອນຈະດັບສູນໄປພວກເຮົາຄວນຈະເຮັດຢ່າງໃດເພື່ອຫາເມັຽໃຫ້ພວກເບັນຢາມິນທີ່ຍັງເຫລືອນີ້ ເພາະພວກເຮົາໄດ້ສັນຍາຕໍ່ພຣະຜູ້ເປັນເຈົ້າແລ້ວວ່າພວກເຮົາຈະບໍ່ຍອມເອົາລູກສາວຂອງພວກເຮົາໃຫ້ພວກເຂົາ" (ຂໍ້ 6-7). ເມື່ອເຫດການເປັນດັ່ງນີ້ເຂົາຈຶ່ງຫາວິທີບໍ່ໃຫ້ເຜົ່າເບັນຢາມິນດັບສູນໄປ ຈຶ່ງພົບວ່າເຜົ່າຢາເບັດບໍ່ໄດ້ຮ່ວມຄຳສັນຍາບໍ່ໃຫ້ລູກສາວແຕ່ງກັບພວກເບັນຢາມິນ (ຂໍ້ 8). ດັ່ງນັ້ນກອງປະຊຸມຈຶ່ງຕົກລົງສົ່ງທະຫານ 12,000 ຄົນໄປສັງຫານຄົນໃນເມືອງຢາເບັດຖິ້ມ ແລະຈັບເອົາຍິງສາວບໍຣິສຸດ 400 ຄົນສົ່ງໃຫ້ພວກເບັນຢາມິນເພື່ອເປັນເມັຽ "ພວກອິສຣາເອນຈຶ່ງມອບຍິງສາວຈາກຢາເບັດທີ່ບໍ່ໄດ້ຖືກຂ້ານັ້ນໃຫ້ພວກເຂົາ ແຕ່ຍັງບໍ່ພຽງພໍສຳລັບທຸກຄົນ" (ຂໍ້ 14).

ພວກອິສຣາເອນເສັຽໃຈໃນຄວາມແຕກແຍກໃນບັນດາຊົນເຜົ່າຂອງພວກເຂົາຄັ້ງນີ້ (ຂໍ້ 15). ແລະພວກເຂົາຢາກໃຫ້ພວກເບັນຢາມິນຄືນສະພາບເດີມ ເຂົາຈຶ່ງປະຊຸມວາງແຜນຊອກເມັຽໃຫ້ພວກເບັນຢາມິນອີກ, ພວກເຂົາວ່າງແຜນໃຫ້ພວກເບັນຢາມິນໄປລັກເອົາຜູ້ສາວໃນງານເທສການປະຈຳປີ "ຈົ່ງໄປລີ້ຢູ່ໃນສວນອະງຸ່ນແລະຈອບເບິ່ງ ເມື່ອຍິງສາວຊາວເມືອງຊີໂລອອກມາຟ້ອນໃນເທສການ ທີ່ມີຈັດຂຶ້ນປະຈຳປີນັ້ນໃຫ້ພວກເຈົ້າອອກມາຈາກສວນ ໃຫ້ແຕ່ລະຄົນໃນພວກເຈົ້າຍຶດເອົາຜູ້ຍິງໜຶ່ງຈາກພວກຜູ້ຍິງເຫລົ່ານັ້ນໄປເປັນເມັຽ" (ຂໍ້ 20-21). ເຫດການທີ່ເກີດຂຶ້ນນີ້ພວກອິສຣາເອນຄິດວ່າເປັນຍ້ອນບໍ່ມີກະສັດເປັນຜູ້ຕັດສິນຄວາມຕາງຈຶ່ງມີການຊົ່ວຮ້າຍດັ່ງນີ້ເກີດຂຶ້ນ.

<u>ຄຳຖາມ:</u>

1. ແມ່ຂອງມີກາປ້ອຍໂຈນ ແຕ່ໂຈນນັ້ນກັບແມ່ນລູກຊາຍຂອງຕົນ ແລ້ວລາວແກ້ໄຂແນວໃດ?

2. ເມື່ອມີກາໄດ້ຄົນເລວີມາເປັນປະໂລຫິດປະຈຳເຮືອນແລ້ວລາວຄິດຢ່າງໃດ? (17:13)

3. ເປັນຫຍັງພຣະຄັມພີຈຶ່ງມັກເວົ້າວ່າ ເວລານັ້ນອິສຣາເອນຍັງບໍ່ທັນມີກະສັດເທື່ອ?

4. ຄົນໃນເຜົ່າດ່ານຊອກຫາເຂດແດນຂອງຕົນແນວໃດ? (ບົດ 18:1-10)

5. ພວກດ່ານໄດ້ຍາດເອົາຫຍັງຈາກມີກາ (18: 13-19).

6. ພວກນັກເລງເຮັດຊົ່ວຮ້າຍແນວໃດກັບຄົນເລວີທີ່ຕາມຫາເມັຽ (19:12-27).

7. ຄົນເລວີສົ່ງສານຮ້າຍໃຫ້ສິບເຜົ່າຢ່າງໃດ? (19:29-30).

8. ພວກອິສຣາເອນໄປຕໍ່ສູ້ເຜົ່າເບັນຢາມິນແນວໃດ? ( 20:8-36)

9. ຫລັງຈາກສົງຄາມແລ້ວອິສຣາເອນຊ່ອຍເບັນຢາມິນບໍ່ໃຫ້ດັບສູນຢ່າງໃດ? (ບົດ 21).

ສຈ. ດຣ. ທູນພັນ ວົງສຸຣິດທ໌